# FLEGT

## ເອກະສານສະຫຼຸບຫຍໍ້ກ່ຽວກັບ EU FLEGT (ເອກະສານປີ 2007)

ອົງການສາກົນເພື່ອການອະນຸລັກຮັກສາທຳມະຊາດ (IUCN) ໄດ້ລວບລວມ ແລະ ພິມເຜີຍແຜ່ເອກະສານສະບັບແປນີ້ຂື້ນ ໂດຍການຮ່ວມມືຈາກຫ້ອງການຕາງໜ້າສະຫະພາບເອີຣົບ (EU) ປະຈຳ ສປປ ລາວ.

ວັນທີ ... ທັນວາ 2013

IUCN ຈະບໍ່ຮັບຜິດຊອບຫາກຂໍ້ຄວາມຕ່າງໆທີ່ແປມາຈາກພາສາອັງກິດ ທີ່ມີຂໍ້ຜິດພາດບໍ່ວ່າປະການໃດ, ຄວາມຄິດເຫັນທີ່ປະກົດໃນເອກະສານສະບັບນີ້ຈະບໍ່ສະທ້ອນຄວາມຄິດເຫັນຂອງ IUCN.






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## FLEGT ແມ່ນຫຍັງ?

### 1. FLEGT ແມ່ນຫຍັງ?

FLEGT ຫຍໍ້ມາຈາກ Forest Law Enforcement, Governance and Trade FLEGT ຫຼື ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້. ແຜນປະຕິບັດງານ FLEGT ຂອງສະຫະພາບເອີຣົບ ກຳນົດໂຄງການຂອງປະຕິບັດການຕໍ່ບັນຫາໄມ້ເຖື່ອນ (ການຄ້າຂາຍໄມ້ທີ່ຜິດກົດໝາຍ) ແລະ ການຄ້າຜະລິດຕະພັນໄມ້ທີ່ກ່ຽວຂ້ອງ.

### 2. ຄວາມເປັນມາ

ການຄ້າຂາຍໄມ້ເຖື່ອນກໍ່ໃຫ້ເກີດຄວາມເສຍຫາຍຕໍ່ສະພາບແວດລ້ອມ ແລະ ຄວາມເສຍຫາຍທາງສັງຄົມຢ່າງຮ້າຍແຮງ ພ້ອມກັນກັບເຮັດໃຫ້ລັດຖະບານຕ່າງໆ ສູນເສຍລາຍໄດ້ໄປປະມານ 10,000 ລ້ານໂດລາສະຫະລັດທຸກໆປີ. ການປະຊຸມສຸດຍອດຜູ້ນຳ 8 ປະເທດມະຫາອຳນາດທາງດ້ານເສດຖະກິດ (G8) ໃນປີ 1998 ໄດ້ມີການປຶກສາຫາລືເຖິງມາດຕະການຈັດການກັບການຄ້າຂາຍໄມ້ເຖື່ອນ ແລະ ຮັບຮອງ "ແຜນປະຕິບັດງານສຳລັບປ່າໄມ້" ເພື່ອໃຊ້ເປັນທາງການ.

ຕໍ່ມາໃນເດືອນ ເມສາ ປີ 2002 ຄະນະກຳມະທິການເອີຣົບເປັນເຈົ້າພາບຈັດກອງປະຊຸມລະຫວ່າງປະເທດ ເພື່ອປຶກສາຫາລືກັນວ່າສະຫະພາບເອີຣົບຈະເຮັດຫຍັງແດ່ກັບມາດຕະການຕໍ່ສູ້ກັບການຄ້າຂາຍໄມ້ເຖື່ອນ. ໃນກອງປະຊຸມສຸດຍອດວ່າດ້ວຍການພັດທະນາແບບຍືນຍົງ ເຊິ່ງຈັດຂຶ້ນທີ່ນະຄອນ ໂຈຮານເນດສະເບີກໃນປີດຽວກັນ. ຄະນະກຳມະທິການເອີຣົບຕັ້ງຄວາມມຸ້ງໝັ້ນຢ່າງເຂັ້ມແຂງໃນຄວາມພະຍາຍາມ ເພື່ອຈະຕໍ່ສູ້ກັບການຄ້າຂາຍໄມ້ເຖື່ອນ ແລະ ການຄ້າໄມ້ທີ່ຕັດມາແບບຜິດກົດໝາຍ. ສະຫະພາບເອີຣົບໄດ້ອອກຂໍ້ສະເໜີເບື້ອງຕົ້ນສຳລັບແຜນປະຕິບັດງານ FLEGT ໃນເດືອນພຶດສະພາ ປີ 2003.

ຈາກນັ້ນ, ໄດ້ມີການພັດທະນາການລິເລີ່ມຕ່າງໆຂຶ້ນມາ ທັງຈາກການສະແດງຄວາມມຸ້ງໝັ້ນໃນລະດັບຊາດ ແລະ ສາກົນຂະໜານກັນໄປ ໂດຍສະເພາະຢ່າງຫຍິ່ງມີການຕັ້ງຂະບວນການ FLEG (ການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການຄຸ້ມຄອງ) ລະກັບພູມມິພາກຂຶ້ນມາສາມຂະບວນການຄື: ໃນອາຊີຕາເວັນອອກສ່ຽງໃຕ້, ອາຟຣິກາ (AFLEG) ແລະ ເອີຣົບ ກັບ ອາຊີເໜືອ (ENA FLEGT). ຂະບວນການເຫຼົ່ານີ້ມີການປະສານງານໂດຍທະນາຄານໂລກ ສົ່ງໃຫ້ເກີດການສະແດງຄວາມມຸ້ງໝັ້ນໃນລະດັບລັດຖະມົນຕີ ໃນການຫາວິທີ ແລະ ດຳເນີນງານແຜນປະຕິບັດງານ ເພື່ອຕໍ່ສູ້ກັບການຄ້າໄມ້ເຖື່ອນໃນແຕ່ລະພູມມິພາກ.

### 3. ແຜນປະຕິບັດງານ FLEGT ຂອງສະຫະພາບເອີຣົບ

ແຜນປະຕິບັດງານນີ້ໄດ້ກຳນົດມາດຕະການຕ່າງໆ ທີ່ມຸ່ງໝາຍຕໍ່ສູ້ກັບບັນຫາການ ຄ້າຂາຍໄມ້ເຖື່ອນ. ມາດຕະການເຫຼົ່ານີ້ເນັ້ນໄປຍັງບັນຫາທີ່ກວ້າງອອກໃນ 7 ບັນຫາຄື:

1. ການໃຫ້ຄວາມຊ່ວຍເຫຼືອປະເທດທີ່ຜະລິດໄມ້.

[1] ຂໍ້ສະເໜີ FLEGT ສຳລັບແຜນປະຕິບັດງານຂອງ EU ວັນທີ 21/5/2003 ຄະນະກຳມະທິການຂອງສະພາ ແລະ ລັດຖະສະພາເອີຣົບ.

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

2. ກິດຈະກຳສົ່ງເສີມການຄ້າທີ່ຖືກກົດໝາຍ.
3. ການສົ່ງເສີມນະໂຍບາຍຈັດຊື້ຂອງລັດຖະບານ.
4. ການສະໜັບສະໜູນໃນການລິເລີ່ມຂອງພາກເອກະຊົນ.
5. ການໃຫ້ຄວາມໝັ້ນໃຈທາງດ້ານການເງິນ ແລະ ການລົງທຶນ.
6. ການໃຊ້ເຄື່ອງມືທາງດ້ານກົດໝາຍທີ່ມີຢູ່ ຫຼື ການຮັບເອົາກົດໝາຍໃໝ່ມາສະໜັບສະໜູນແຜນປະຕິບັດງານ.
7. ການຈັດການບັນຫາໄມ້ທີ່ມີການນຳໄປໃຊ້ສະໜັບສະໜູນທາງການເງິນໃນກໍລະນີຄວາມຂັດແຍ່ງທີ່ມີການໃຊ້ອາວຸດ.

#### 3.1 ການໃຫ້ຄວາມຊ່ວຍເຫຼືອແກ່ປະເທດຜູ້ຜະລິດໄມ້

ແຜນປະຕິບັດງານນີ້ມີຄວາມມຸ່ງໝາຍເພື່ອຈະໃຫ້ການສະໜັບສະໜູນທາງການເງິນ, ເຕັກນິກ ແລະ ຄຳແນະນຳຕໍ່ປະເທດທີ່ຜະລິດໄມ້ ເພື່ອໃຫ້ບັນລຸວັດຖຸປະສົງດັ່ງຕໍ່ໄປນີ້:

- ມີໂຄງສ້າງການຈັດການຄວບຄຸມທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ແລະ ການພັດທະນາລະບົບການກວດສອບທີ່ໄວ້ໃຈໄດ້ໃນສະຖານທີ່ທີ່ການບັງຄັບໃຊ້ກົດໝາຍປ່າໄມ້ຍັງບໍ່ທັນເປັນລະບົບ.
- ມີການປະຕິຮູບນະໂຍບາຍທີ່ເນັ້ນໄປທີ່ກົດໝາຍ ແລະ ລະບຽບຂໍ້ບັງຄັບທີ່ເໝາະສົມກັບປະເທດນັ້ນ ແລະ ຜູ້ມີສ່ວນຮ່ວມໄດ້ເສຍທັງໝົດສາມາດມີສ່ວນຮ່ວມໃນການສົນທະນາໃນຮູບແບບຂອງນະໂຍບາຍ.
- ມີຄວາມໂປ່ງໃສ ແລະ ການແລກປ່ຽນຂໍ້ມູນລະຫວ່າງປະເທດທີ່ຜະລິດ ແລະ ປະເທດທີ່ຊົມໃຊ້ໄມ້ທີ່ໄດ້ຮັບການປັບປຸງໃຫ້ດີຂຶ້ນ ລວມທັງສະໜັບສະໜູນການຕິດຕາມຂອງອົງການອິດສະຫຼະ.
- ມີການເສີມສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມໃນປະເທດຜູ້ຜະລິດລວມທັງການສະໜັບສະໜູນກົນໄກ ຫຼື ສະຖາບັນກົດໝາຍເພື່ອຄວບຄຸມດູແລໃຫ້ເກີດຂະບວນການຈັດການແບບໃໝ່.
- ມີການສະໜັບສະໜູນ ສຳລັບການພັດທະນາການຈັດການປ່າໄມ້ ໂດຍຊຸມຊົນ ແລະ ການສ້າງຄວາມເຂັ້ມແຂງໃຫ້ປະຊາຊົນໃນທ້ອງຖິ່ນມາຊ່ວຍປ້ອງກັນການຄ້າຂາຍໄມ້ເຖື່ອນ.




## 3.2 ການສົ່ງເສີມການຄ້າໄມ້ທີ່ຖືກກົດໝາຍ

ເນື້ອຫາຂອງແຜນວຽກດັ່ງກ່າວແບ່ງອອກເປັນ 2 ສ່ວນຄື: ສ່ວນທີ 1 ມີຈຸດປະສົງເພື່ອເຮັດວຽກກັບຄູ່ຄ້າຂອງສະພາເອີຣົບທີ່ເປັນຜູ້ຜະລິດໄມ້ເປັນຫຼັກ ໃນຂະນະທີ່ສ່ວນທີ 2 ເນັ້ນໃສ່ບົດບາດຂອງປະເທດທີ່ນຳເຂົ້າໄມ້ລາຍໃຫຍ່ອື່ນໆ ໃນການຄ້າສາກົນ.

**1. ການພັດທະນາຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ:**
ແຜນປະຕິບັດງານສະເໜີໃຫ້ມີ ຂໍ້ຕົກລົງທະວິພາຄີດ້ວຍຄວາມສະໝັກໃຈລະຫວ່າງປະເທດຜູ້ຜະລິດ (ປະເທດຫຸ້ນສ່ວນ FLEGT) ກັບສະພາເອີຣົບ ຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ (Voluntary Partnership Agreement: VPA) ເຫຼົ່ານີ້ຈັດແຈງຄວາມຜູກພັນ ແລະ ປະຕິບັດການຂອງທັງສອງຝ່າຍທີ່ຈະຈັດການການຄ້າໄມ້ເຖື່ອນ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 6) ຜົນທີ່ຕັ້ງໃຈຈະໃຫ້ເກີດຂື້ນຈາກຂໍ້ຕົກລົງການ ເປັນຄູ່ຮ່ວມສັນຍາແບບສະໝັກໃຈເຫຼົ່ານີ້ຄື:

- ການຈັດການຄວບຄຸມປ່າໄດ້ຮັບການປັບປຸງໃຫ້ດີຂື້ນ.
- ໄມ້ທີ່ມາຈາກປະເທດຄູ່ຮ່ວມສັນຍາຈະເຂົ້າເຖິງຕະຫຼາດພາຍໃນສະຫະພາບເອີຣົບໄດ້ດີຂື້ນ.
- ລັດຖະບານປະເທດຄູ່ຮ່ວມສັນຍາເກັບລາຍຮັບໄດ້ເພີ້ມຂື້ນ.
- ລັດຖະບານປະເທດຄູ່ຮ່ວມສັນຍາເຂົ້າເຖິງການສະໜັບສະໜູນ ແລະ ການພັດທະນາທີ່ສູງຂື້ນ.
- ມີການໃຊ້ເຄື່ອງມືໃນການບັງຄັບໃຊ້ກົດໝາຍຢ່າງມີປະສິດທິພາບສູງຂື້ນໃນປະເທດຄູ່ຮ່ວມສັນຍາ.
- ຖານສຳລັບການຈັດການປ່າໄມ້ແບບຍືນຍົງໄດ້ຮັບການປັບປຸງໃຫ້ດີຂື້ນ.

VPAs ສະເໜີແນວທາງທີ່ສາມາດຈຳແນກໄມ້ທີ່ຜະລິດຂື້ນຢ່າງຖືກຕ້ອງຕາມກົດໝາຍ ແລະ ສົ່ງອອກໄປສະຫະພາບເອີຣົບໄດ້ໂດຍໃຊ້ໃບອະນຸຍາດທີ່ປະເທດຄູ່ຮ່ວມສັນຍາອອກໃຫ້. ແນວທາງນີ້ຈະມີລະບົບຮັບປະກັນຄວາມຖືກຕ້ອງດ້ານກົດໝາຍຂອງໄມ້ມາຮອງຮັບ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 3) ໃບອະນຸຍາດ FLEGT ທີ່ຄວບຄຸມການສົ່ງອອກໄມ້ຈະເຮັດໃຫ້ໜ່ວຍງານພາສີອາກອນສະຫະພາບເອີຣົບສາມາດໃຈ້ແຍກໄມ້ ທີ່ຜ່ານການກວດສອບແລ້ວວ່າເປັນໄມ້ທີ່ຖືກຕ້ອງຕາມກົດໝາຍຈາກປະເທດຄູ່ຮ່ວມສັນຍາ ແລະ ຍິນຍອມໃຫ້ເຂົ້າໄປໃນສະຫະພາບເອີຣົບໄດ້. ໃນຄະນະທີ່ກີດກັນໄມ້ທີ່ບໍ່ມີໃບອະນຸຍາດຈາກປະເທດເຫຼົ່ານີ້ອອກໄປ. ລະບົບຮັບປະກັນດັ່ງກ່າວຈະຕອບບັນຫາໃນເລື່ອງການຄວບຄຸມການຜະລິດໄມ້, ການແປຮູບ, ການພິສູດກວດສອບພາຍໃນ, ການອອກໃບອະນຸຍາດ ແລະ ການຕິດຕາມຂອງໜ່ວຍງານກວດກາອິດສະຫຼະ.

**2. ກອບການຮ່ວມມືລະຫວ່າງປະເທດພະຫຸພາຄີ:**
ສະພາເອີຣົບເປັນຜູ້ມີບົດບາດສຳຄັນ ແຕ່ບໍ່ແມ່ນບົດບາດທີ່ຄອບງຳໃນຕະຫຼາດໄມ້ໂລກ. ດັ່ງນັ້ນ, ຈຶ່ງເປັນເລື່ອງສຳຄັນທີ່ສະພາເອີຣົບສາມາດເສີມສ້າງ VPAs ໃຫ້ເຂັ້ມແຂງ ແລະ ສົ່ງເສີມຄວາມຮ່ວມມືໃນການຕໍ່ສູ້ກັບການຄ້າໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວຂ້ອງໃນປະເທດຕ່າງໆ ທີ່ຕະຫຼາດສະຫະພາບເອີຣົບມີອິດທິພົນໜ້ອຍກວ່າ ໂດຍຜ່ານການປຶກສາຫາລືກັບຜູ້ນຳເຂົ້າໄມ້ຕົ້ນຕໍອື່ນໆເຊັ່ນ: ຈີນ, ຍີ່ປຸ່ນ ແລະ ສະຫະລັດອາເມລິກາ.

[2] ຂໍ້ມູນເພີ້ມເຕີມກ່ຽວກັບນະໂຍບາຍການຈັດຫາສາທາລະນະສາມາດເຂົ້າເບິ່ງໄດ້ທີ່ www.skovogmatur.dk/Udgivelser/Tidligere/2003/Tropical_timber.htm; ອັງກິດ www.cpet.org.uk; www.vrom.nl

## 3.3 ການສົ່ງເສີມນະໂຍບາຍການຈັດຊື້ຂອງລັດຖະບານ

ແຜນປະຕິບັດງານກະຕຸ້ນໃຫ້ລັດຖະສະມາຊິກສະພາບເອີຣົບໃຫ້ດຳເນີນນະໂຍບາຍທີ່ສະໜັບສະໜູນໄມ້ຈາກການຜະລິດແບບຍືນຍົງ ແລະ ຜ່ານການກວດສອບຢັ້ງຢືນແລ້ວວ່າຖືກກົດໝາຍໃນສັນຍາການຈັດຊື້ຈັດຈ້າງ. ນະໂຍບາຍເຊັ່ນນີ້ກຳນົດໃຫ້ຜູ້ສົ່ງອອກໄມ້ສະແດງຫຼັກຖານໃຫ້ພຽງພໍເຖິງຄວາມຖືກຕ້ອງຕາມກົດໝາຍ ແລະ/ຫຼື ຄວາມຍືນຍົງຂອງແຫຼ່ງທີ່ມາຂອງໄມ້ຕ່າງໆຈົນເຖິງຄະນະນີ້ປະເທດ ແບນຊິກ, ຝະລັ່ງ, ເຢຍລະມັນ, ສະຫະລັດອາເມລິກາ ແລະ ຮອນລັງໄດ້ເລີ່ມໃຊ້ໂຄງການຈັດຊື້ດັ່ງກ່າວແລ້ວ.

## 3.4 ການສະໜັບສະໜູນຕໍ່ການລິເລີ້ມຂອງພາກເອກະຊົນ

ແຜນປະຕິບັດງານກະຕຸ້ນການມີສ່ວນຮ່ວມຂອງພາກເອກະຊົນ ລວມທັງການສະໜັບສະໜູນໃຫ້ສ້າງສັກກະຍະພາບ ໃຫ້ພາກເອກະຊົນໃນປະເທດຜູ້ຜະລິດ. ຕົວຢ່າງ ການສະໜັບສະໜູນອັນມຸ່ງໄປທີ່ການມີມາດຕະຖານຂອງການຈັດການປ່າໄມ້ທີ່ສູງຂື້ນ ແລະ ການປະຕິບັດຕາມກົດໝາຍ, ການຈັດການຕ່ອງໂສ້ການສະໜອງໄມ້ທີ່ໄດ້ຮັບການປັບປຸງໃຫ້ດີຂື້ນ ແລະ ການຮັບເອົາມາດຕະການຄວາມຮັບຜິດຊອບຕໍ່ສັງຄົມຂອງບໍລິສັດເອກະຊົນມາໃຊ້ເປັນຕົ້ນ. ຕົວຢ່າງ ຂອງການສະໜັບສະໜູນເຊັ່ນການໃຫ້ທຶນຊ່ວຍເຫຼືອລ້າ ຂອງຄະນະກຳມະທິການເອີຣົບ ແລະ ສະມາຊິກ ທີ່ໃຫ້ການສະໜັບສະໜູນເຄືອຄ່າຍການຄ້າໄມ້ໂລກ (Global Forest & Trade Network) ແລະ ແຜນປະຕິບັດງານໄມ້ເຂດຮ້ອນ (Tropical Timber Action Plan).

## 3.5 ການຄຸ້ມຄອງການລົງທຶນ

ມີກໍລະນີທີ່ການລົງທຶນໃນຂະແໜງການປ່າໄມ້ ໄດ້ກະຕຸ້ນໃຫ້ມີການຄ້າໄມ້ເຖື່ອນ ຕົວຢ່າງເຊັ່ນ: ຂີດຄວາມສາມາດໃນການແປຮູບທີ່ມີສູງກວ່າຊັບພະຍາກອນທີ່ມີຢູ່. ແຜນປະຕິບັດງານນີ້ມີຈຸດປະສົງໃຫ້ທະນາຄານ ແລະ ສະຖາບັນການເງິນໃຫ້ການສະໜັບສະໜູນ ທີ່ຖືກກົດໝາຍໃນໄລຍະຍາວ ໂດຍນຳເອົາປັດໃຈທາງດ້ານສະພາບແວດລ້ອມ ແລະ ທາງສັງຄົມມາພິຈາລະນາປະກອບເຂົ້າ ເພື່ອປະຕິບັດການປະເມີນຕາມທີ່ຈຳເປັນທີ່ຕ້ອງເຮັດໃຫ້ການລົງທຶນ.

## 3.6 ການນຳໃຊ້ກົດໝາຍທີ່ມີຢູ່ ຫຼື ກົດໝາຍໃໝ່

ສະພາເອີຣົບກຳລັງສຶກສາເບິ່ງວ່າກົດໝາຍຂອງປະຊາຄົມ ຫຼື ຂອງລັດຖະບານທີ່ເປັນສະມາຊິກທີ່ມີຢູ່ ສະບັບໃດຈະສາມາດນຳມາໃຊ້ຕໍ່ສູ້ກັບການກະທຳຜິດກົດໝາຍໃນຂະແໜງການປ່າໄມ້ ເຊິ່ງລວມເຖິງ:

- ການກວດສອບກົດໝາຍການຟອກເງິນອາດນຳມາປະຍຸກໃຊ້ກັບອາຊະຍາກອນປ່າໄມ້ໄດ້ແນວໃດແດ່.
- ການວິໃຈໃນເລື່ອງການດຳເນີນການຕາມອະນຸສັນຍາ ວ່າດ້ວຍ ການຄ້າລະຫວ່າງປະເທດ ເຊິ່ງລະບຸຊະນິດສັດປ່າ ແລະ ພືດທີ່ໃກ້ຈະສູນພັນ (Convention on International Trade in Endangered Species: CITES) ແລະ ການກວດສອບດ້ວຍພາບຖ່າຍໃນການລວບລວມເອົາຊະນິດພືດພັນໄມ້ອື່ນໆເຂົ້າໄວ້ໃນລະບົບ.
- ການກວດສອບມາດຕະການທີ່ຕັ້ງໄວ້ໃນອະນຸຍສັນຍາ OECD ວ່າດ້ວຍການຕິດສິນບົນໃນກໍລະນີທີ່ຫຼັກຖານບົ່ງບອກວ່າ ການຕິດສິນບົນມີບົດບາດສ່ວນໜຶ່ງໃນການໃຫ້ສິດທິໃນການຄ້າຂາຍໄມ້.
- ການກວດສອບທົນທາງຕ່າງໆທີ່ອາດນຳກົດໝາຍແຫ່ງຊາດເຊັ່ນ: ກົດໝາຍທີ່ຄວບຄຸມສິນຄ້າທີ່ຖືກຈໍລະກຳ ມາປະຍຸກໃຊ້ໃນການຄ້າໄມ້.



### 3.7 ໄມ້ທີ່ມີການນຳໄປໃຊ້ສະໜັບສະໜູນທາງການເງິນໃນກໍລະນີຄວາມຂັດແຍ່ງທີ່ມີການໃຊ້ອາວຸດ

ແຜນປະຕິບັດງານຜູກພັນສະຫະພາບເອີຣົບໃຫ້ພັດທະນາຄຳນິຍາມທີ່ເຂັ້ມງວດຕໍ່ການນຳໄປໃຊ້ສະໜັບສະໜູນທາງການເງິນໃນກໍລະນີຄວາມຂັດແຍ່ງທີ່ມີການໃຊ້ອາວຸດ ແລະ ເອົາໃຈໃສ່ເຖິງຄວາມເຊື່ອມໂຍງ ລະຫວ່າງ ປ່າໄມ້ກັບຄວາມຂັດແຍ່ງທີ່ມີຢູ່ໃນໂຄງການຄວາມຮ່ວມມືດ້ານການພັດທະນາຕ່າງໆໃຫ້ຫຼາຍຂື້ນ.

3 ເຂົ້າເບິ່ງ gftn.panda.org
4 ເຂົ້າເບິ່ງ www.timbertradeactionplan.info

ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂື້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂື້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ້ມນີ້ (ມີນາ 2007).






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

### 1. ຄວາມເປັນມາ

ແຜນປະຕິບັດງານ FLEGT ຂອງສະຫະພາບເອີຣົບລະບຸມາດຕະການແກ້ໄຂບັນຫາທີ່ກ່ຽວຂ້ອງກັບການຄ້າຂາຍໄມ້ເຖື່ອນ ແລະ ການຄ້າໄມ້ທີ່ຜິດກົດໝາຍເຊິ່ງເພີ່ມຂຶ້ນ. ສິ່ງທີ່ເປັນພື້ນຖານຂອງການດຳເນີນງານຕາມມາດຕະການເຫຼົ່ານີ້ຄືຄວາມສາມາດໃນການແຍກໄມ້ທີ່ຖືກກົດໝາຍກັບໄມ້ເຖື່ອນອອກຈາກກັນ.

ການໃຫ້ນິຍາມຂອງ "ຄວາມຖືກຕ້ອງທາງດ້ານກົດໝາຍ" ຈະເປັນອົງປະກອບທີ່ສຳຄັນປະການໜຶ່ງຂອງລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍທີ່ປະກອບເປັນສ່ວນຂອງຂໍ້ຕົກລົງການເປັນຄູ່ຮ່ວມແບບສະໝັກໃຈ (Voluntary Partnership Agreement: VPA) ທີ່ສະຫະພາບເອີຣົບກັບປະເທດທີ່ຜະລິດໄມ້ຈະເຈລະຈາກັນ (ເບິ່ງເອກະສານສະຫຼຸບຫຍໍ້ເລກທີ 6).

ເອກະສານສະຫຼຸບຫຍໍ້ນີ້ອະທິບາຍເຖິງ ລັກສະນະຂອງນິຍາມຄວາມຖືກຕ້ອງທາງດ້ານກົດໝາຍທີ່ໃຊ້ໄດ້ໃນທາງປະຕິບັດ ແລະ ຂະບວນການທີ່ເປັນທີ່ຍອມຮັບໄດ້ ແລະ ໜ້າເຊື່ອຖືໃນການທີ່ຈະໃຫ້ໄດ້ນິຍາມເຊັ່ນນັ້ນ.

### 2. ນິຍາມຄວາມຖືກຕ້ອງຕາມກົດໝາຍຄວນກວມເອົາບັນຫາໃດແດ່?

ການໃຫ້ຄຳນິຍາມທີ່ນຳມາໃຊ້ໃນທາງປະຕິບັດ ຂອງໄມ້ທີ່ຜະລິດຂຶ້ນມາຢ່າງຖືກຕ້ອງ, ກົດໝາຍທີ່ນຳມາໃຊ້ໃນທາງປະຕິບັດຕ້ອງການຫຼາຍກວ່າການສ້າງລາຍການຊື່ທາງດ້ານກົດໝາຍທັງໝົດ ທີ່ໃຊ້ກັບຂະແໜງການປ່າໄມ້ຂອງປະເທດໃດໜຶ່ງ. ການຕັດສິນໃຈວ່າກົດໝາຍສະບັບໃດຄວນຈະປະກອບໃນການໃຫ້ນິຍາມຄວາມຖືກຕ້ອງທາງດ້ານກົດໝາຍເປັນສິດທິຂອງປະເທດທີ່ຜະລິດໄມ້ແຕ່ລະປະເທດ. ເຖິງຢ່າງໃດກໍ່ຕາມ, ຈຳເປັນຕ້ອງນຳຄວາມເໝາະສົມ ແລະ ມີການປະຕິບັດໄດ້ຈິງໃນການປະເມີນຜົນກະທົບຂອງມັນຕໍ່ການບັນລຸເປົ້າໝາຍຂອງນິຍາມ, ຄວາມສອດຄ່ອງກັນຂອງກົດໝາຍຕ່າງໆ ແລະ ຄວາມເທົ່າທຽມກັນໃນເລື່ອງຂອງສິດທິ ຂອງຜູ້ມີສ່ວນໄດ້ເສຍກັບປ່າມາພິຈາລະນານຳກັນທັງໝົດ.

ປະເທດສ່ວນໃຫຍ່ມີກົດໝາຍຈຳນວນຫຼາຍ ທີ່ກ່ຽວຂ້ອງກັບປ່າ, ໄມ້ ແລະ ການປະເມີນການປະຕິບັດເປັນໄປຕາມກົດໝາຍທັງໝົດນັ້ນ ອາດເປັນພາລະກິດທີ່ໜັກໜ່ວງ. ນອກຈາກນັ້ນ, ບໍ່ແມ່ນວ່າກົດໝາຍທັງໝົດຈະຕົງເປົ້າເຂົ້າຈຸດສະເໝີໄປໃນການແກ້ໄຂຜົນກະທົບທີ່ຮ້າຍແຮງທີ່ສຸດ ຂອງການຄ້າໄມ້ເຖື່ອນ. ຕົວຢ່າງ ການປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງກັບສິດທິໃນການຕັດໄມ້ເປັນອົງປະກອບທີ່ກຳຄັນຂອງການໃຫ້ນິຍາມ. ໃນຄະນະທີ່ການປະຕິບັດກົດໝາຍຈໍລະຈອນອາດບໍ່ຜິດຈາລະນາ.

ໃນບາງປະເທດອາດມີຄວາມບໍ່ສອດຄ່ອງກັນ ລະຫວ່າງກົດໝາຍຕ່າງໆ ໂດຍສະເພາະຢ່າງຫຍິ່ງເມື່ອມີການອອກກົດໝາຍທັງໃນລະດັບປະເທດ ແລະ ໃນລະດັບພາກພື້ນ. ຕົວຢ່າງເຊັ່ນ: ຈາກການສຶກສາການຈັດການປ່າໄມ້ຂອງ ອິນໂດເນເຊຍ ພົບຄວາມບໍ່ສອດຄ່ອງກັນ ແລະ ຄວາມຂັດແຍ່ງກັນ ລະຫວ່າງກົດໝາຍ ແລະ ລະບຽບການຂອງກະຊວງ, ທະບວງກົມຕ່າງໆອາດເຮັດໃຫ້ເປັນໄປບໍ່ໄດ້ທີ່ຈະປະຕິບັດກົດໝາຍທັງໝົດຢ່າງເຕັມທີ່ ແລະ ໃນກໍລະນີເຫຼົ່ານີ້ຈຳເປັນທີ່ຈະຕ້ອງກຳນົດວ່າ ກົດໝາຍໃດສຳຄັນກວ່າ ຕ້ອງມາກ່ອນຢ່າງໜ້ອຍເປັນການຊົ່ວຄາວຈົນກະທັ້ງຄວາມຂັດແຍ່ງເຫຼົ່ານັ້ນຈະໄດ້ຮັບການແກ້ໄຂ.

ທ້າຍທີ່ສຸດກົດໝາຍປ່າໄມ້ທີ່ມີຢູ່ໃນບາງປະເທດ ອາດກີດກັນບໍ່ໃຫ້ປະຊາຊົນໃນທ້ອງຖິ່ນເຂົ້າເຖິງຊັບພະຍາກອນປ່າໄມ້ ເຮັດໃຫ້ພວກເຂົາຕ້ອງປະຕິບັດການຢ່າງຜິດກົດໝາຍ ເພື່ອໃຫ້ໄດ້ສິ່ງຈຳເປັນຂັ້ນພື້ນຖານໃນການດຳລົງຊີວິດ ຫຼື ການປະຕິບັດຕາມກົດໝາຍ ອາດເກີນກວ່າເຄື່ອງມື ແລະ ວິທີການທີ່ມີຢູ່ໃນທາງປະຕິບັດຂອງຜູ້ນຳໃຊ້ປ່າໄມ້ລາຍຍ່ອຍ. ບັນຫາເຊັ່ນນີ້ອາດເຮັດໃຫ້ຕ້ອງກວດສອບກົດໝາຍທີ່ໃຊ້ຢູ່ໃນຄະນະນັ້ນ ເພື່ອທີ່ຈະນຳໄປສູ່ຂະບວນການປະຕິຮູບທາງກົດໝາຍ.

ຄວາມມຸ່ງໝາຍໃນໄລຍະຍາວຂອງແຜນປະຕິບັດການ FLEGT ຄືການຈັດສັນປ່າໄມ້ແບບຍືນຍົງ. ດັ່ງນັ້ນ, ຄຳນິຍາມຂອງໄມ້ທີ່ຜະລິດຢ່າງຖືກຕ້ອງຕາມກົດໝາຍຈຶ່ງຄວນຈະລວມເອົາກົດໝາຍ ທີ່ກ່າວເຖິງເສົາຫຼັກທັງສາມຂອງຄວາມຍືນຍົງຄືກົດໝາຍທີ່ມີວັດຖຸປະສົງທາງເສດຖະກິດ, ສິ່ງແວດລ້ອມ ແລະ ສັງຄົມ ເຊິ່ງຄວນລວມເອົາບັນຫາ:

- ການອະນຸຍາດໃຫ້ ແລະ ການປະຕິບັດຕາມສິດທິທີ່ຈະເຮັດໃຫ້ໄມ້ໃນຂອບເຂດທີ່ມີການປະກາດຕາມກົດໝາຍ.
- ການປະຕິບັດຕາມຂໍ້ກຳນົດທີ່ກ່ຽວກັບການຈັດການປ່າໄມ້ ເຊິ່ງລວມເຖິງການປະຕິບັດຕາມກົດໝາຍສິ່ງແວດລ້ອມ, ກົດໝາຍແຮງງານ ແລະ ກົດໝາຍສະຫວັດດີການຊຸມຊົນທີ່ກ່ຽວຂ້ອງ.
- ການປະຕິບັດຕາມຂໍ້ກຳນົດທີ່ກ່ຽວກັບພາສີອາກອນນຳເຂົ້າ ແລະ ພັນທະສົ່ງອອກ/ຄ່າສຳປະທານ ແລະ ຄ່າທຳນຽມທີ່ກ່ຽວຂ້ອງໂດຍກົງກັບການຂຸດຄົ້ນໄມ້ ແລະ ການຄ້າໄມ້.

---

1 Nana Supama, September 2001. "Forest Governance and Forest Law Enforcement in Indonesia". ເອກະສານປະກອບກອງປະຊຸມລະດັບລັດຖະມົນຕີອາຊີຕາເວັນອອກໃນການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການຈັດການຄຸ້ມຄອງ.




- ການເຄົາລົບຕໍ່ສິດທິໃນການຄອບຄອງ ຫຼື ການໃຊ້ທີ່ດິນ ແລະ ຊັບພະຍາກອນ ທີ່ອາດໄດ້ຮັບຜົນກະທົບຈາກການຂຸດຄົ້ນໄມ້ ໃນກໍລະນີສິດທິເຊັ່ນນັ້ນຄົງຢູ່.
- ການປະຕິບັດຕາມຂໍ້ກຳນົດຂອງການຄ້າ ແລະ ການສົ່ງອອກ.

### 3. ການພັດທະນານິຍາມຂອງຄວາມຖືກຕ້ອງທາງດ້ານກົດໝາຍ

ຂະບວນການສຳລັບການຕັດສິນວ່າກົດໝາຍສະບັບໃດ ຄວນຈະຖືກນຳລວມໄວ້ໃນນິຍາມຂອງຄຳວ່າຄວາມຖືກຕ້ອງຕາມກົດໝາຍ, ເປັນຄວາມຮັບຜິດຊອບຂອງປະເທດທີ່ກົດໝາຍນັ້ນມີຜົນໃນການນຳໃຊ້ ແລະ ຖ້ານິຍາມຈະເປັນອົງປະກອບຂອງລະບົບຄ້ຳປະກັນຄວາມຖືກຕ້ອງຕາມກົດໝາຍ ທີ່ຮັບຮອງຂໍ້ຕົກລົງທາງການຄ້າຈະຕ້ອງໄດ້ຮັບການຮັບຮອງ ຈາກລັດຖະບານຂອງປະເທດນັ້ນ. ເຖິງຢ່າງໃດກໍ່ຕາມ, ລັກສະນະຂອງຂະບວນການໃນການຈຳກັດຄຳນິຍາມມີອິດທິພົນຫຼາຍຕໍ່ການຍອມຮັບຄຳນິຍາມຂອງຜູ້ມີສ່ວນໄດ້ເສຍຕ່າງໆ.

ອັນຕະລາຍທີ່ອາດເກີດຂື້ນຈາກຄວາມຫຼົ້ມເຫຼວ ທີ່ປະຕິບັດຕາມກົດໝາຍອາດສ້າງຜົນຕໍ່ຜູ້ມີສ່ວນໄດ້ເສຍ ທີ່ແຕກຕ່າງກັນໃນປະເທດຜູ້ຜະລິດໄມ້ອັນໄດ້ແກ່ ລັດຖະບານ, ພາກເອກະຊົນ, ສາທາລະນະຊົນ ແລະ ຊຸມຊົນທ້ອງຖິ່ນ ກັບຊຸມຊົນຄົນພື້ນເມືອງໃນຮູບແບບທີ່ແຕກຕ່າງກັນອອກໄປ. ດັ່ງນັ້ນ, ຂະບວນການທີ່ຕັດສິນໃຈວ່າຄວນລວມກົດໝາຍສະບັບໃດແດ່ ໄວ້ໃນຄຳນິຍາມໂດຍທົ່ວໄປແລ້ວຄວນຈະມີການປຶກສາຫາລືຢ່າງກວ້າງຂວາງກັບຝ່າຍຕ່າງໆທີ່ສົນໃຈທັງໝົດ.

ໃນບາງປະເທດທີ່ມີກົດໝາຍທີ່ບັນຍັດໄວ້ຢ່າງຊັດເຈນ ການພັດທະນານິຍາມຄວາມຖືກຕ້ອງຕາມກົດໝາຍ ອາດເປັນການປະຕິບັດທີ່ຂ້ອນຂ້າງງ່າຍດາຍໃນປະເທດອື່ນໆ. ກົດໝາຍທີ່ບໍ່ຄົບຖ້ວນ, ຂັດແຍ່ງກັນ ຫຼື ບໍ່ເທົ່າທຽມກັນອາດເຮັດໃຫ້ຍາກທີ່ຈະບັນລຸໄດ້ ຄຳນິຍາມຂອງຄວາມຖືກຕ້ອງທາງດ້ານກົດໝາຍຢ່າງຊັດເຈນ. ກໍລະນີເຫຼົ່ານີ້ອາດຈຳຕ້ອງປຶກສາຫາລືກັບຜູ້ມີສ່ວນໄດ້ເສຍຫຼາຍຮອບ ເຊັ່ນດຽວກັນກັບການນຳຄຳນິຍາມໄປທົດສອບການນຳໃຊ້ໃນພາກສະໜາມ.

ອາດມີກໍລະນີທີ່ຂະບວນການປຶກສາຫາລື ໄດ້ບົ່ງຊີ້ໃຫ້ເຫັນເຖິງກົດໝາຍທີ່ບໍ່ສະໜັບສະໜູນການຄຸ້ມຄອງປ່າໄມ້ແບບຍືນຍົງ ຫຼື ສິດທິທີ່ສຳຄັນຢ່າງໃດຢ່າງໜຶ່ງບໍ່ໄດ້ຮັບການປົກປ້ອງຈາກກົດໝາຍທີ່ມີຢູ່. ໃນກໍລະນີເຫຼົ່ານັ້ນອາດຈຳເປັນຕ້ອງຮັບເອົາຄຳນິຍາມຊົ່ວຄາວທີ່ໃຫ້ຜົນຮັບສູງທີ່ສຸດເທົ່າທີ່ເປັນໄປໄດ້ມານຳໃຊ້ກ່ອນໃນ ຄະນະທີ່ມີການດຳເນີນງານໂຄງການປະຕິຮູບການກຳກັບດູແລ.

### 4. ການນຳເອົາຄຳນິຍາມຂອງຄວາມຖືກຕ້ອງຕາມກົດໝາຍມາໃຊ້

ການກວດສອບການປະຕິບັດຕາມ ແລະ ການບັງຄັບໃຊ້ຄຳນິຍາມຂອງໄມ້ທີ່ຜະລິດຂື້ນມາຢ່າງຖືກຕ້ອງຕາມກົດໝາຍນັ້ນ ຕ້ອງມີຄຳນິຍາມທີ່ຊັດເຈນສາມາດນຳມາໃຊ້ໄດ້ໃນທາງປະຕິບັດ ແລະ ສາມາດກວດສອບໄດ້ໂດຍບໍ່ຂື້ນກັບຄວາມຄິດເຫັນຂອງຜູ້ໃດ. ຄຳນິຍາມນີ້ຕ້ອງເປັນທີ່ເຂົ້າໃຈໄດ້ງ່າຍ ແລະ ຕົງກັນທັງຈາກຜູ້ນຳໃຊ້ປະໂຫຍດຈາກປ່າໄມ້ ແລະ ໜ່ວຍງານທີ່ບັງຄັບໃຊ້ກົດໝາຍ ເຊິ່ງໝາຍຄວາມວ່າ:

- ຈະຕ້ອງໃຫ້ຊັດເຈນວ່າ ກົດໝາຍ ແລະ ລະບຽບ ສະບັບໃດ ແລະ ຂໍ້ໃດແດ່ທີ່ຖືກນຳມາລວມໄວ້ໃນຄຳນິຍາມ ແລະ ສະບັບໃດຂໍ້ໃດທີ່ບໍ່ໄດ້ຖືກນຳມາລວມໄວ້.
- ຈະຕ້ອງມີການທົດສອບຫຼັກຖານຢ່າງຊັດເຈນ (ເຊັ່ນ: ຄຸນນະພາບ ແລະ ຕົວຊີ້ວັດ) ເພື່ອພິຈາລະນາການປະຕິບັດກົດໝາຍໃນແຕ່ລະສະບັບ ຫຼື ລະບຽບແຕ່ລະຂໍ້.
- ຄວນຈະມີວິທີທາງໃນການທຳການທົດສອບດັ່ງກ່າວໃນພາກສະໜາມໄດ້ໃນທາງປະຕິບັດ.
- ການປະຍຸກໃຊ້ຄຳນິຍາມໃນທາງປະຕິບັດນັ້ນ, ອາດຕ້ອງມີການເຝິກອົບຮົມໃຫ້ກັບຜູ້ໃຊ້ປະໂຫຍດ ແລະ ຜູ້ບັງຄັບໃຊ້ກົດໝາຍໃນຂະແໜງການປ່າໄມ້.

ຄາດວ່າເມື່ອເວລາຜ່ານໄປ, ປະສົບການຈາກການປະຍຸກໃຊ້ຄຳນິຍາມຕ່າງໆໃນເລື່ອງຄວາມຖືກຕ້ອງທາງດ້ານກົດໝາຍຈະບົ່ງບອກທິດທາງໃນການປັບປຸງຄຳນິຍາມເຫຼົ່ານັ້ນໄດ້. ນອກຈາກນັ້ນ, ອາດມີການແກ້ກົດໝາຍເມື່ອເວລາຜ່ານໄປ. ດັ່ງນັ້ນ, ຈຶ່ງຄວນມີຂໍ້ບັນຍັດໃນການທົບທວນ ແລະ ດັດແກ້ຄຳນິຍາມຄວາມຖືກຕ້ອງທາງດ້ານກົດໝາຍເອົາໄວ້ດ້ວຍ. ຕົວຢ່າງ ອາດຕ້ອງມີການປ່ຽນແປງຄຳນິຍາມເມື່ອ:

- ກົດໝາຍ ຫຼື ລະບຽບການທີ່ປະກອບເປັນສ່ວນໜຶ່ງຂອງຄຳນິຍາມນັ້ນ ໄດ້ຮັບການແກ້ໄຂ ຫຼື ຍົກເລີກໄປ.
- ມີການອອກກົດໝາຍ ຫຼື ລະບຽບການໃໝ່ທີ່ອາດກ່ຽວຂ້ອງກັບການຜະລິດ.
- ປະສົບການສະແດງໃຫ້ເຫັນວ່າການທົດສອບການປະຕິບັດຕາມກົດໝາຍສະບັບໃດໜຶ່ງເປັນການສະເພາະບໍ່ອາດເຮັດໄດ້ໃນທາງປະຕິບັດ.



ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂື້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂື້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກາຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ້ມນີ້ (ມີນາ 2007).





# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້

### 1. ຄວາມເປັນມາ

ແຜນປະຕິບັດງານການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບລະບຸມາດຕະການຕ່າງໆ ທີ່ຈະນຳໄປໃຊ້ກັບບັນຫາການຄ້າຂາຍໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວຂ້ອງ. ແຜນປະຕິບັດງານນີ້ເນັ້ນເປັນພິເສດໃນການປະຕິຮູບການຈັດການຄວບຄຸມ ແລະ ການສ້າງຄວາມອາດສາມາດໃນປະເທດຜູ້ຜະລິດໄມ້ ໂດຍການສະໜັບສະໜູນການປະຕິບັດການເພື່ອຫຼຸດຜ່ອນການຄ້າ ແລະ ການນຳໃຊ້ໄມ້ທີ່ຜິດກົດໝາຍ ແລະ ສົ່ງເສີມການໃຊ້ໄມ້ທີ່ນຳມາຈາກແຫຼ່ງທີ່ຖືກຕ້ອງຕາມກົດໝາຍໃນສະຫະພາບເອີຣົບ. ສະຫະພາບເອີຣົບຈະປະຕິບັດເຊັ່ນນີ້ຜ່ານທາງຂໍ້ຕົກລົງການເປັນຄູ່ຮ່ວມແບບສະໝັກໃຈ (Voluntary Partnershop Agreements : VPAs) ລະຫວ່າງ ສະຫະພາບເອີຣົບ ແລະ ປະເທດຜູ້ຜະລິດໄມ້ເຊິ່ງມີບັນຫາການຂຸດຄົ້ນໄມ້ທີ່ຜິດກົດໝາຍຢູ່ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 6).

ສ່ວນສຳຄັນປະການໜຶ່ງຂອງຂໍ້ຕົກລົງດັ່ງກ່າວ ຈະເປັນການຕັ້ງລະບົບການຄຸ້ມຄອງອອກໃບອະນຸຍາດເພື່ອຮັບປະກັນວ່າ ຜະລິດຕະພັນໄມ້ທີ່ໄດ້ຮັບການຜະລິດຂຶ້ນມາຕາມກົດໝາຍແຫ່ງຊາດຂອງປະເທດ ທີ່ສົ່ງອອກໄມ້ເທົ່ານັ້ນຈະນຳເຂົ້າມາຍັງສະຫະພາບເອີຣົບ ພາຍໃຕ້ລະບົບການຄຸ້ມຄອງອອກໃບອະນຸຍາດນີ້ ຈະຫ້າມການນຳເຂົ້າໄມ້ທີ່ສົ່ງອອກມາຈາກປະເທດຄູ່ຄ້າສູ່ສະຫະພາບເອີຣົບ, ນອກຈາກວ່າຈະມີໃບອະນຸຍາດທີ່ຖືກຕ້ອງ. ເຖິງຢ່າງໃດກໍ່ຕາມ, ການຄ້າຜະລິດຕະພັນໄມ້ຈາກປະເທດທີ່ບໍ່ແມ່ນຄູ່ສັນຍາ ຈະບໍ່ໄດ້ຮັບຜົນກະທົບແຕ່ຢ່າງໃດ.

### 2. ອົງປະກອບລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ

ຄວາມມຸ້ງຫວັງຂອງລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ (Timber Legality Assurance System: TLAS) ແມ່ນການຈັດໃຫ້ມີວິທີ ການທີ່ເຊື່ອຖືໄດ້ໃນການແຍກ ລະຫວ່າງ ຜະລິດຕະພັນຈາກປ່າຜະລິດທີ່ຜະລິດຂຶ້ນມາຢ່າງຖືກຕ້ອງຕາມກົດໝາຍ ແລະ ຈາກການຜະລິດທີ່ຜິດກົດໝາຍ. ການອອກໃບອະນຸຍາດໂດຍປະເທດຄູ່ຮ່ວມສັນຍາກຳນົດ ໃຫ້ຕ້ອງມີລະບົບທີ່ຮັບປະກັນວ່າ ມີແຕ່ໄມ້ທີ່ຜະລິດຂຶ້ນຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນທີ່ໄດ້ຮັບອະນຸຍາດສຳລັບການສົ່ງອອກ. ລະບົບນີ້ລວມເຖິງການກວດສອບກິດຈະການປ່າໄມ້ ແລະ ການຄວບຄຸມຕ່ອງໂສ້ການສະໜອງຕັ້ງແຕ່ການຕັດໄປຈົນເຖິງການສົ່ງອອກດ້ວຍລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ລວມໄປເຖິງອົງປະກອບ 5 ປະການຄື:

**ການໃຫ້ນິຍາມຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້:** ມີມາດຕະຖານທີ່ກຳນົດໄວ້ຢ່າງຊັດເຈນວ່າ ກົດໝາຍສະບັບໃດຂອງປະເທດຄູ່ຮ່ວມສັນຍາທີ່ຈະຕ້ອງປະຕິບັດ ແລະ ກຳນົດໃຫ້ມີມາດຖານ ແລະ ຕົວຊີ້ວັດ ທີ່ຈະໃຊ້ໃນການທົດສອບການປະຕິບັດຕາມກົດໝາຍເຫຼົ່ານັ້ນ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 2).

**ການຄວບຄຸມຕ່ອງໂສ້ການສະໜອງໄມ້:** ມີຂໍ້ກຳນົດສຳລັບລະບົບຕ່າງໆທີ່ຈະຕິດຕາມການຜະລິດຜະລິດຕະພັນໄມ້ ໃນສາຍການຜະລິດຕັ້ງແຕ່ການຕັດໄປຈົນເຖິງຈຸດສົ່ງອອກ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 4)

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

**ການກວດສອບຢືນຢັນຄວາມເປັນຈິງ:** ມີຂໍ້ກຳນົດສຳລັບການກວດກາທັງການປະຕິບັດຕາມນິຍາມຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ແລະ ການຄວບຄຸມຕ່ອງໂສ້ສະໜອງຂອງໄມ້ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 5).

**ການອອກໃບອະນຸຍາດ:** ກຳນົດລາຍລະອຽດວ່າພາກສ່ວນໃດເປັນຜູ້ອອກອະນຸຍາດ ແລະ ຂັ້ນຕອນການອອກໃບອະນຸຍາດຕ້ອງປະຕິບັດຄືແນວໃດ.

**ການກວດສອບລະບົບຂອງໜ່ວຍງານອິດສະຫຼະ ຫຼື ບຸກຄົນທີ່ສາມ:** ເປັນວິທີການເພື່ອເພີ້ມຄວາມໜ້າເຊື່ອຖື ໂດຍການຮັບປະກັນວ່າມີການນຳຂໍ້ກຳນົດທັງໝົດທີ່ກ່ຽວຂ້ອງ ກ່ຽວກັບ ລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ແມ່ນໄດ້ຖືກນຳມາປະຕິບັດຕາມທີ່ໄດ້ໃຫ້ຄຳໝັ້ນສັນຍາໄວ້.






## 3. ການພັດທະນານິຍາມຂອງຄວາມຖືກຕ້ອງທາງດ້ານກົດໝາຍ

ໃນປະເທດທີ່ເປັນຄູ່ສັນຍາລາຍປະເທດ, ອົງປະກອບບາງຢ່າງຂອງລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ ທີ່ໃຊ້ປະຈຸບັນມີພຽງພໍຢູ່ແລ້ວ. ເຖິງຢ່າງໃດກໍ່ຕາມ, ທຸກດ້ານອາດບໍ່ໄດ້ດໍາເນີນການໄປຢ່າງມີປະສິດທິຜົນ. ໃນກໍລະນີເຊັ່ນນີ້ປະເທດຄູ່ຮ່ວມສັນຍາແບບສະໝັກໃຈ ຈະຕ້ອງດໍາເນີນການປັ່ງປແປງລະບົບທີ່ມີຢູ່ແລ້ວ ເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ ແລະ ຈັດໃຫ້ມີການຕິດຕາມກວດສອບຜະລິດຕະພັນໄມ້ທີ່ເຊື່ອຖືໄດ້.

ຄາດວ່າໃນກໍລະນີສ່ວນໃຫຍ່ແລ້ວ ຈະມີການເຈລະຈາຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ ແລະ ຂໍ້ຕົກລົງນີ້ຈະມີຜົນບັງຄັບໃຊ້ກ່ອນທີ່ລະບົບການຮັບປະກັນທາງດ້ານຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ຈະຖືກນໍາມາໃຊ້ຢ່າງເຕັມທີ່ ແລະ ເລີ່ມມີການອອກໃບອະນຸຍາດຜະລິດຕະພັນໄມ້. ອົງປະກອບຫຼັກຢ່າງໜຶ່ງຂອງຂໍ້ຕົກລົງນີ້ຄືແຜນປະຕິບັດງານໂດຍລະອຽດ ທີ່ກໍານົດໄວ້ຢ່າງຊັດເຈນ ແລະ ມີຂອບເຂດເວລາສໍາລັບການພັດທະນາລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ແລະ ການຄຸ້ມຄອງການອອກໃບອະນຸຍາດ. ຂໍ້ຕົກລົງນີ້ຈະລະບຸບັນຫາ ທີ່ຕ້ອງການຄວາມຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການເງິນເພື່ອສະໜັບສະໜູນແຜນປະຕິບັດງານເຫຼົ່ານີ້ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 6).

## 4. ການດໍາເນີນງານລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ

ມີແນວທາງຢູ່ສອງແນວທາງໃນການພັດທະນາ ແລະ ດໍາເນີນງານລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ຄື: ລະບົບທີ່ເອົາໄມ້ທີ່ຖືກຕ້ອງສົ່ງໄປເປັນຫຼັກຖານການພິຈາລະນາ ແລະ ລະບົບທີເອົາຜູ້ດໍາເນີນການເປັນຖານໃນການພິຈາລະນາ (ເບິ່ງພາບປະກອບທີ 1 ແລະ 2).

**ໃບອະນຸຍາດທີ່ເອົາການສົ່ງອອກໄມ້ເປັນຖານພິຈາລະນາ:** ຜະລິດຕະພັນໄມ້ແຕ່ລະລາຍການທີ່ຈະສົ່ງອອກໄປຍັງສະຫະພາບເອີຣົບ ຈະໄດ້ຮັບໃບອະນຸຍາດຈາກໜ່ວຍງານທີ່ມີອໍານາດໃນການອອກໃບອະນຸຍາດເປັນແຕ່ລະລາຍການໄປ. ຕາມແນວທາງນີ້ໜ່ວຍງານທີ່ມີອໍານາດໃນການອອກໃບອະນຸຍາດຈະກວດສອບຫຼັກຖານສະແດງຕົ້ນກໍາເນີດທີ່ຖືກຕ້ອງຕາມກົດໝາຍ ຂອງໄມ້ທີ່ໃຫ້ມາກັບການສົ່ງອອກແຕ່ລະຄັ້ງ ເຊິ່ງຈະຕ້ອງມີລະບົບຄວບຄຸມໃນລະດັບຊາດເພື່ອໃຫ້ໄດ້ຕາມຂໍ້ກໍານົດຂອງລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້.

**ໃບອະນຸຍາດທີ່ມີຜູ້ດໍາເນີນງານເປັນຖານການພິຈາລະນາ:** ໜ່ວຍງານທີ່ມີອໍານາດໃນການອອກໃບອະນຸຍາດ ຈະປະຕິບັດການກວດສອບຜູ້ດໍາເນີນງານແຕ່ລະລາຍເປັນການສະເພາະ ມີລະບົບການຄວບຄຸມຕົ້ນກໍາເນີດທີ່ຖືກກົດໝາຍຂອງໄມ້ທັງໝົດທີ່ໄດ້ຕາມຂໍ້ກໍານົດ ຂອງລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້. ການສົ່ງອອກໄມ້ທັງໝົດຈາກຜູ້ດໍາເນີນການນັ້ນຈະມີໃບອະນຸຍາດ FLEGT ຮັບຮອງ ຫາກເມື່ອໃດທີ່ການກວດກາເປັນໄລຍະໆສະແດງໃຫ້ເຫັນວ່າລະບົບທີ່ໄດ້ຮັບອະນຸມັດນັ້ນຍັງມີປະສິດທິພາບຢູ່. ໃນກໍລະນີນີ້ມີການຍອມຮັບລະບົບຕ່າງໆທີ່ມີຢູ່ທີ່ຜູ້ດໍາເນີນການໃຍ້ທີ່ຂ້ອນຂ້າງກວ້າງເຊັ່ນ: ການຈັດລະບົບການຮັບຮອງ ແລະ ລະບົບການຕິດຕາມໄມ້ໂດຍໜ່ວຍງານທີ່ມີອໍານາດໃນການອອກອະນຸຍາດ ຈໍາເປັນທີ່ຈະຕ້ອງມີການກວດສອບລະບົບເຫຼົ່ານີ້ເປັນໄລຍະໆ ເພື່ອຮັບປະກັນວ່າໄດ້ດໍາເນີນການໄປຕາມຂໍ້ກໍານົດຂອງລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້.

ໃນປະເທດຄູ່ຮ່ວມສັນຍາບາງປະເທດ, ແມ່ນມີຄວາມເປັນໄປໄດ້ທີ່ຈະພັດທະນາ ແລະ ດໍາເນີນການລະບົບການຮັບປະກັນຄວາມຖືກຕ້ອງ ທາງດ້ານກົດໝາຍຂອງໄມ້ໃນຂອບເຂດທົ່ວປະເທດ. ເຖິງຢ່າງໃດກໍ່ຕາມ, ຄາດວ່າຢ່າງໜ້ອຍທີ່ສຸດໃນໄລຍະເວລາສັ້ນ ລະບົບທີ່ຈະນໍາມາໃຊ້ອາດມີການຈໍາກັດຂອບເຂດການໃຊ້ ຫຼື ຈໍາກັດພື້ນທີ່ທາງພູມມິສາດ ຫຼື ຈໍາກັດສະເພາະຕ່ອງໂສ້ງການສະໜອງຫຼັກໆທີ່ສົ່ງອອກໄປຍັງສະຫະພາບເອີຣົບ. ໃນຄະນະທີ່ຂໍ້ຈໍາກັດເຊັ່ນນີ້ອາດເໝາະສົມໃນຂັ້ນຕົ້ນ ສະຫະພາບເອີຣົບຈະກະຕຸກຊຸກຍູ້ໃຫ້ປະເທດຄູ່ສັນຍາ ຂະຫຍາຍຂອບເຂດການນໍາລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ໄປໃຊ້ກັບການສົ່ງອອກທັງໝົດຂອງປະເທດ ແລະ ໃຊ້ກັບຕະຫຼາດພາຍໃນປະເທດອີກດ້ວຍ.

ການຕິດຕາມຜົນການດໍາເນີນງານທັງໝົດຂອງລະບົບການຮັບປະກັນທາງດ້ານຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ ຂອງແຕ່ລະປະເທດຄູ່ຮ່ວມສັນຍານັ້ນເປັນຄວາມຮັບຜິດຊອບຫຼັກ ຂອງຄະນະກໍາມະການງານຮ່ວມ (Joint Implementation Committee: JIC) ເຊິ່ງມີຕົວແທນລັດຖະບານປະເທດຄູ່ຮ່ວມສັນຍາ ແລະ ສະຫະພາບເອີຣົບ (ເບິ່ງເອກະສານສະຫຼຸບຍໍ້ເລກທີ 6).




**ພາບທີ 1:** ໃບອະນຸຍາດທີ່ມີຜູ້ນໍາເປັນຖານພິຈາລະນາ




**ພາບທີ 2:** ໃບອະນຸຍາດທີ່ມີຜູ້ນໍາເປັນຖານພິຈາລະນາ



ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂຶ້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກໍາມະທິການເອີຣົບຕັ້ງຂຶ້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນໍາໄປໃຊ້ໃນການປະຊຸມປຶກ ສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກໍາມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ້ມນີ້ (ມີນາ 2007).






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ການຄວບຄຸມຕ່ອງໂສ້ການສະໜອງ: ລະບົບການຕິດຕາມໄມ້ ແລະ ຕ່ອງໂສ້ງການຄຸ້ມຄອງ

### 1. ຄວາມເປັນມາ

ອົງປະກອບຫຼັກປະການໜຶ່ງຂອງແຜນການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບຄືການພັດທະນາຂໍ້ຕົກລົງການເປັນຄູ່ຮ່ວມແບບສະໝັກໃຈ ລະຫວ່າງ ສະຫະພາບເອີຣົບ ກັບປະເທດຜູ້ຜະລິດໄມ້ຕ່າງໆ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 6) ເນື້ອໃນສຳຄັນຂອງຂໍ້ຕົກລົງດັ່ງກ່າວຄືການຕັ້ງລະບົບການໃຫ້ໃບອະນຸຍາດ ເພື່ອຮັບປະກັນວ່າມີແຕ່ຜະລິດຕະພັນໄມ້ທີ່ຜະລິດຂຶ້ນຕາມກົດໝາຍແຫ່ງຊາດຂອງປະເທດສົ່ງອອກໄມ້ເທົ່ານັ້ນທີ່ອາດນາເຂົ້າໄປໃນສະຫະພາບເອີຣົບໄດ້ ພາຍໃຕ້ລະບົບການອອກໃບອະນຸຍາດ ຈະຫ້າມນຳໄມ້ທີ່ສົ່ງອອກມາຈາກປະເທດຄູ່ຮ່ວມສັນຍາສົ່ງໄມ້ເຂົ້າໄປໃນສະຫະພາບເອີຣົບ ຍົກເວັ້ນໄມ້ນັ້ນຈະມີໃບອະນຸຍາດທີ່ໃຊ້ໄດ້.

ການອອກໃບອະນຸຍາດຈະກຳນົດການນຳລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ (TLAS) ມາໃຊ້ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 3) ພາຍໃຕ້ລະບົບນີ້ການອອກໃບອະນຸຍາດ ໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຈະຕ້ອງມີຫຼັກຖານເພື່ອຢັ້ງຢືນວ່າໄມ້ນັ້ນຜະລິດຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ແລະ ສາມາດຕິດຕາມໄປຍັງແຫຼ່ງກຳເນີດທີ່ຖືກກົດໝາຍໄດ້[1] ເຊິ່ງຈະເຮັດໄດ້ຕ້ອງມີສາມເງື່ອນໄຂດັ່ງນີ້:

- ຄຳນິຍາມຂອງໄມ້ທີ່ຜະລິດຂຶ້ນຢ່າງຖືກຕ້ອງຕາມກົດໝາຍ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 2).
- ກົນໄກການຄຸ້ມຄອງຕ່ອງໂສ້ການສະໜອງ (ເຊັ່ນ: ລະບົບການຕິດຕາມໄມ້ ຫຼື ຕ່ອງໂສ້ການຄຸ້ມຄອງ).
- ວິທີການກວດສອບວ່າໄດ້ປະຕິບັດຕາມຂໍ້ກຳນົດຂອງຄຳນິຍາມຄວາມຖືກຕ້ອງຂອງໄມ້ຕາມກົດໝາຍ ແລະ ຕ່ອງໂສ້ການຄວບຄຸມຂໍ້ມູນນີ້ສະເໜີຕໍ່ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ ເພື່ອອະນຸຍາດໃຫ້ມີການອອກໃບອະນຸຍາດ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 5).

ເອກະສານເຫຼົ່ານີ້ອະທິບາຍອົງປະກອບທີ 2 ຄື: ຂໍ້ກຳນົດສຳລັບການຄວບຄຸມຕ່ອງໂສ້ການສະໜອງ ໂດຍມີຫຼັກການ ແລະ ບັນທັດຖານທີ່ກ່ຽວຂ້ອງຕ່າງໆ

[1] ບໍ່ຈຳເປັນສະເໝີໄປໃນການຕິດຕາມໄມ້ທ່ອນໜຶ່ງ, ກອງໄມ້ທ່ອນ ຫຼື ຜະລິດຕະພັນໄມ້ຈົນເຖິງປ່າທີ່ເປັນຕົ້ນກຳເນີດ. ແຕ່ການຕິດຕາມພົບໃນລະດັບນີ້ຈະຈຳເປັນລະຫວ່າງປ່າກັບຈຸດທຳອິດທີ່ມີການຄຸ້ມຄອງການນຳໄມ້ມາປະສົມກັນພຽງພໍ (ເຊັ່ນຈຸດກວດໄມ້ ຫຼື ສະຖານທີ່ແປຮູບ)

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງລ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມພົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

ກ່ຽວກັບຫຼັກການ ແລະ ບັນທັດຖານເຫຼົ່ານີ້ໄດ້ຮັບການອອກແບບມາໃຫ້ອະທິບາຍເຖິງພົນຮັບທີ່ຈະຕ້ອງບັນລຸຫຼາຍກວ່າການອະທິບາຍ ວິທີການທີ່ຈະລະບຸພົນນັ້ນ. ເຮັດໃຫ້ປະເທດຄູ່ຮ່ວມສັນຍາມີຂອບເຂດໃນການກຳນົດວິທີ ທີ່ຄິດວ່າດີທີ່ສຸດທີ່ຈະບັນລຸການປະຕິບັດຕາມ ພາຍໃຕ້ພົນປະໂຫຍດຂອງຊາດຕົນເປັນຕົ້ນຕໍ.

### 2. ຫຼັກການ ແລະ ບັນທັດຖານສຳລັບການຄວບຄຸມຕ່ອງໂສ້ການສະໜອງ

#### 2.1 ສິດທີໃນການໃຊ້

ແຜນທີ່ທາງພູມມີສາດໄດ້ສະແດງເຖິງພື້ນທີ່ທີ່ມີການຈັດສັນ ໃຫ້ສິດທິໃນການໃຊ້ຊັບພະຍາກອນປ່າໄມ້ ແລະ ການລະບຸຜູ້ຖືສິດດັ່ງກ່າວຢ່າງຊັດເຈນ.

2.1.1: ມີຂໍ້ມູນພຽງພໍກ່ຽວກັບທີ່ຕັ້ງ ແລະ ຜູ້ຖືສິດໃນການໃຊ້ເພື່ອໃຫ້ກວດກາວ່າການຕັດໄມ້ທັງໝົດໄດ້ຖືກປະຕິບັດໂດຍຜູ້ໃຊ້ທີ່ໄດ້ຮັບອະນຸຍາດແລ້ວ.

#### 2.2 ການຜະລິດ ແລະ ການແປຮູບ

2.2.1 ມີການລະບຸບັນຫາຕໍ່ແຕ່ລະບັນຫາຕໍ່ໃນຕ່ອງໂສ້ການສະໜອງໄມ້ ແລະ ສຳລັບແຕ່ລະບັນຫາຕໍ່ນັ້ນມີການຄວບຄຸມເພື່ອຮັບປະກັນການຕິດຕາມໄມ້ ຫຼື ຜະລິດຕະພັນໄມ້ໄດ້.





2.2.2 ໄມ້ຕົ້ນທີ່ຍັງຢືນຕົ້ນ: ມີກົນໄກໃນການກວດຕຳແໜ່ງທີ່ຕັ້ງຂອງໄມ້ຢືນຕົ້ນທີ່ຈະຕັດ ແລະ ຢັ້ງຢືນວ່າມັນສອດຄ່ອງກັບພື້ນທີ່ທີ່ມີການຈັດສັນສິດທິໃນການນຳໃຊ້ໃຫ້.

2.2.3 ໄມ້ທ່ອນໃນປ່າ: ມີການລະບຸໄມ້ທ່ອນ ຫຼື ກອງໄມ້ທ່ອນຢ່າງຊັດເຈນ ແລະ ບັນທຶກໄວ້ເປັນເອກະສານ ກ່ອນໜ້າທີ່ໄມ້ທ່ອນຈະຖືກຂົນໄປ ລວມເຖິງໄມ້ທ່ອນຈາກພື້ນທີ່ປ່າທີ່ກຳລັງຖືກປ່ຽນແປງການໃຊ້ປະໂຫຍດທີ່ດິນໃນທາງອື່ນ ໂດຍໃຊ້ວິທີການທີ່ເໝາະສົມ, ລະບຸຈຳແນກ, ໃຈ້ແຍກ ແລະ ເຮັດບົດບັນທຶກ.

2.2.4 ການຂົນສົ່ງ: ມີການລະບຸຈຳແນກໃຈ້ແຍກ ການເຮັດເອກະສານບັນທຶກ ແລະ ຂໍ້ມູນອື່ນໆ. ສຳລັບວັດສະດຸທີ່ຜະລິດຢ່າງຖືກຕ້ອງຕາມກົດໝາຍບໍ່ວ່າຈະມີການຂົສົ່ງໄປໃນເວລາໃດ. ບໍ່ມີການປະສົມປົນເປກັບວັດສະດຸທີ່ມາຈາກແຫຼ່ງທີ່ຜິດກົດໝາຍ ຫຼື ແຫຼ່ງທີ່ບໍ່ຮູ້ແຈ້ງໃນລະຫວ່າງການຂົນສົ່ງ ຫຼື ໃນສະຖານທີ່ເກັບຊ່ວຍຄາວທີ່ບໍ່ໝັ້ນຄົງອື່ນໆ.

2.2.5 ການກວດສອບສະຖານທີ່ເກັບມ້ຽນຊົ່ວຄາວ: ມີການຄວບຄຸມຢ່າງພຽງພໍໃນສະຖານທີ່ເກັບຊົ່ງຄາວ ເຊັ່ນ: ຈຸດລວມໄມ້ເພື່ອຮັບປະກັນວ່າວັດສະດຸຈາກແຫຼ່ງທີ່ກວດກາແລ້ວວ່າຖືກຕ້ອງຕາມກົດໝາຍ, ໄດ້ຮັບການເກັບຮັກສາ, ແຍກຕ່າງຫາກອອກຈາກວັດສະດຸຈາແຫຼ່ງອື່ນທັງໝົດ ຫຼື ຖ້າຍອມໃຫ້ມີການປະສົມປົນເປ ກໍ່ໃຫ້ມີການກັ້ນວັດສະດຸຈາກແຫຼ່ງທີ່ບໍ່ຮູ້ແຫຼ່ງທີ່ມາຊັດເຈນ ແລະ ວັດສະດຸທີ່ຕັດມາໂດຍບໍ່ມີສິດທິໃນການຕັດໄມ້ຢ່າງຖືກຕ້ອງຕາມກົດໝາຍ ອອກໄປຈາກສະຖານທີ່ແຫ່ງນັ້ນ (ເບິ່ງຂໍ້ 2.4).

2.2.6 ການມາເຖິງສະຖານທີ່ແປຮູບໄມ້ເບື້ອງຕົ້ນ: ມີການຄຸ້ມຄອງຢ່າງພຽງເພື່ອຮັບປະກັນວ່າໄມ້ທັງໝົດ ທີ່ຮັບເຂົ້າມາໃນສະຖານທີ່ແປຮູບມາຈາກແຫຼ່ງທີ່ກວດແລ້ວວ່າຖືກຕ້ອງຕາມກົດໝາຍ ຫຼື ຖ້າຍອມໃຫ້ມີການປະສົມປົນເປກັນ ກໍ່ມີການກັ້ນວັດສະດຸຈາກແຫຼ່ງທີ່ບໍ່ຮູ້ທີ່ມາຊັດເຈນ ແລະ ວັດສະດຸທີ່ຕັດມາໂດຍບໍ່ມີສິດໃນການຕັດຢ່າງຖືກຕ້ອງຕາມກົດໝາຍອອກໄປຈາກສະຖານທີ່ແຫ່ງນັ້ນ (ເບິ່ງຂໍ້ 2.4).

2.2.7 ການຄຸ້ມຄອງໃນສະຖານທີ່ແປຮູບ: ຖ້າຍອມໃຫ້ມີການປະສົມປົນເປເກີດຂື້ນ, ກໍ່ຕ້ອງມີການຄຸ້ມຄອງຢ່າງພຽງພໍ ເພື່ອຮັບປະກັນໃຫ້ມີການແຍກ ຫຼື ໃຊ້ແນວທາງສ້າງຄວາມສົມດຸນ (mass balance) ຢ່າງເໝາະສົມ.

2.2.8 ການມາເຖິງຈຸດສົ່ງອອກ: ວັດສະດຸທັງໝົດ (ໄມ້ທ່ອນ, ກອງໄມ້ທ່ອນ ຫຼື ໄມ້ແປຮູບ) ທີ່ມາເຖິງຈຸດສົ່ງອອກຕ້ອງມີເອກະສານທີ່ຈຳເປັນຕິດມາດ້ວຍເພື່ອຢັ້ງຢືນວ່າໄດ້ຮັບການກວດກາວ່າຖືກຕ້ອງຕາມກົດໝາຍແລ້ວ.

**ຄຳອະທິບາຍ:** ເຖິງແມ່ນວ່າວິທີການທີ່ໃຊ້ໃນການຈຳແນກ, ໃຈ້ແຍກລະບຸວັດສະດຸອາດແຕກຕ່າງກັນອອກໄປ (ເຊັ່ນ: ການຕິດປ້າຍວັດສະດຸແຕ່ລະຢ່າງ ຫຼື ການຖືເອົາເອກະສານບັນທຶກ ທີ່ຕິດມາກັບວັດສະດຸລາຍການນັ້ນ) ລະບົບຄວນເໝາະສົມກັບປະເພດ ແລະ ມູນຄ່າຂອງວັດສະດຸນັ້ນ ແລະ ຄວາມສ່ຽງທີ່ຈະມີການປົນເປວັດສະດຸທີ່ຖືກກົດໝາຍ ກັບວັດສະດຸທີ່ຜິດກົດໝາຍ ຫຼື ວັດສະດຸທີ່ບໍ່ສາມາດກວດສອບໄດ້.

## 2.3 ປະລິມານ

ມີກົນໄກທີ່ເຂັ້ມແຂງ ແລະ ມີປະສິດທິຜົນສຳລັບການວັດແທກ ແລະ ບັນທຶກຈຳນວນຂອງໄມ້ ຫຼື ຜະລິດຕະພັນໄມ້ໃນແຕ່ລະຂັ້ນຕອນຂອງຕ່ອງໂສ້ການສະ ໜອງ ລວມທັງມີການປະເມີນເຖິງປະລິມານໄມ້ຢືນຕົ້ນໃນແຕ່ລະພື້ນທີ່ ທີ່ການຕັດໄມ້ກ່ອນໜ້າ. ການຕັດດ້ວຍຄວາມຊັດເຈນທີ່ໜ້າເຊື່ອຖືໄດ້ພໍສົມຄວນ ມີການບັນທຶກຂໍ້ມູນທັງໝົດໄວ້ໃນທາງທີ່ເຮັດໃຫ້ເປັນໄປໄດ້ ທີ່ຈະເອົາໄປລວມຍອດກັນກັບຂອດຕໍ່ກ່ອນໜ້າ ແລະ ຂອດຕໍ່ຖັດໄປໃນຕ່ອງໂສ້ການສະໜອງ ໃນເວລາທີ່ເໝາະສົມ. ການລວມຍອດກັນທີ່ໜ້າເຊື່ອຖືໄດ້ນີ້ ຈະມີການປະຕິບັດໄປຕະຫຼອດໃນຕ່ອງໂສ້ການສະໜອງ.

2.3.1 ຂໍ້ມູນກ່ຽວກັບປະລິມານຂອງວັດສະດຸ ທີ່ຜະລິດຖືກຕ້ອງຕາມກົດໝາຍມີການລວມຍອດກັນໃນລັກສະນະທີ່ເຊື່ອຖືໄດ້ ແລະ ໃນເວລາທີ່ເໝາະສົມຕະຫຼອດຕ່ອງໂສ້ການສະໜອງ ວິທີການທີ່ໃຊ້ ແລະ ຄວາມຖີ່ໃນການລວມຍອດຄວນຈະເປັນໄປໄດ້ໃນລັກສະນະທີ່ສາມາດລະບຸຄວາມຜິດພາດຕ່າງໆໄດ້ທັນເວລາ.

2.3.2 ໄມ້ຢືນຕົ້ນ: ກ່ອນທີ່ຈະເລີ້ມຕັດໄມ້ ຕ້ອງມີການປະເມີນທີ່ເຊື່ອຖືໄດ້ເຖິງຈຳນວນໄມ້ທີ່ຢືນຕົ້ນຢູ່ ໂດຍມີລະດັບຄວາມຊັດເຈນທີ່ເໝາະສົມສຳລັບແຕ່ລະພື້ນທີ່ທີ່ຈະມີການຕັດ ລວມທັງພື້ນທີ່ທີ່ຖືກຫັນປ່ຽນໃຊ້ປະໂຫຍດທີ່ດິນຢ່າງອື່ນ. ການປະເມີນເຫຼົ່ານີ້ຈະມີການບັນທຶກໄວ້ ທີ່ຈະສາມາດເອົາຂໍ້ມູນມາປຽບທຽບປະລິມານຂອງໄມ້ຢືນຕົ້ນໃນພື້ນທີ່ໜຶ່ງ ກັບປະລິມານການຕັດທີ່ແທ້ຈິງ.

2.3.3 ໄມ້ທ່ອນໃນປ່າ: ຂໍ້ມູນກ່ຽວກັບປະລິມານ ຫຼື ນ້ຳໜັກຂອງໄມ້ທີ່ຕັດແລ້ວພ້ອມກັບຂໍ້ມູນທີ່ເໝາະສົມອື່ນໆ ຈະໄດ້ຮັບການເກັບ ແລະ ບັນທຶກໄວ້ ມີລາຍລະອຽດພຽງພໍ ແລະ ຢູ່ໃນຮູບແບບທີ່ເຮັດໃຫ້ການລວມຍອດກັບຂໍ້ມູນການປະເມີນໄມ້ຢືນຕົ້ນ ແລະ ກັບຂໍ້ມູນໃນຂັ້ນຕອນຕໍ່ໄປໃນຕ່ອງໂສ້ການສະໜອງທີ່ເປັນໄປໄດ້.

2.3.4 ການຂົນສົ່ງ ແລະ ການເກັບມ້ຽນຊົ່ວຄາວ: ຂໍ້ມູນກ່ຽວກັບປະລິມານຂອງວັດສະດຸທີ່ຂົນສົ່ງໄປ ຫຼື ເກັບຮັກສາ ຈະໄດ້ຮັບການບັນທຶກໄວ້, ມີລາຍລະອຽດພຽງພໍ ແລະ ຢູ່ໃນຮູບແບບທີ່ເຮັດໃຫ້ການລວມຍອດ ກັບຂໍ້ມູນໃນຂັ້ນຕອນກ່ອນໜ້ານັ້ນ ແລະ ກັບຂໍ້ມູນໃນຂັ້ນຕອນຕໍ່ໄປໃນຕ່ອງໂສ້ການສະໜອງ ທີ່ເປັນໄປໄດ້.

2.3.5 ການມາເຖິງສະຖານທີ່ແປຮູບເບື້ອງຕົ້ນ: ຂໍ້ມູນກ່ຽວກັບແຫຼ່ງກຳເນີດ ແລະ ປະລິມານຂອງວັດສະດຸທັງໝົດ ທີ່ສົ່ງອອກໄປຍັງສະຖານທີ່ແຫ່ງນັ້ນ ໄດ້ຮັບການບັນທຶກໄວ້ມີລາຍລະອຽດພຽງພໍ ແລະ ຢູ່ໃນຮູບແບບທີ່ເຮັດໃຫ້ການລວມຍອດກັບຂໍ້ມູນໃນຂັ້ນຕອນກ່ອນໜ້ານັ້ນ ແລະ ກັບຂໍ້ມູນໃນຂັ້ນຕອນຕໍ່ໄປ ໃນຕ່ອງໂສ້ການສະໜອງ ທີ່ເປັນໄປໄດ້.

2.3.6 ການຄຸ້ມຄອງພາຍໃນສະຖານທີ່ແປຮູບ: ຂໍ້ມູນທີ່ກ່ຽວກັບປະລິມານຂອງວັດຖຸດິບ ແລະ ຜະລິດຕະພັນທີ່ອອກມາຂັ້ນສຸດທ້າຍຈາກແຫຼ່ງທີ່ກວດແລ້ວວ່າຖືກຕ້ອງຈະໄດ້ຮັບການບັນທຶກໄວ້ ແລະ ມີການຄຳນວນທີ່ເຊື່ອຖືໄດ້ ເຖິງອັດຕາການແປຮູບຈາກວັດຖຸດິບເປັນຜະລິດຕະພັນ. ຈາກຕົວເລກເຫຼົ່ານີ້ຈະມີການລວມຍອດເປັນແຕ່ລະໄລຍະ, ຢ່າງສະໝ່ຳສະເໝີເພື່ອຮັບປະກັນວ່າປະລິມານຂອງຜະລິດຕະພັນທີ່ຜະລິດຂື້ນ ແລະ ກວດແລ້ວວ່າຖືກຕ້ອງຕາມກົດໝາຍບໍ່ຫຼາຍເກີນໄປກວ່າປະລິມານທີ່ຄາດຄະເນຢ່າງສົມເຫດສົມຜົນ ວ່າຈະຜະລິດອອກມາໄດ້ຈາກປະລິມານຂອງວັດຖຸດິບທີ່ໃຊ້ ແລະ ກວດແລ້ວວ່າຖືກຕ້ອງຕາມກົດໝາຍ. ໃນກໍລະນີອັດຕາການແປຮູບສູງກວ່າຄ່າສະເລ່ຍໃນອຸດສາຫະກຳປຸງແຕ່ງໄມ້ກໍ່ຕ້ອງມີການໃຫ້ເຫດຜົນຢ່າງພຽງພໍ.

2.3.7 ການມາເຖິງຈຸດສົ່ງອອກ: ວັດສະດຸທັງໝົດ (ໄມ້ທ່ອນ ຫຼື ຜະລິດຕະພັນໄມ້) ທີ່ມາເຖິງຈຸສົ່ງອອກຈະໄດ້ຮັບການລະບຸ, ຈຳແນກ, ໃຈ້ແຍກ ແລະ ບັນທຶກເປັນລາຍລັກອັກສອນຢ່າງເໝາະສົມທີ່ບົ່ງບອກເຖິງປະລິມານ ແລະ ຕົ້ນກຳເນີດ (ເຊັ່ນ: ຈຸດສຸດທ້າຍຂອງການແປຮູບ) ຂອງວັດສະດຸນັ້ນ. ຂໍ້ມູນນີ້ຈະໄດ້ຮັບການເກັບລວບລວມ ແລະ ບັນທຶກໄວ້ໃນຮູບແບບທີ່ເຮັດໃຫ້ການລວມຍອດກັບຂໍ້ມູນໃນຂັ້ນຕອນກ່ອນໜ້ານັ້ນໃນຕ່ອງໂສ້ການສະໜອງທີ່ເປັນໄປໄດ້ ແລະ ສາມາດໃຊ້ສະໜັບສະໜູນການອອກໃບອະນຸຍາດຕາມຄວາມຖືກຕ້ອງຕາມກົດໝາຍ.

**ຄຳອະທິບາຍ:** ພາຍໃຕ້ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ຈະບໍ່ສາມາດອ້າງເອົາໄມ້ອື່ນໃດມາໄດ້ອີກ ນອກເສຍຈາກທີ່ຜະລິດຂື້ນມາຈາກແຫຼ່ງທີ່ຢັ້ງຢືນຄວາມຖືກຕ້ອງແລ້ວວ່າຖືກຕ້ອງຕາມກົດໝາຍ ໃນແຕ່ລະຂັ້ນຕອນຂອງ






ສາຍການແປຮູບ. ປະລິມານຂອງໄມ້ທີ່ອ້າງວ່າມາຈາກແຫຼ່ງທີ່ກວດກາຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍສາມາດນຳມາກວດທຽບກັບປະລິມານທີ່ຜະລິດອອກມາຈາກແຕ່ລະແຫຼ່ງໄດ້. ນີ້ໝາຍຄວາມວ່າຈະຕ້ອງມີການບັນທຶກຂໍ້ມູນເອົາໄວ້ທັງປັດໃຈເຂົ້າ (inputs) ແລະ ປັດໃຈອອກ (outputs) ຈາກແຕ່ລະຂັ້ນຕອນຂອງການຜະລິດລວມທັງແຫຼ່ງປ່າໄມ້ ແລະ ສະຖານທີ່ແປຮູບໄມ້. ການບັນທຶກຂໍ້ມູນເຫຼົ່ານີ້ຈະຕ້ອງທັນສະໄໝ ແລະ ຂໍ້ມູນຖືກລວບລວມມາ ແລະ ໄດ້ຮັບການວິເຄາະຂໍ້ມູນຢ່າງວ່ອງໄວ ພຽງພໍທີ່ຈະລະບຸຄວາມບໍ່ກົງກັນໄດ້.

## 2.4 ການປະສົມປົນເປໄມ້ ທີ່ກວດກາຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍກັບໄມ້ທີ່ໄດ້ຮັບອະນຸມັດອື່ນໆ

ການຍອມໃຫ້ມີການປົນໄມ້ທ່ອນ ຫຼື ໄມ້ຈາກແຫຼ່ງທີ່ກວດກາການຢັ້ງຢືນຄວາມຖືກຕ້ອງທາງກົດໝາຍ ກັບໄມ້ທ່ອນ ຫຼື ໄມ້ຈາກແຫຼ່ງອື່ນ ຈະຕ້ອງມີການຄຸ້ມຄອງຢ່າງພຽງພໍເພື່ອກັ້ນວັດສະດຸທີ່ມາຈາກແຫຼ່ງທີ່ບໍ່ຮູ້ແຈ້ງ ຫຼື ຕັດມາໂດຍບໍ່ມີສິດທິໃນການຕັດຢ່າງຖືກຕ້ອງຕາມກົດໝາຍອອກໄປ.

2.4.1 ການແຍກກັນຍ່ອມດີກວ່າ ແຕ່ອາດຍອມໃຫ້ມີການປະສົມປົນເປໄດ້ໃນຊ່ວງເວລາທີ່ກຳນົດໄວ້ຕາຍຕົວ (ເຊັ່ນ: 4 ປີ) ຖ້າມີເຫດຜົນຮັບຮອງຄວາມຈຳເປັນ ແລະ ເປັນໄປຕາມບັນທັດຖານໃນຂໍ້ 2.4.2 – 2.4.4.

2.4.2 ການປະສົມປົນເປອາດເກີດຂຶ້ນໄດ້ສະເພາະ ໃນສະຖານທີ່ແປຮູບ ແລະ ສະຖານທີ່ເກັບມ້ຽນຊົ່ວຄາວ ຫຼື ຈຸດລວມໄມ້ທີ່ມີການຄຸ້ມຄອງຄວາມໝັ້ນຄົງປອດໄພພຽງພໍເພື່ອຮັບປະກັນ ວ່າໄມ້ທີ່ບໍ່ຮູ້ແຈ້ງແຫຼ່ງທີ່ມາ ຫຼື ໄມ້ທີ່ຜິດກົດ ໝາຍຈະຖືກກັນອອກໄປ. ບໍ່ອະນຸຍາດໃຫ້ມີການປະສົມປົນເປໃນປ່າ, ລະຫວ່າງການຂົນສົ່ງ ຫຼື ແຄມທາງ ຫຼື ສະຖານທີ່ເກັບມ້ຽນທີ່ບໍ່ມີຄວາມໝັ້ນຄົງປອດໄພຕ່າງໆ.

2.4.3 ມີລະບົບພ້ອມຮັບປະກັນວ່າຈະບໍ່ມີການນຳເຂົ້າວັດສະດຸຈາກແຫຼ່ງທີ່ບໍ່ຮູ້ທີ່ມາຢ່າງແຈ້ງ ແລະ ວັດສະດຸທີ່ຖືກຕັດມາໂດຍບໍ່ມີສິດທິໃນການຕັດຢ່າງຖືກຕ້ອງ ຕາມກົດໝາຍມາຍັງສະຖານທີ່ແປຮູບ ຫຼື ສະຖານທີ່ເກັບທີ່ມີຄວາມໝັ້ນຄົງປອດໄພເຊິ່ງຍິນຍອມໃຫ້ມີການປະສົມປົນເປໄມ້ໄດ້.



2.4.4 ມີລະບົບພ້ອມຮັບປະກັນວ່າປະລິມານຜະລິດຕະພັນຂອງໄມ້ຊະນິດໜຶ່ງທີ່ມີຄຸນນະພາບຢ່າງໜຶ່ງ ເປັນການສະເພາະ ແລະ ໄດ້ຮັບໃບອະນຸຍາດວ່າໄດ້ຜ່ານການກວດກາຢັ້ງຢືນຄວາມເປັນຈິງວ່າຖືກຕ້ອງຕາມກົດໝາຍແລ້ວ ຈະບໍ່ເກີນສັດສ່ວນໃນຜະລິດຕະພັນທັງໝົດ ຕາມປະລິມານຂອງວັດຖຸດິບຂອງໄມ້ຊະນິດດຽວກັນໃນຄຸນນະພາບດຽວກັນ ຈາກແຫຼ່ງທີ່ຖືກຢັ້ງຢືນວ່າຖືກຕ້ອງຕາມກົດໝາຍທີ່ໃຊ້ໃນຂະບວນການຜະລິດ ສຳລັບຜະລິດຕະພັນປະເພດນັ້ນ.

**ຄຳອະທິບາຍ:** ບັນທັດຖານນີ້ລະບຸເງື່ອນໄຂທີ່ໄມ້ມາຈາກແຫຼ່ງທີ່ມີການຢັ້ງຢືນຄວາມຖືກຕ້ອງດ້ານກົດໝາຍ ພາຍໃນລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ອາດປະສົມປົນເປກັບໄມ້ທີ່ໄດ້ຮັບອະນຸມັດອື່ນໆ ເຊິ່ງອາດເປັນໄມ້ທີ່ນຳເຂົ້າຢ່າງຖືກກົດໝາຍ (ເບິ່ງຂໍ້ 2.5) ຫຼື ໄມ້ທີ່ມີການໃຫ້ສິດທິການຕັດໄມ້ ແລະ ຢູ່ໃນຂະບວນການການກວດກາ ຄວາມຖືກຕ້ອງຕາມກົດໝາຍ. ບັນທັດຖານນີ້ກຳນົດໃຫ້ມີການຄຸ້ມຄອງ ພ້ອມໃນສະຖານທີ່ທີ່ຍອມໃຫ້ມີການປະສົມປົນເປໄມ້ເກີດຂຶ້ນ ແຕ່ກັ້ນໄມ້ອື່ນໆທີ່ມາຈາກແຫຼ່ງທີ່ບໍ່ຮູ້ແຫຼ່ງທີ່ມາຊັດເຈນ ຫຼື ຈາກແຫຼ່ງທີ່ບໍ່ໃຫ້ມີການໃຫ້ສິດທິໃນການຕັດອອກໄປ ບໍ່ໃຫ້ເຂົ້າມາປະປົນ.

## 2.5 ຜະລິດຕະພັນໄມ້ນຳເຂົ້າ

ມີການຄຸ້ມຄອງຢ່າງພຽງພໍເພື່ອຮັບປະກັນວ່າຜະລິດຕະພັນໄມ້ນຳເຂົ້າທັງໝົດຖືກນຳເຂົ້າມາຢ່າງຖືກຕ້ອງຕາມກົດໝາຍ[2].

2.5.1 ມີລະບົບພ້ອມທີ່ຈະຮັບປະກັນວ່າໄມ້ທ່ອນ ຫຼື ຜະລິດຕະພັນໄມ້ຖືກນຳເຂົ້າມາຖືກຕ້ອງຕາມກົດໝາຍ.

2.5.2 ຖ້າຕົກລົງກັບປະເທດຄູ່ຮ່ວມສັນຍາໄດ້ ຈະມີລະບົບພ້ອມທີ່ຈະຮັບປະກັນວ່າໄມ້ທ່ອນ ຫຼື ຜະລິດຕະພັນໄມ້ທີ່ນຳເຂົ້າມາຈາກການຜະລິດຂຶ້ນມາຢ່າງຖືກຕ້ອງຕາມກົດໝາຍ ແລະ ສົ່ງອອກຈາກປະເທດທີ່ຕັດໄມ້ນັ້ນ.

**ຄຳອະທິບາຍ:** ໄມ້ທີ່ນຳເຂົ້າໄປຍັງປະເທດຄູ່ຮ່ວມສັນຍາຈາກປະເທດທີສາມອາດລວມໄວ້ໃນລະບົບຮັບປະກັນຄວາມຖືກຕ້ອງຕາມກົດໝາຍຂອງປະເທດຄູ່ຮ່ວມສັນຍານັ້ນໄດ້. ເຖິງຢ່າງໃດກໍ່ຕາມ, ປະເທດຄູ່ຮ່ວມຈຳເປັນຕ້ອງຮັບປະ ກັນວ່າໄມ້ອື່ນໆທີ່ນຳເຂົ້າມາ ແລະ ຈະນຳໄປລວມໄວ້ໃນລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍນັ້ນສາມາດຕິດຕາມຜົນໄປຍັງເອກະສານການສົ່ງອອກທີ່ຖືກຕ້ອງຕາມກົດໝາຍຈາກປະເທດຕົ້ນກຳເນີດໄດ້. ປະເທດຄູ່ຮ່ວມອາດເອົາລະບົບ ລະບົບໜຶ່ງມາໃຊ້ການຮັບປະກັນວ່າໄມ້ທີ່ນຳເຂົ້າມາທັງໝົດໂດຍມີຈຸດມຸ້ງໝາຍທີ່ສົ່ງອອກໄປພາຍໃຕ້ລະບົບການຮັບປະກັນຄວາມຖືກຕ້ອງທາງກົດໝາຍຂອງໄມ້ນັ້ນ ໄດ້ຮັບການຜະລິດຂຶ້ນມາໃນປະເທດຕົ້ນກຳເນີດ (ເຊັ່ນ: ດ້ວຍການພັດທະນາລະບົບໃນການກວດຢັ້ງຢືນ ຄວາມຖືກຕ້ອງຮ່ວມກັບປະເທດຜູ້ຜະລິດ). ເຖິງຢ່າງໃດກໍ່ຕາມລະບົບດັ່ງກ່າວນີ້ບໍ່ໄດ້ຢູ່ໃນຂໍ້ບັງຄັບ ຂອງລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ.

[2] ປະເທດຄູ່ຮ່ວມຈະໄດ້ຮັບການກະຕຸ້ນໃຫ້ພັດທະນາແບບແຜນການຮັບປະກັນຄວາມຖືກຕ້ອງຕາມກົດໝາຍທີ່ລວມເອົາຂໍ້ກຳນົດໃຫ້ຜູ້ເຮັດກິດຈະການໄມ້ທຸກບໍລິສັດຮັບປະກັນວ່າໄມ້ທັງໝົດ ບໍ່ວ່າຈະເປັນໄມ້ໃນປະເທດ ຫຼື ໄມ້ທີ່ນຳເຂົ້າມາ ມາຈາກແຫຼ່ງທີ່ຖືກກົດໝາຍ.



ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂຶ້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂຶ້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ່ມນີ້ (ມີນາ 2007)





# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ລະບົບຮັບປະກັນຄວາມຖືກຕ້ອງດ້ານກົດໝາຍ: ຂໍ້ກຳນົດເພື່ອການກວດຢັ້ງຢືນຄວາມເປັນຈິງ

### 1. ຄວາມເປັນມາ

ອົງປະກອບຫຼັກປະການໜຶ່ງຂອງແຜນການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບຄືການພັດທະນາຂໍ້ຕົກລົງການເປັນຄູ່ຮ່ວມແບບສະໝັກໃຈ ລະຫວ່າງ ສະຫະພາບເອີຣົບ ກັບປະເທດຜູ້ຜະລິດໄມ້ຕ່າງໆ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 6) ເນື້ອໃນສຳຄັນຂອງຂໍ້ຕົກລົງດັ່ງກ່າວຄື ການຕັ້ງລະບົບການໃຫ້ໃບອະນຸຍາດ ເພື່ອຮັບປະກັນວ່າມີແຕ່ຜະລິດຕະພັນໄມ້ທີ່ຜະລິດຂຶ້ນຕາມກົດໝາຍແຫ່ງຊາດຂອງປະເທດສົ່ງອອກໄມ້ເທົ່ານັ້ນທີ່ອາດນາເຂົ້າໄປໃນສະຫະພາບເອີຣົບໄດ້ ພາຍໃຕ້ລະບົບການອອກໃບອະນຸຍາດ ຈະຫ້າມນຳໄມ້ທີ່ສົ່ງອອກມາຈາກປະເທດຄູ່ຮ່ວມສັນຍາສົ່ງໄມ້ເຂົ້າໄປໃນສະຫະພາບເອີຣົບ ຍົກເວັ້ນໄມ້ນັ້ນຈະມີໃບອະນຸຍາດທີ່ໃຊ້ໄດ້.

ການອອກໃບອະນຸຍາດ ຈະກຳນົດການນຳລະບົບການຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ (LAS) ມາໃຊ້ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 3) ພາຍໃຕ້ລະບົບນີ້ການອອກໃບອະນຸຍາດ ໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຈະຕ້ອງມີຫຼັກຖານເພື່ອຢັ້ງຢືນວ່າໄມ້ນັ້ນຜະລິດຂຶ້ນຢ່າງຖືກຕ້ອງຕາມກົດໝາຍ ແລະ ສາມາດຕິດຕາມໄປຍັງແຫຼ່ງກຳເນີດທີ່ຖືກກົດໝາຍໄດ້ ເຊິ່ງຈະເຮັດໄດ້ຕ້ອງມີສາມເງື່ອນໄຂດັ່ງນີ້:

- ຄຳນິຍາມຂອງໄມ້ທີ່ຜະລິດຂຶ້ນຢ່າງຖືກຕ້ອງຕາມກົດໝາຍ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 2).
- ກົນໄກການຄຸ້ມຄອງຕ່ອງໂສ້ການສະໜອງ (ເຊັ່ນ: ລະບົບການຕິດຕາມໄມ້ ຫຼື ຕ່ອງໂສ້ການຄຸ້ມຄອງ) (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 4).
- ວິທີການກວດສອບວ່າໄດ້ປະຕິບັດຕາມຂໍ້ກຳນົດຂອງຄຳນິຍາມຄວາມຖືກຕ້ອງຂອງໄມ້ຕາມກົດໝາຍ ແລະ ຕ່ອງໂສ້ການຄວບຄຸມຂໍ້ມູນນີ້ສະເໜີຕໍ່ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ ເພື່ອອະນຸຍາດໃຫ້ມີການອອກໃບອະນຸຍາດ.

ເອກະສານນີ້ອະທິບາຍອົງປະກອບທີ 3 ຂ້າງຕົ້ນໂດຍມີຫຼັກການ ແລະ ບັນທັດຖານທີ່ກ່ຽວຂ້ອງຕ່າງໆ.


ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ


ຫຼັກການເຫຼົ່ານີ້ອະທິບາຍເຖິງຜົນຮັບ ທີ່ຈະຕ້ອງເຮັດໃຫ້ເກີດຂຶ້ນຫຼາຍກວ່າຈະແນະນຳວິທີການທີ່ຈະເຮັດໃຫ້ເກີດຜົນຮັບນັ້ນ ເຊິ່ງຈະເປັນການໃຫ້ຂອບເຂດແກ່ປະເທດຄູ່ຮ່ວມສັນຍາໄປກຳນົດທິດທາງ ທີ່ດີທີ່ສຸດໃນການເຮັດໃຫ້ການປະຕິບັດຕາມການບັນລຸຜົນ ພາຍໃຕ້ຜົນປະໂຫຍດຂອງຊາດຕົນເປັນຕົ້ນຕໍ.

### 2. ການກວດກາຢືນຢັນການປະຕິບັດຕາມກົດໝາຍ ແລະ ສາຍການຄຸ້ມຄອງ

ໃບອະນຸຍາດ FLEGT ຈະອອກໃຫ້ບົນພື້ນຖານຂອງຫຼັກຖານທີ່ນຳມາສະແດງຕໍ່ໜ່ວຍງານທີ່ມີອຳນາດ ໃນການອອກໃບອະນຸຍາດວ່າໄດ້ບັນລຸຕາມຂໍ້ກຳນົດທັງໝົດຕາມນິຍາມຄວາມຖືກຕ້ອງຕາມກົດໝາຍ ຂອງປະເທດຄູ່ຮ່ວມສັນຍາແລ້ວ ຫຼັກຖານນີ້ມັກຈະໄດ້ມາຈາກການກວດກາກົດຈະກຳໃນໜ່ວຍຄຸ້ມຄອງປ່າໄມ້ ແລະ ສະຖານທີ່ແປຮູບໄມ້ເພື່ອກວດກາຄວາມຖືກຕ້ອງຢ່າງສະໝ່ຳສະເໝີ.






- ການປະຕິບັດຕາມຂໍ້ກຳນົດ ຂອງນິຍາມຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້ທັງໃນປ່າ ແລະ ໃນສະຖານທີ່ແປຮູບດ້ວຍໃນກໍລະນີທີ່ຄຳນິຍາມກຳນົດໄວ້.
- ການດຳເນີນການຄຸ້ມຄອງຕ່ອງໂສ້ການສະໜອງ ໃນແຕ່ລະຈຸດທີ່ຜະລິດຕະພັນຖືກຈັດສົ່ງໄປ ຫຼື ໄດ້ຮັບມາ ຫຼື ປຸງແຕ່ງໄປເຊັ່ນ: ໂຮງເລື່ອຍ, ໂຮງງານໄມ້ອັດ ເພື່ອກວດກາວ່າບໍ່ມີສິ່ງໃດທີ່ບໍ່ໄດ້ມີໃນບັນຊີຫຼຸດລອດເຂົ້າມາໃນຂະບວນການຜະລິດ.

ການກວດສອບຢືນຢັນຄວາມຖືກຕ້ອງຈະສົ່ງຜົນໃຫ້ເກີດຫຼັກຖານທີ່ຊັດເຈນ ແລະ ເຊື່ອຖືໄດ້ທີ່ສາມາດນຳໄປສະເໜີຕໍ່ໜ່ວຍງານທີ່ມີຄວາມສາມາດໃນການອອກໃບອະນຸຍາດ ແລະ ຄະນະຕິດຕາມຜົນການດຳເນີນງານທີ່ເປັນອິດສະຫຼະ ໂດຍສະແດງໃຫ້ເຫັນວ່າ.

- ສິ່ງທີ່ສົ່ງອອກໄປຕ່າງປະເທດນັ້ນໄດ້ຮັບການຜະລິດຂຶ້ນມາໃນລັກສະນະ ທີ່ຖືກຕ້ອງຕາມກົດໝາຍທັງໝົດ ທີ່ລວມໄວ້ໃນນິຍາມຄວາມຖືກຕ້ອງຕາມກົດໝາຍ
- ມີການຄຸ້ມຄອງຢ່າງພຽງພໍເພື່ອຮັບປະກັນວ່າ ຜະລິດຕະພັນທີ່ໄດ້ຮັບໃບອະນຸຍາດແມ່ນເຮັດມາຈາກໄມ້ ທີ່ມາຈາກຂະບວນການຖືກຕ້ອງຕາມກົດໝາຍເທົ່ານັ້ນ.

ອົງການທີ່ເຮັດໜ້າທີ່ກວດສອບຢັ້ງຢືນຄວາມຖືກຕ້ອງຄວນຈະມີຄຸນນະສົມບັດທີ່ເໝາະສົມ ແລະ ໃຊ້ລະບົບທີ່ເຂົ້າກັນກັບຫຼັກການປະຕິບັດໃນການກວດສອບອັນເປັນທີ່ຍອມຮັບ. ສຳລັບໜ່ວຍງານພາຍນອກ (ເຊັ່ນ: ໜ່ວຍງານທີ່ບໍ່ແມ່ນຂອງລັດ) ການໄດ້ຮັບການຮັບຮອງຖານະຕາມມາດຖານອັນເປັນທີ່ຍອມຮັບອາດໃຊ້ເປັນຫຼັກຖານໄດ້ວ່າມີຄຸນນະສົມບັດເຊັ່ນນັ້ນ.

## 3. ຫຼັກການ ແລະ ບັນທັດຖານສຳລັບກິດຈະກຳການກວດສອບຢັ້ງຢືນຄວາມຖືກຕ້ອງ



ການກວດສອບຢັ້ງຢືນຄວາມຖືກຕ້ອງ ເຮັດໃຫ້ມີການຄຸ້ມຄອງທີ່ພຽງພໍເພື່ອຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍ ຂອງໄມ້ທີ່ຈະມີການອອກໃບອະນຸຍາດໃຫ້. ການກວດສອບຢັ້ງຢືນຄວາມຖືກຕ້ອງຈະຕ້ອງເຂັ້ມແຂງ ແລະ ມີປະສິດທິຜົນພຽງພໍທີ່ຈະຮັບປະກັນວ່າຖ້າມີການບໍ່ປະຕິບັດຕາມຂໍ້ກຳນົດໃດໆ ບໍ່ວ່າຈະຢູ່ໃນປ່າ ຫຼື ພາຍໃນສາຍການຈັດຫາຈັດສົ່ງ ຈະມີການລະບຸບັນຫານີ້ອອກມາ ແລະ ມີການແກ້ບັນຫານັ້ນໃນເວລາທີ່ເໝາະສົມ. ຄວາມເຂັ້ມງວດຂອງການກວດສອບຄວນຈະໄດ້ສັດສ່ວນທີ່ເໝາະສົມກັບສະພາບການຂອງປະເທດຄູ່ຮ່ວມສັນຍານັ້ນໆ.

### 3.1 ການຈັດລະບົບການກວດສອບຄວາມຖືກຕ້ອງ

ການກວດສອບຢັ້ງຢືນຄວາມຖືກຕ້ອງ ສາມາດດຳເນີນການໄດ້ໂດຍລັດຖະບານ, ຜູ້ເຂົ້າຮ່ວມໃນຕະຫຼາດ ຫຼື ອົງການທີສາມ ຫຼື ທັງສາມຢ່າງນີ້ລວມກັນ ເຊິ່ງມີຊັບພະຍາກອນ, ລະບົບການຈັດການ ແລະ ບຸກຄົນທີ່ມີທັກສະ ແລະ ໄດ້ຮັບການເຝິກຝົນພຽງພໍ ແລະ ມີກົນໄກທີ່ເຂັ້ມແຂງ ແລະ ມີປະສິດທິຜົນ ໃນການຄຸ້ມຄອງຜົນປະໂຫຍດທັບຊ້ອນ.

3.1.1 ການກວດສອບຢັ້ງຢືນຄວາມຖືກຕ້ອງດຳເນີນການໂດຍ ມີການລະບຸຊື່ອົງກອນໃດອົງກອນໜຶ່ງ ຫຼື ຫຼາຍກວ່າຢ່າງຊັດເຈນ ແລະ ເປັນອົງກອນທີ່ມີຄວາມສາມາດ ແລະ ມີຊັບພະຍາກອນພຽງພໍ.

3.1.2 ບຸກຄະລາກອນທີ່ເຮັດວຽກກວດສອບຢັ້ງຢືນຄວາມຖືກຕ້ອງທັງໝົດມີທັກສະ ແລະ ປະສົບການທີ່ຈຳເປັນຕໍ່ການປະຕິບັດງານຂອງຕົນ ແລະ ໄດ້ຮັບການກຳກັບດູແລຢ່າງພຽງພໍ.

3.1.3 ກິດຈະກຳການກວດສອບຢັ້ງຢືນຄວາມຖືກຕ້ອງດຳເນີນໄປພາຍໃຕ້ລະບົບການຈັດການທີ່ມີການບັນທຶກໄວ້ຢ່າງພຽງພໍ ແລະ ມີວິທີການທີ່ຈະຮັບປະກັນຄວາມໂປ່ງໃສຂອງລະບົບ.

3.1.4 ລະບົບທີ່ເຂັ້ມແຂງພ້ອມຄົບຖ້ວນເພື່ອຮັບປະກັນວ່າຜົນປະໂຫຍດທັບຊ້ອນທັງໝົດທີ່ອາດເກີດຂຶ້ນ ທັງໃນລະດັບບຸກຄົນ ແລະ ລະດັບອົງກອນ ຈະຖືກຄົ້ນຫາລະບຸອອກມາບັນທຶກໄວ້ ແລະ ມີການຈັດການ ແລະ ຄຸ້ມຄອງມີປະສິດທິຜົນ.

3.1.5 ໃນກໍລະນີທີ່ການກວດສອບຢັ້ງຢືນຄວາມຖືກຕ້ອງປະຕິບັດໂດຍບຸກຄະລາກອນທີ່ເຮັດໜ້າທີ່ຕິດຕາມຜົນໃນພາກສະໜາມ ເຊິ່ງກ່ຽວຂ້ອງກັບກິດຈະກຳປ່າໄມ້ (ເຊັ່ນ: ເຈົ້າໜ້າທີ່ພິທັກປ່າໄມ້) ຢູ່ເປັນປະຈຳສະໝໍ່າສະເໝີ ຈະຕ້ອງມີອົງປະກອບໜຶ່ງຂອງຂະບວນການກວດສອບຢັ້ງຢືນຄວາມຖືກຕ້ອງ ທີ່ດຳເນີນການໂດຍບຸກຄົນອື່ນທີ່ບໍ່ໄດ້ກ່ຽວຂ້ອງເປັນປະຈຳ, ສະໝໍ່າສະເໝີກັບ ກິດຈະກຳປ່າໄມ້ ຫຼື ສາຍງານການບໍລິຫານຈັດການບຸກຄະລາກອນ ທີ່ເຮັດໜ້າທີ່ຕິດຕາມຜົນໃນສະໜາມນັ້ນ.

### 3.2 ການກວດສອບຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍໃນປ່າ

ມີຂອບເຂດທີ່ກຳນົດໄວ້ຢ່າງຊັດເຈນວ່າຈະຕ້ອງກວດສອບຫຍັງແດ່. ວິທີການກວດສອບໄດ້ຮັບການບັນທຶກໄວ້ ແລະ ຮັບປະກັນວ່າຂະບວນການເປັນໄປໄດ້ຢ່າງມີລະບົບ, ໂປ່ງໃສ[1], ມີຫຼັກຖານມີການດຳເນີນການເປັນແຕ່ລະໄລຍະສະໝໍ່າສະເໝີ ແລະ ຄຸ້ມຄອງທຸກສິ່ງທີ່ຖືກລວມໄວ້ໃນຂອບເຂດນັ້ນ.

3.2.1 ມີການກຳນົດຂອບເຂດທີ່ຊັດເຈນ ມີລາຍລະອຽດ ແລະ ການບັນທຶກວ່າຈະຕ້ອງກວດສອບຫຍັງແດ່ ເຊິ່ງໃນນັ້ນຂັ້ນຕໍ່າສຸດຈະຕ້ອງບັນລຸຕາມຂໍ້ກຳນົດທັງໝົດທີ່ບັນຈຸໄວ້ໃນນິຍາມຄວາມຖືກຕ້ອງຕາມກົດໝາຍ.






3.2.2 ວິທີການກວດສອບທີ່ໄດ້ຮັບການບັນທຶກໄວ້ຢ່າງເໝາະສົມ, ໂປ່ງໃສ, ມີຄວາມຍຸດຕິທຳ ແລະ ມີປະສິດທິຜົນ ແລະ ລວມເຖິງການກວດເອກະສານຢ່າງພຽງພໍ. ມີການບັນທຶກການດຳເນີນງານ ແລະ ການດຳເນີນງານ ເຊັ່ນດຽວກັບການເກັບລວບລວມຂໍ້ມູນທີ່ກ່ຽວຂ້ອງຈາກຝ່າຍທີ່ມີຄວາມສົນໃຈພາຍນອກ.

3.2.3 ການກວດສອບຈະປະຕິບັດເປັນໄລຍະຢ່າງສະໝ່ຳສະເໝີ ແລະ ມີການເດີນທາງໄປຢ້ຽມສະຖານທີ່ ເພື່ອກວດສອບໂດຍບໍ່ມີການປະກາດໃຫ້ຊາບລ່ວງໜ້າ. ຄວາມຖີ່ ແລະ ຄວາມເຂັ້ມງວດຂອງການກວດສອບຄວນຈະໄດ້ສັດສ່ວນຂອງຄວາມເຂັ້ມແຂງຂອງລະບົບທີ່ໃຊ້ດຳເນີນການ. ເອກະສານທີ່ບັນທຶກກິດ ຈະກຳການກວດສອບຈະຕ້ອງຖືກເກັບໄວ້ໃນຮູບແບບທີ່ອະນຸຍາດໃຫ້ມີການຕິດຕາມຜົນໂດຍຜູ້ກວດສອບພາຍໃນ ແລະ ຄະນະຕິດຕາມຜົນການດຳເນີນງານທີ່ເປັນອິດສະຫຼະ.

## 3.3 ການກວດສອບຢັ້ງຢືນຄວາມຖືກຕ້ອງຂອງລະບົບຄຸ້ມຄອງຕ່ອງໂສ້ການສະໜອງ

ມີຂອບເຂດຕັ້ງໄວ້ຢ່າງຊັດເຈນວ່າຈະກວດສອບຫຍັງແດ່ ເຊິ່ງຄຸ້ມຄອງຕ່ອງໂສ້ການສະໜອງທັງໝົດຈາກການຕັດຕົ້ນໄມ້ ໄປຈົນເຖິງການສົ່ງອອກ. ວິທີການກວດສອບໄດ້ຮັບການບັນທຶກໄວ້ ແລະ ຮັບປະກັນວ່າຂະບວນການເປັນລະບົບ, ໂປ່ງໃສ, ມີຫຼັກຖານ, ດຳເນີນການເປັນໄລຍະຢ່າງສະໝ່ຳສະເໝີ, ຄຸ້ມຄອງທຸກຢ່າງທີ່ຖືກລວມໄວ້ໃນຂອບເຂດ ແລະ ລວມເຖິງການລວມຍອດກັນລະຫວ່າງແຕ່ລະຂັ້ນຕອນໃນຕ່ອງໂສ້ການສະໜອງຢ່າງສະໝ່ຳສະເໝີໃນເວລາທີ່ເໝາະສົມ.

[2] ຂະບວນການຄວນຈະລວມເອົາການຈັດໃຫ້ມີການຮັກສາຄວາມປອດໄພ, ໃຫ້ຂໍ້ມູນທີ່ອ່ອນໄຫວໃນດ້ານການຄ້າ ແລະ ໃນຮູບແບບນີ້. ຄວາມໂປ່ງໃສໝາຍເຖິງຂໍ້ມູນທີ່ກ່ຽວຂ້ອງກັບການກວດສອບຄວາມຖືກຕ້ອງຕາມກົດໝາຍ ແລະ ຕ່ອງໂສ້ການສະໜອງ.

3.3.1 ມີຂອບເຂດທີ່ຊັດເຈນ, ມີລາຍລະອຽດ ແລະ ມີການບັນທຶກໄມ້ວ່າຈະຕ້ອງກວດສອບຫຍັງແດ່ ເຊິ່ງສອດຄ່ອງກັບຫຼັກການສຳລັບການຄຸ້ມຄອງຕ່ອງໂສ້ການສະໜອງຕາມທີ່ຕັ້ງໄວ້ໃນສ່ວນທີ 2.

3.3.2 ມີລະບົບທີ່ມີການບັນທຶກໄວ້ວ່າ ການປະຕິບັດຕາມຂໍ້ກຳນົດຕໍ່ຕ່ອງໂສ້ການສະໜອງຈະຕ້ອງໄດ້ຮັບການກວດສອບຢ່າງໃດ.

3.3.3 ມີການກວດສອບເປັນປະຈຳສະໝ່ຳສະເໝີວ່າ ການຄຸ້ມຄອງຕາມທີ່ກຳນົດໄວ້ນັ້ນ ໄດ້ຖືກນຳມາໃຊ້ຕະຫຼອດຕ່ອງໂສ້ການສະໜອງ. ຄວາມເຄັ່ງຂັດຂອງການກວດສອບຄວນຈະເປັນສັດສ່ວນ ກັບຄວາມເຂັ້ມແຂງຂອງລະບົບທີ່ນຳມາດຳເນີນການ ເພື່ອຮັບປະກັນວ່າມີການເຊື່ອຟັງປະຕິບັດຕາມ. ເອກະສານທີ່ບັນທຶກກິດຈະກຳການກວດສອບໄດ້ຮັບການເກັບຮັກສາໄວ້ໃນຮູບແບບທີ່ອະນຸຍາດໃຫ້ມີການຕິດຕາມຜົນໂດຍຜູ້ກວດສອບພາບໃນ ແລະ ຄະນະຕິດຕາມຜົນການດຳເນີນງານທີ່ເປັນອິດສະຫຼະ.

3.3.4 ມີການເຊື່ອມຂໍ້ມູນ ລະຫວ່າງແຕ່ລະຂັ້ນຕອນໃນຕ່ອງສ້ອງການສະໜອງ. ວິທີການລວມຍອດ ແລະ ລະບຸວ່າໃຜເປັນຜູ້ຮັບຜິດຂອບ. ຈະມີການຈັດການກັບການລວມຍອດຢ່າງໃດ ແລະ ເມື່ອໃດ. ທັງໝົດນີ້ຈະໄດຮັບການບັນທຶກໄວ້ຢ່າງຊັດເຈນ ແລະ ສົມເຫດສົມຜົນ.

## 3.4 ການປະຕິບັດຕາມຂໍ້ກຳນົດ

ໃນກໍລະນີທີ່ພົບວ່າມີການບໍປະຕິບັດຕາມຂໍ້ກຳນົດ, ຕ້ອງມີກົນໄກທີ່ມີປະສິດທິຜົນ ແລະ ໃຊ້ການໄດ້ ເພື່ອກຳນົດ ແລະ ບັງຄັບໃຊ້ແຜນປະຕິບັດການແກ້ໄຂໃຫ້ຖືກຕ້ອງຢ່າງເໝາະສົມ.

3.4.1 ມີລະບົບພ້ອມສຳລັບການແກ້ໄນແຜນປະຕິບັດການໃຫ້ຖືກຕ້ອງ ແລະປະຕິບັດການປ້ອງກັນໃນກໍລະນີທີ່ກວດສອບພົບການບໍ່ປະຕິບັດຕາມຂໍ້ກຳນົດ ແລະ ມີການບັງຄັບໃຊ້ການດຳເນີນງານຂອງແຜນປະຕິບັດການນັ້ນ.





ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂື້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂື້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງູຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ້ມນີ້ (ມີນາ 2007)






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ

### 1. ຂໍ້ຕົກລົງການເປັນຄູ່ຮ່ວມດ້ວຍຄວາມສະມັກໃຈແມ່ນຫຍັງ?

ໃນຖານະທີ່ສະຫະພາບເອີຣົບເປັນຜູ້ບໍລິໂພກໄມ້ ລາຍສຳຄັນໃນແຜນການປະຕິບັດການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ສະຫະພາບເອີຣົບຍອມຮັບວ່າມີສ່ວນຮັບຜິດຊອບ ຮ່ວມກັບການເຮັດໄມ້ເຖື່ອນ ແລະ ການຄ້າທີ່ກ່ຽວຂ້ອງເຖິງຢ່າງໃດກໍ່ຕາມຄະນະນີ້ຍັງບໍ່ມີກົນໄກໃນທາງປະຕິບັດໃນການຈຳແນກ ແລະ ກັ້ນໄມ້ທີ່ຜິດກົດໝາຍອອກຈາກຕະລາດເອີຣົບ.

ດັ່ງນັ້ນ, ແຜນການປະຕິບັດງານ (FLEGT) ຈຶ່ງສະເໜີໃຫ້ມີການພັດທະນະຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະມັກໃຈ (Voluntary Partnership Agreement: VPAs) ຂື້ນລະຫວ່າງສະຫະພາບເອີຣົບ ກັບປະເທດຜູ້ຜະລິດໄມ້ເປັນແຕ່ລະປະເທດ (ປະເທດຄູ່ຮ່ວມ FLEGT ຫຼື FLEGT Partnership Countries) ໃນທີ່ສຸດແລ້ວຂໍ້ຕົກລົງ ເຫຼົ່ານີ້ໄດ້ຮັບການອອກແບບມາເພື່ອລົບລ້າງໄມ້ທີ່ຜະລິດຂື້ນມາຢ່າງຜິດກົດໝາຍຈາກການຄ້າລະຫວ່າງປະເທດ ແລະ ພາຍໃນປະເທດຂອງປະເທດຄູ່ຮ່ວມສັນຍາ.

ຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະມັກໃຈ ເປັນຂໍ້ຕົກລົງທີ່ມີຜົນຜູກຂາດລະຫວ່າງສະຫະພາບເອີຣົບກັບປະເທດຄູ່ຮ່ວມສັນຍາ ໂດຍທີ່ສະຫະພາບເອີຣົບກັບປະເທດຄູ່ຮ່ວມອາສາຮ່ວມກັນດຳ ເນີນງານໃນການສະໜັບສະໜູນຈຸດເປົ້າໝາຍຂອງແຜນປະຕິບັດງານ FLEGT ແລະ ເພື່ອດຳເນີນການອອກໃບອະນຸຍາດ ກ່ຽວກັບໄມ້ ເພື່ອໃຫ້ເປັນໄປຕາມຂັ້ນຕອນດັ່ງກ່າວນັ້ນ ຈຶ່ງມີການຮັບເອົາລະບຽບໃໝ່ຂອງເອີຣົບວ່າ ດ້ວຍການດຳເນີນການ ອອກໃບອະນຸຍາດ FLEGT ມາໃຊ້[1].

### 2. ຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະມັກໃຈ (VPAs) ຄຸ້ມຄອງສ່ວນອັນໃດແດ່?

VPAs ມຸ້ງໝາຍທີ່ຈະຊ່ວຍເສີມການໃຫ້ຄຳໝັ້ນສັນຍາຂອງ ປະເທດຜູ້ຜະລິດໄມ້ທີ່ຈະສົ່ງເສີມການຄຸ້ມຄອງປ່າຢ່າງຍືນຍົງ ໂດຍການສະໜັບສະໜູນການປັບປຸງການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການຄຸ້ມຄອງ.

ອົງປະກອບໜຶ່ງທີ່ຄືກັນໃນຂໍ້ຕົກລົງທັງໝົດບໍ່ວ່າຈະເປັນ ປະເທດຄູ່ຮ່ວມຕ້ອງມີ ຫຼືໃຫ້ຄຳໝັ້ນສັນຍາວ່າຈະພັດທະນາ ໃຫ້ມີໂຄງສ້າງທາງດ້ານກົດໝາຍ ແລະ ດ້ານການບໍລິຫານທີ່ໜ້າເຊື່ອຖື ແລະ ລະບົບທາງເຕັກນິກທີ່ຈະກວດສອບຢັ້ງຢືນຄວາມຖືກຕ້ອງວ່າ ໄມ້ຖືກຜະລິດອອກມາຕາມກົດໝາຍແຫ່ງຊາດຂອງປະເທດນັ້ນເຊິ່ງໝາຍຄວາມວ່າ:

- ມີພັນທະທີ່ຮັບປະກັນວ່າກົດໝາຍປ່າໄມ້ທີ່ນຳມາໃຊ້ນັ້ນສອດຄ່ອງກັນເຂົ້າໃຈໄດ້ ແລະ ບັງຄັບໃຊ້ໄດ້ ແລະ ສົ່ງເສີມການຄຸ້ມຄອງປ່າໄມ້ຢ່າງຍືນຍົງ.
- ມີການພັດທະນາລະບົບທາງເຕັກນິກ ແລະ ທາງດ້ານການບໍລິຫານໄປຕິດຕາມຜົນການດຳເນີນການຕັດໄມ້, ຈຳແນກ ແລະ ຕິດຕາມໄມ້ຕັ້ງແຕ່ຈຸດທີ່ມີການຕັດຕົ້ນໄມ້ ໄປຈົນເຖິງຕະລາດ ຫຼື ຈຸດສົ່ງອອກ.
- ມີພັນທະທີ່ຈະປັບປຸງຄວາມໂປ່ງໃສ ແລະ ພາລະຄວາມຮັບຜິດຊອບໃນການກຳກັບດູແລຮັກສາປ່າໄມ້.
- ມີການສ້າງກົນໄກການກວດສອບ ແລະ ສ້າງຄວາມສົມມະດຸນໃນລະບົບການຕິດຕາມຜົນ ແລະ ການໃຫ້ໃບອະນຸຍາດ ລວມທັງການນຳລະບົບການຕິດຕາມຜົນທີ່ເປັນອິດສະຫຼະມາໃຊ້.
- ມີການພັດທະນາຂະບວນການ ໃນການອອກໃບອະນຸຍາດການສົ່ງອອກໄມ້ທີ່ຕັດມາຢ່າງຖືກຕ້ອງຕາມກົດໝາຍ.

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

ເຖິງຢ່າງໃດກໍ່ຕາມ, VPAs ຍັງຈຳເປັນຕ້ອງຍອມຮັບວ່າ ເງື່ອນໄຂທີ່ມີຜົນກະທົບຕໍ່ການຄຸ້ມຄອງຮັກສາປ່າໄມ້ ແລະ ການບັງຄັບໃຊ້ກົດໝາຍໃນປະເທດຄູ່ຮ່ວມຕ່າງໆນັ້ນແຕກຕ່າງກັນອອກໄປ ໃນແຕ່ລະປະເທດ VPA ຈະຕ້ອງໄດ້ນຳປັດໃຈຕ່າງໆມາພິຈາລະນາເຊັ່ນ: ບັນຫາການຄຸ້ມຄອງຮັກສາປ່າໄມ້ຂອງຊາດ, ກົດໝາຍທີ່ກ່ຽວຂ້ອງກັບປ່າໄມ້, ລັກສະນະຂອງສິດທິເໜືອປ່າໄມ້, ສິດທິເໜືອທີ່ດິນ, ລັກສະນະຂອງການຄ້າໄມ້, ກິດຈະກຳຕ່າງໆທີ່ມີຢູ່ໃນພາກສ່ວນປ່າໄມ້ໃນຂະນະນັ້ນ ແລະ ສັກກະຍະພາບທີ່ຈະນຳຂໍ້ຕົກລົງມາປະຕິບັດ.

ອົງປະກອບຫຼັກທີ່ຈະຕ້ອງພິຈາລະນາໃນການອອກແບບ ແລະ ການນຳ VPAs ມາປະຕິບັດຄວນຈະລວມເຖິງ:

- ການສ້າງຄວາມປອດໄພທາງສັງຄົມ VPAs ຄວນຈະເຮັດໃຫ້ເກີດຜົນກະທົບໃນທາງລົບໃຫ້ໜ້ອຍທີ່ສຸດຕໍ່ຊຸມຊົນທ້ອງຖິ່ນ ແລະ ປະຊາຊົນທີ່ທຸກຍາກ ໂດຍຄຳນຶງເຖິງການດຳລົງຊີວິດ ທີ່ກ່ຽວຂ້ອງກັບປ່າໄມ້ຂອງຊຸມຊົນຄົນພື້ນເມືອງ ແລະ ຊາວບ້ານໃນທ້ອງຖິ່ນປະເທດຄູ່ຮ່ວມສັນຍາ ຈະໄດ້ຮັບການກະຕຸ້ນໃຫ້ເຊື່ອມໂຍງບັນຫາ FLEGT ເຂົ້າກັບຍຸດທະສາດການຫຼຸດຜ່ອນຄວາມທຸກຍາກຂອງຕົນ ແລະ ຕິດຕາມຜົນກະທົບຂອງ VPAs ທີ່ມີຕໍ່ຄວາມທຸກຍາກ.

[1] ລະບຽບສະຫະພາບເອີຣົບ ເລກທີ 2173/2005 ວ່າດ້ວຍການຕັ້ງລະບົບການອອກໃບອະນຸຍາດ FLEGT ສຳລັບການນຳເຂົ້າໄມ້ໄປສະຫະພາບເອີຣົບ




• ການກ່ຽວຂ້ອງຂອງຜູ້ມີສ່ວນໄດ້ເສຍ ຄວນມີຂໍ້ບັງຄັບ ໃຫ້ມີການປຶກສາຫາລື ເປັນປະຈຳ ສະໝ່ຳສະເໝີກັບຜູ້ມີສ່ວນໄດ້ເສຍ ໃນລະຫວ່າງທີ່ມີການອອກແບບ ແລະ ນຳເອົາສັນຍາ VPAs ມາໃຊ້ການຫາລືນີ້ ຄວນຈະລວມເຖິງທຶນໃນການຄ້າໄມ້ເຖື່ອນ ແຕ່ຄວນຈະຮັບປະກັນວ່າດ້ວຍຂໍ້ກຳນົດຕ່າງໆ ທີ່ມີຂຶ້ນຕ້ອງບໍ່ສ້າງພາລະອັນທີ່ບໍ່ສົມຄວນຕໍ່ຜູ້ຜະລິດລາຍຍ່ອຍ.

ໃນປະເທດຄູ່ຮ່ວມບາງປະເທດ ການຈະປະຕິບັດໄດ້ຕາມພັນທະທີ່ໃຫ້ໄວ້ນັ້ນຈະຕ້ອງມີການເສີມສ້າງຄວາມເຂັ້ມແຂງ ໃນຂັ້ນສະຖາບັນ ແລະ ການສ້າງສັກກະຍະພາບຢ່າງມີເນື້ອໃນ ສຳຄັນ VPAs ຄວນຈະໄຈ້ແຍກອອກມາໄດ້ວ່າມີບໍລິເວນໃດແດ່ ທີ່ມີຄວາມຈຳເປັນຕ້ອງໄດ້ຮັບຄວາມຊ່ວຍເຫຼືອທາງເຕັກນິກ ແລະ ທາງການເງິນ ຄວາມຊ່ວຍເຫຼືອໃດແດ່ ຈະເນັ້ນໜັກໄປ ເຖິງການສົ່ງເສີມຄວາມຖືກຕ້ອງຕາມກົດໝາຍໃນຂະແໜງທຸລະກິດປ່າໄມ້ ອັນເປັນຂັ້ນຕອນພື້ນຖານໃນການກ້າວໄປເຖິງການຄຸ້ມຄອງປ່າໄມ້ຢ່າງຍືນຍົງ ບັນຫາຄວນທີ່ຈະຕ້ອງມີການເນັ້ນໜັກໄດ້ແກ່:

• ຄວາມຊ່ວຍເຫຼືອໃນການປະຕິຮູບກົດໝາຍ ແລະ ລະບຽບການຂໍ້ບັງຄັບໃນກໍລະນີມີຄວາມຈຳເປັນ.
• ຄວາມຊ່ວຍເຫຼືອໃນການພັດທະນາລະບົບກວດສອບຢັ້ງຢືນຄວາມຖືກຕ້ອງວ່າໄມ້ຖືກຕັດຢ່າງຖືກຕ້ອງຕາມກົດໝາຍ.
• ການສ້າງສັກກະຍະພາບແກ່ລັດຖະບານ ແລະ ອົງການປະຊາສັງຄົມຂອງປະເທດຄູ່ຮ່ວມສັນຍາ.
• ການຊອກຫາທາງການແກ້ໄຂການຄ້າໄມ້ເຖື່ອນທີ່ເປັນທຳ ແລະເທົ່າທຽມ ເຊິ່ງຫຼຸດຜ່ອນຜົນກະທົບໃນທາງດ້ານລົບຕໍ່ຊຸມຊົນ ທີ່ຕ້ອງເພິ່ງພາປ່າໄມ້ ລົງໃຫ້ໜ້ອຍທີ່ສຸດ.
• ການເສີມສ້າງຄວາມເຂັ້ມແຂງໃຫ້ສະຖາບັນທີ່ມີຢູ່ ແລະ ການສ້າງສະຖາບັນໃໝ່.
• ການສະໜັບສະໜູນການປະຕິຮູບນະໂຍບາຍກົດໝາຍ ແລະ ລະບຽບການຂໍ້ບັງຄັບໃນຂະແໜງການປ່າໄມ້.

### 3. ການພັດທະນາຂໍ້ຕົກລົງການເປັນຄູ່ຮ່ວມດ້ວຍຄວາມສະມັກໃຈ.

**ການເຈລະຈາ ແລະ ປະສິດທິຜົນຂອງຂໍ້ຕົກລົງ.**

ຂໍ້ຕົກລົງການເປັນຄູ່ຮ່ວມດ້ວຍຄວາມສະມັກໃຈເລີ່ມຈາກ ການປຶກສາຫາລືຢ່າງບໍ່ເປັນທາງການລະຫວ່າງ ສະຫະພາບເອີຣົບ ກັບປະເທດທີ່ອາດເປັນຄູ່ຮ່ວມໂດຍທົ່ວໄປດຳເນີນການໂດຍຄະນະກຳມະທິການເອີຣົບກັບລັດ, ສະມາຊິກລັດໃດໜຶ່ງ ຫຼືຫຼາຍກວ່າຂອງສະຫະພາບເອີຣົບ ຂັ້ນຕອນນີ້ມີໄວ້ເພື່ອໃຫ້ແນ່ໃຈວ່າຜູ້ມີສ່ວນໄດ້ເສຍໃນປະເທດນັ້ນມີຄວາມເຂົ້າໃຈເປັນຢ່າງດີຕໍ່ຈຸດເປົ້າໝາຍຂອງ VPA ແລະ ກົນໄກການນຳມາໃຊ້ການປຶກສາຫາລືນີ້ ຈະຊ່ວຍໃຫ້ສະຫະພາບເອີຣົບມີຄວາມເຂົ້າໃຈບັນຫາຂອງຂະແໜງການປ່າໄມ້ ທີ່ຈຳເປັນຕ້ອງກ່າວເຖິງໃນການອອກແບບ VPA ຂອງປະເທດນັ້ນ ປະເທດທີ່ອາດເປັນຄູ່ຮ່ວມ ຈະເປັນຜູ້ແຈ້ງຄະນະກຳມະທິການເອີຣົບ ເມື່ອຕົນພ້ອມທີ່ຈະເຈລະຈາຢ່າງເປັນທາງການ. ການເຈລະຈາໃຫ້ໄດ້ຂໍ້ຕົກລົງຈະເນັ້ນໃສ່ບັນຫາທີ່ມີຄວາມສຳຄັນຕໍ່ການບັງຄັບໃຊ້ກົດໝາຍປ່າໄມ້ ແລະ ການຈັດການ ຄຸ້ມຄອງໃນປະເທດຄູ່ຮ່ວມສັນຍາ ການເຈລະຈາຈະໃຊ້ເວລາຫຼາຍເດືອນ.

VPA ຈະມີຜົນບັງຄັບໃຊ້ເມື່ອມີການສະຫຼຸບຜົນຂະບວນການເຈລະຈາ ແລະ ມີການປະຕິບັດຕາມຂໍ້ກຳນົດທາງດ້ານການບໍລິຫານຂອງແຕ່ລະຝ່າຍ (ເຊັ່ນ: ການໃຫ້ສັດຕະຍາບັນ) ຄົບຖ້ວນຮຽບຮ້ອຍແລ້ວ.

**ຄະນະກຳມະການດຳເນີນການຮ່ວມ**

ຈະມີການຕັ້ງຄະນະກຳມະການດຳເນີນການຮ່ວມ (Joint Implementation Committee: JIC) ເຊິ່ງປະກອບດ້ວຍ ຜູ້ແທນຂອງປະເທດຄູ່ຮ່ວມສັນຍາ, ຄະນະກຳມະທິການເອີຣົບ ແລະ ລັດສະມາຊິກຂອງສະຫະພາບເອີຣົບ ຂຶ້ນມາຄຸ້ມຄອງດຳເນີນການຕາມ VPA ແຕ່ລະສະບັບ. ຄະນະກຳມະການນີ້ຈະຮັບຜິດຊອບໃນການຮັບປະກັນໃຫ້ມີການປຶກສາຫາລືກັນ ລະຫວ່າງສະຫະພາບເອີຣົບ ແລະ ປະເທດຄູ່ຮ່ວມສັນຍາ ມີຂຶ້ນເປັນປະຈຳ, ສະໝ່ຳສະເໝີ ແລະ ມີປະສິດທິຜົນ. ຄະນະກຳມະການນີ້ຍັງຈະອຳນວຍຄວາມສະດວກ, ຕິດຕາມຜົນ ແລະ ກຳກັບຄຸ້ມຄອງການ ນຳຂໍ້ຕົກລົງມາປະຕິບັດ ແລະ ເປັນຄົນກາງ ແລະ ແກ້ໄຂໃນຂໍ້ຂັດແຍ່ງ ແລະ ຂໍ້ພິພາກອື່ນໆທີ່ເກີດຂຶ້ນ. ໜ້າທີ່ຂອງ JIC ປະກອບດ້ວຍ:

• ການຕັດສິນໃຈໃນບັນຫາໄລຍະເວລາຂອງການມີຜົນບັງຄັບຂອງລະບົບການອອກໃບອະນຸຍາດ.
• ການຕິດຕາມຜົນ ແລະ ການທົບທວນຄວາມກ້າວໜ້າ ໂດຍລວມຂອງການດຳເນີນງານຕາມຂໍ້ຕົກລົງ.








- ການທົບທວນລາຍງານຈາກຜູ້ຕິດຕາມຜົນອິດສະຫຼະ ແລະ ຂໍ້ຮຽກຮ້ອງກ່ຽວກັບປະຕິບັດການຂອງລະບົບການອອກໃບອະນຸຍາດ.
- ການເປັນຜູ້ດໍາເນີນການແກ້ໄຂຄວາມຂັດແຍ່ງທີ່ກ່ຽວກັບຂໍ້ຕົກລົງ ແລະ ລະບົບການອອກໃບອະນຸຍາດ.

**ການວາງແຜນ ແລະ ການດໍາເນີນການ**

ສັນຍາ VPA ແຕ່ລະສະບັບຄວນຈະມີແຜນໃນລາຍລະອຽດທີ່ກໍານົດ ປະຕິບັດງານທີ່ວາງໄວ້ຢ່າງຊັດເຈນ ມີຂອບເຂດເວລາ ສໍາລັບການປັບປຸງການຄຸ້ມຄອງຮັກສາຂະແໜງການປ່າໄມ້ ແລະ ການດໍາເນີນການຂອງລະບົບການອອກໃບອະນຸຍາດ.

ອາດໃຊ້ໄລຍະເວລາໜຶ່ງຫຼັງຈາກທີ່ສັນຍາ VPA ມີຜົນບັງຄັບໃຊ້ໃນການອອກໃບອະນຸຍາດຈະເກີດຜົນ ເພາະອາດມີຄວາມຈໍາເປັນ ຕ້ອງພັດທະນາຫຼື ສ້າງຄວາມເຂັ້ມແຂງໃຫ້ລະບົບປະກັນຄວາມຖືກຕ້ອງຕາມກົດໝາຍ ເມື່ອປະເທດຄູ່ຮ່ວມສັນຍາພິຈາລະນາເຫັນວ່າ ລະບົບປະກັນຄວາມຖືກຕ້ອງຕາມກົດໝາຍຂອງຕົນໄດ້ປະຕິບັດຕາມຂໍ້ກໍານົດທັງໝົດ ແລ້ວຈຶ່ງແຈ້ງໃຫ້ສະຫະພາບເອີຣົບຊາບໂດຍຜ່ານ JIC.

ເມື່ອໄດ້ຮັບການຢັ້ງຢືນໃນບັນຫານີ້ແລ້ວ ຄະນະກໍາມະທິການເອີຣົບ ລວມທັງປະເທດຄູ່ຮ່ວມສັນຍາ ແລະ ຜະລິດຕະພັນເພີ່ມເຕີມອື່ນໆ ທີ່ຈະຢູ່ໃນການຄຸ້ມຄອງຂອງລະບົບການອອກໃບອະນຸຍາດເຂົ້າໃນພາກເພີ່ມເຕີມ ຂອງລະບຽບຂໍ້ບັງຄັບ FLEGT ຂອງສະຫະພາບເອີຣົບ ຈາກຈຸດນີ້ເປັນຕົ້ນໄປຜະລິດຕະຜົນໃນຂອບເຂດເຄືອຄ່າຍ ທີ່ສົ່ງອອກຈາກປະເທດຄູ່ຮ່ວມໄປຍັງສະຫະພາບເອີຣົບຈະຕ້ອງມີໃບອະນຸຍາດ FLEGT.




**ຂອບເຂດຂອງຂໍ້ຕົກລົງການເປັນຄູ່ຮ່ວມ**

ລະບົບການອອກໃບອະນຸຍາດໃນຂັ້ນຕົ້ນຈະຄຸ້ມຄອງຜະລິດຕະພັນໄມ້ທີ່ເປັນຊິ້ນສ່ວນ (ເຊັ່ນ: ໄມ້ທ່ອນ, ໄມ້ທີ່ເລື່ອຍແລ້ວ, ແຜ່ນໄມ້ ແລະ ໄມ້ອັດ) ບາງຊະນິດເທົ່ານັ້ນ. ຢ່າງໃດກໍ່ຕາມ, ສັນຍາ VPA ແຕ່ລະສະບັບຈະມີບົດບັນຍັດທີ່ຈະຂະຫຍາຍຂອບເຂດນີ້ອອກໄປເຖິງຜະລິດຕະພັນປະເພດອື່ນຫາກຍັງມີປະໂຫຍດຕໍ່ບັນດາປະເທດຄູ່ຮ່ວມ.

**ການທົບທວນ ແລະ ການລາຍງານ**

ຈະຕ້ອງມີການຽບລາຍງານປະຈໍາປີ ເຖິງການພັດທະນາ ແລະ ການດໍາເນີນການຕາມສັນຍາ VPA ແຕ່ລະສະບັບລາຍງານເຫຼົ່ານີ້ຈະລວມລາຍລະອຽດຂອງດານບັລຸຕາມຈຸດປະສົງ ແລະ ປະຕິບັດຕາມ ຂອບເຂດເວລາທີ່ມີການຕົກລົງກັນເອົາໄວ້ເຊັ່ນດຽວກັນກັບຄວາມຄືບໜ້າ ໃນການສະກັດກັ້ນໄມ້ເຖື່ອນທີ່ສົ່ງອອກໄປຍັງຕະຫຼາດນອກສະຫະພາບເອີຣົບ ແລະ ຕະຫຼາດພາຍໃນປະເທດ ເມື່ອລະບົບການອອກໃບອະນຸຍາດ FLEGT ທີ່ໄດ້ເລີ່ມດໍາເນີນການແລ້ວ ລາຍລະອຽດຄວນຈະລວມເຖິງຈໍານວນໃບອະນຸຍາດ FLEGT ທີ່ໄດ້ອອກໄປ ແລະ ປະລິມານຂອງຜະລິດຕະພັນໄມ້ທີ່ໄດ້ສົ່ງອອກໄປຍັງສະຫະພາບເອີຣົບ.

ສັນຍາ VPA ແຕ່ລະສະບັບຄວນລວມບົດບັນຍັດໃຫ້ມີການທົບທວນ, ປະເມີນປະສິດທິຜົນ ແລະ ຜົນກະທົບຂອງມັນ ການທົບທວນຄັ້ງທໍາອິດຄວນຈະປະຕິບັດບໍ່ເກີນກວ່າສອງປີ ຫຼັງຈາກເລີ່ມໃຊ້ຂໍ້ຕົກລົງນັ້ນແລ້ວ ຢ່າງໃດກໍ່ດີອາດມີການທົບທວນເພີ່ມເຕີມ ໄດ້ເມື່ອມີບັນຫາກ່ຽວກັບການດໍາເນີນວຽກງານເກີດຂຶ້ນ.

**ໄລຍະເວລາຂອງຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ.**

ເມື່ອມີຜົນບັງຄັບໃຊ້ແລ້ວ ຂໍ້ຕົກລົງການເປັນຄູ່ຮ່ວມນີ້ຈະມີຜົນບັງຄັບໃຊ້ໄປຈົນກະທັ່ງສະຫະພາບເອີຣົບ ຫຼື ປະເທດຄູ່ຮ່ວມສັນຍາ ແຈ້ງອີກຝ່າຍໃຫ້ຊາບເຖິງຄວາມຕັ້ງໃຈທີ່ຈະຖອນຕົວ ໂດຍມີການແຈ້ງລ່ວງໜ້າໜຶ່ງປີ ໃນກໍລະນີທີ່ການທົບທວນອື່ນໆ ບົ່ງຊີ້ໃຫ້ເຫັນຄວາມລົ້ມເຫຼວຢ່າງຮຸນແຮງໃນການດໍາເນີນການຕາມຂໍ້ຕົກລົງ ແລະ ຄວາມລົ້ມເຫຼວນີ້ ບໍ່ໄດ້ຮັບການແກ້ໄຂໃຫ້ຖືກຕ້ອງ ພາຍໃນຂອບເຂດເວລາທີ່ໄດ້ຕົກລົງຮ່ວມກັນ ອາດມີຜົນໃຫ້ເກີດການໂຈະຂໍ້ຕົກລົງໄວ້ກ່ອນ ເຊິ່ງຈະເຮັດໃຫ້ປະເທດຄູ່ຮ່ວມສັນຍາ ປ່ຽນສະຖານະໄປເປັນປະເທດທີ່ບໍ່ແມ່ນຄູ່ຮ່ວມ.

## 4. ປະເທດຄູ່ຮ່ວມ FLEGT ຈະມີຂໍ້ໄດ້ປຽບໃດແດ່.

ການດໍາເນີນງານ VPAs ແລະ ລະບົບການອອກໃບອະນຸຍາດ ຈະກໍານົດໃຫ້ມີການສ້າງສັກກະຍະພາບ ແລະ ການລົງທຶນເພື່ອ ຮັບປະກັນໃຫ້ມີການໄວ້ວາງໃຈໄດ້ ແລະ ຄວາມໜ້າເຊື່ອຖື. ໃນທາງຕົງກັນຂ້າມກໍ່ມີຂໍ້ໄດ້ປຽບຂອງປະເທດຄູ່ຮ່ວມດ້ວຍ ເຊິ່ງໄດ້ແກ່.

- ການເສີມສ້າງຄວາມເຂັ້ມແຂງ ທັງທາງການເມືອງ ແລະ ທາງດ້ານການເງິນໃຫ້ກັບການປະຕິຮູບລັດຖະບານທີ່ມຸ້ງປັບປຸງການກໍາກັບຄວບຄຸມປ່າໄມ້.
- ການເຂົ້າເຖິງຕະຫຼາດເອີຣົບໄດ້ຮັບການປັບປຸງໃຫ້ດີຂຶ້ນ ເພາະນະໂຍບາຍການຈັດຊື້ຂອງທັງພາກລັດ ແລະ ພາກເອກະຊົນ ລະບຸຫຼາຍຂຶ້ນໃຫ້ໃຊ້ໄມ້ທີ່ຖືກກົດໝາຍ ແລະ ກີດ ກັ້ນໄມ້ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ໄມ້ເຖື່ອນ ເນື່ອງຈາກການນໍາເຂົ້າ ເອີຣົບທັງໝົດຈະຖືກພິຈາລະນາວ່າຖືກກົດໝາຍ.
- ລາຍໄດ້ທີ່ເພີ່ມຂຶ້ນຈາກການເກັບພາສີ ແລະ ອາກອນ ເຊິ່ງໃນບາງກໍລະນີອາດຫຼາຍກວ່າຄ່າໃຊ້ຈ່າຍທີ່ກ່ຽວຂ້ອງໃນການດໍາເນີນການອອກໃບອະນຸຍາດ.




- ໄດ້ຮັບການຈັດໃຫ້ຢູ່ໃນລັບດັບຕົ້ນໆ ສໍາລັບຄວາມຊ່ວຍເຫຼືອທາງດ້ານການພັດທະນາຂອງສະຫະພາບເອີຣົບ ສໍາລັບມາດຕະການທີ່ກ່ຽວຂ້ອງກັບ FLEGT.
- ມີເຄື່ອງມືການບັງຄັບໃຊ້ເພີ້ມເຕີມ ເພື່ອຕໍ່ຕ້ານກັບກິດຈະກໍາທີ່ຜິດກົດໝາຍ.
- ມີກອບພື້ນຖານທີ່ອໍານວຍຄວາມສະດວກ ແກ່ຜູ້ດໍາເນີນການພາກເອກະຊົນໃຫ້ກ້າວໜ້າໄປສູ່ການໄດ້ຮັບຮອງການຄຸ້ມຄອງປ່າໄມ້ແບບຍືນຍົງ.
- ມີຊື່ສຽງລະຫວ່າງປະເທດທີ່ດີຂື້ນເນື່ອງຈາກພັນທະ ຂອງລັດຖະບານວ່າຈະມີການຄຸ້ມຄອງທີ່ດີ.

ການຄ້າຂາຍກັບປະເທດຕ່າງໆ ທີ່ເລືອກຈະບໍ່ປະຕິບັດສັນຍາ VPAs ຈະບໍ່ໄດ້ຮັບຜົນກະທົບໃດໆ. ເຖິງຢ່າງໃດກໍ່ຕາມ, ໃນເມື່ອມີຜູ້ຊື້ທີ່ຮັບເອົານະໂຍບາຍທີ່ສະໜັບສະໜູນການຈັດຊື້ໄມ້ ທີ່ໄດ້ຮັບການກວດສອບຢັ້ງຢືນຄວາມຖືກຕ້ອງວ່າຖືກກົດໝາຍຫຼາຍຂື້ນເລື້ອຍໆ ປະເທດທີ່ມີບັນຫາກ່ຽວກັບການເຮັດໄມ້ເຖື່ອນ ແລະ ເລືອກທີ່ຈະບໍ່ປະຕິບັດຕາມສັນຍາ VPAs ອາດພົບວ່າສ່ວນແບ່ງໃນຕະຫຼາດຂອງຕົນໃນສະຫະພາບເອີຣົບຫຼຸດລົງ.



ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂື້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກໍາມະທິການເອີຣົບຕັ້ງຂື້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນໍາໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກໍາມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ້ມນີ້ (ມີນາ 2007)






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ແນວທາງສຳລັບການຕິດຕາມຂອງໜ່ວຍງານອິດສະຫຼະ

### ຄວາມເປັນມາ

ແຜນປະຕິບັດການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບ ກຳນົດປະຕິບັດການສຳລັບການຈັດການກັບບັນຫາການໄມ້ທີ່ມີການຄຸ້ມຄອງປ່າໄມ້ທີ່ດີ ແລະ ຄວາມອ່ອນແອໃນການບັງຄັບໃຊ້ກົດໝາຍ ເຊິ່ງເຮັດໃຫ້ການຄ້າໄມ້ເຖື່ອນ ແລະ ການຄ້າຜະລິດຕະພັນໄມ້ທີ່ຕັດແບບຜິດກົດໝາຍ ທີ່ເພີ້ມຂື້ນໃນປະເທດຜູ້ຜະລິດໄມ້ຫຼາຍປະເທດ.

ໃຈກາງຂອງແຜນປະຕິບັດການນີ້ຄືການເຮັດໃຫ້ຂໍ້ຕົກລົງທະວິພາຄີ ດ້ວຍຄວາມສະມັກໃຈລະຫວ່າງສະຫະພາບເອີຣົບກັບປະເທດທີ່ຜະລິດໄມ້ ຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະມັກໃຈ (VPAs) ສິ່ງເຫຼົ່ານີ້ເພື່ອສະໜັບສະໜູນການປະຕິຮູບການຄຸ້ມຄອງ ແລະ ສົ່ງເສີມຄວາມເຂັ້ມແຂງໃຫ້ກິດຈະກຳບັງຄັບໃຊ້ກົດໝາຍໃນປະເທດທີ່ຜະລິດໄມ້ (ປະເທດຄູ່ຮ່ວມ) ແລະ ຕັ້ງລະບົບການອອກໃບອະນຸຍາດທີ່ຈະຮັບປະກັນວ່າມີແຕ່ຜະລິດຕະພັນໄມ້ ທີ່ຜະລິດຂື້ນມາຢ່າງຖືກຕ້ອງຕາມກົດໝາຍເທົ່ານັ້ນທີ່ຈະຖືກສົ່ງອອກໄປຍັງສະຫະພາບເອີຣົບ.

ໜ່ວຍງານທາງການຂອງປະເທດຄູ່ຮ່ວມຈະເປັນຜູ້ອອກໃບອະນຸຍາດ FLEGT ທີ່ຄຸ້ມຄອງການສົ່ງອອກທັງໝົດຂອງຜະລິດຕະພັນໄມ້ທີ່ມີລາຍການລະບຸໄວ້ໃນສັນຍາ VPA ພາຍໃຕ້ລະບົບການອອກອະນຸຍາດ FLEGT ແຫ່ງຊາດ ແລະ ບົນພື້ນຖານ

ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ (LAS) ທີ່ລວມເຖິງອົງປະກອບດັ່ງຕໍ່ໄປນີ້ (ເບິ່ງພາບທີ 1).

- ຄຳນິຍາມທີ່ສ້າງຂື້ນມາຢ່າງຖືກຕ້ອງຕາມກົດໝາຍທີ່ອະທິບາຍເຖິງກົດໝາຍທີ່ຕ້ອງ




**ພາບທີ 1**: ພາບແຜນຜັງສະແດງອົງປະກອບ 5 ປະການຂອງລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ (1) ຄວາມຖືກຕ້ອງຕາມກົດໝາຍປ່າໄມ້ (2) ການຄຸ້ມຄອງຕ່ອງໂສ້ການສະໜອງ (3) ການກວດສອບຢືນຢັນຄວາມເປັນຈິງຂອງປ່າ ແລະ ຕ່ອງໂສ້ການສະໜອງ (4) ການອອກໃບອະນຸຍາດ (5) ການຕິດຕາມລະບົບຂອງໜ່ວຍງານອິດສະຫຼະ.




ປະຕິບັດຕາມເພື່ອຈະໃຫ້ອອກໃບອະນຸຍາດໄດ້ ແລະ ການກວດສອບທີ່ຈຳເປັນເພື່ອໃຫ້ແນ່ໃຈໄດ້ວ່າມີການປະຕິບັດຕາມ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 2).

• ລະບົບການຕິດຕາມໄມ້ຈາກການດຳເນີນການ ແຕ່ຈຸດຢູ່ປ່າໄປຈົນເຖິງການສົ່ງອອກທີ່ມີການສະກັດກັ້ນໄມ້ ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ມີແຫຼ່ງທີ່ມາທີ່ຜິດກົດໝາຍອອກໄປຈາກ ຕ່ອງໂສ້ການສະໜອງ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 4).
• ລະບົບການກວດຢັ້ງຢືນຄວາມຖືກຕ້ອງຂອງການປະຕິບັດຕາມອົງປະກອບທັງໝົດຂອງນິຍາມຄວາມຖືກຕ້ອງຕາມ ກົດໝາຍ ແລະ ການຄຸ້ມຄອງແບບຕ່ອງໂສ້ການສະໜອງ (ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 5).
• ການອອກໃບອະນຸຍາດຜະລິດຕະພັນໄມ້ສຳລັບການສົ່ງອອກໃຫ້ກັບຜູ້ເຂົ້າຮ່ວມໃນຕະຫຼາດ ຫຼື ໃຫ້ກັບໄມ້ທີ່ສົ່ງໄປ ແຕ່ລະຄັ້ງທີ່ໄດ້ຮັບອະນຸມັດແລ້ວ.
• ການຕິດຕາມຜົນທີ່ເປັນອິດສະຫຼະ ເພື່ອໃຫ້ການຮັບປະກັນແກ່ທຸກຝ່າຍທີ່ສົນໃຈວ່າລະບົບການເຮັດວຽກຕາມທີ່ວາງແຜນໄວ້ ແລະ ຮັກສາຄວາມໜ້າເຊື່ອຖືເອົາໄວ້ໄດ້.

ໜ່ວຍງານທາງການທີ່ຮັບຜິດຊອບຂອງສະຫະພາບເອີຣົບ[1] ຈະອະນຸຍາດໃຫ້ນຳເຂົ້າໄດ້ສະເພາະຜະລິດຕະພັນໄມ້ທີ່ລະບຸຢູ່ໃນໃບອະນຸຍາດ FLEGT ຈາກປະເທດຄູ່ຮ່ວມສັນຍາ VPA.

ໃນສ່ວນຂອງການຕິດຕາມອິດສະຫຼະ ເປັນໜ້າທີ່ໜຶ່ງເຊິ່ງແຍກຈາກໜ່ວຍງານກຳກັບຄຸ້ມຄອງຂະແໜງການປ່າໄມ້ຂອງລັດຖະບານປະເທດຄູ່ຮ່ວມສັນຍາ ໂດຍມີຄວາມມຸ້ງໝາຍທີ່ຈະເຮັດໃຫ້ລະບົບການອອກໃບອະນຸຍາດ FLEGT ມີຄວາມໜ້າເຊື່ອຖື ດ້ວຍການກວດວ່າທຸກພາກສ່ວນ ຂອງລະບົບຮັບປະກັນຄວາມຖືກຕ້ອງຕາມກົດໝາຍຂອງປະເທດຄູ່ຮ່ວມເຮັດວຽກໄດ້ຢ່າງທີ່ວາງເອົາໄວ້.

ເອກະສານສະຫຼຸບຫຍໍ້ສະບັບນີ້ ໃຫ້ແນວທາງກ່ຽວກັບອົງປະກອບຕ່າງໆ ຂອງການຕິດຕາມທີ່ເປັນອິດສະຫຼະຢ່າງມີປະສິດທິຜົນ ໂດຍກຳນົດຫຼັກການ (P) ແລະ ບັນທັດຖານ (C) ຄຳສັບທີ່ໃຊ້ມີດັ່ງຕໍ່ໄປນີ້:

**ຄະນະກຳມະການດຳເນີນງານຮ່ວມ (Joint Implementation Committee: JIC)** ເປັນຄະນະກຳມະການທີ່ຕັ້ງຂຶ້ນສຳລັບສັນຍາ VPA ແຕ່ລະສະບັບ ແລະ ປະກອບດ້ວຍຜູ້ແທນຂອງປະເທດຄູ່ຮ່ວມ ຄະນະກຳມະການເອີຣົບ ແລະ ລັດຖະສະມາຊິກຂອງສະພາເອີຣົບ. ບົດບາດຂອງຄະນະກຳມະການນີ້ ແມ່ນອຳນວຍຄວາມສະດວກ ແລະ ຕິດຕາມຜົນການດຳເນີນງານຕາມ VPA ແລະ ເປັນໂຕກາງໄກ່ເກ່ຍ ແລະ ແກ້ໄຂຄວາມຂັດແຍ່ງ ແລະ ຂໍ້ ພິພາກຕ່າງໆ ທີ່ເກີດຂຶ້ນ.

**ລະບົບການປະກັນຄວາມຖືກຕ້ອງຕາມກົດໝາຍ (Legality Assurance System: LAS)** ເປັນລະບົບທີ່ໃຊ້ຮັບປະກັນວ່າ ໄມ້ ຫຼື ຜະລິດຕະພັນໄມ້ ທີ່ສົ່ງອອກຈາກປະເທດຄູ່ຮ່ວມໄປຍັງ ສະຫະພາບເອີຣົບ ຖືກຜະລິດຂຶ້ນມາຢ່າງຖືກຕ້ອງຕາມກົດໝາຍແຫ່ງຊາດທີ່ກ່ຽວຂ້ອງ ລະບົບນີ້ປະກອບດ້ວຍ(1) ຄຳນິຍາມຂອງໄມ້ທີ່ຖືກຜະລິດຂຶ້ນມາຢ່າງຖືກຕ້ອງຕາມກົດໝາຍ. (2) ລະບົບທີ່ກວດສອບຢັ້ງຢືນຄວາມຖືກຕ້ອງວ່າມີການປະຕິບັດຕາມຄຳນິຍາມ.(3) ລະບົບທີ່ຕິດຕາມຜະລິດຕະພັນໄມ້ຈາກປ່າໄປຈົນເຖິງຈຸດສົ່ງອອກ. (4) ການໃຫ້ໃບອະນຸຍາດສຳລັບການສົ່ງອອກ ເພື່ອຢັ້ງຢືນຄວາມຖືກຕ້ອງຕາມກົດໝາຍ ແລະ (5) ການຕິດຕາມທີ່ເປັນອິດສະຫຼະຂອງອົງປະກອບທີ່ກ່າວມາທັງໝົດນີ້.

**ຜູ້ຕິດຕາມຜົນອິດສະຫຼະ (The Third - Party Monitor)** ເປັນໜ່ວຍງານທີ່ບໍ່ແມ່ນອົງກອນທາງການເມືອງ ມີທັກສະ ແລະ ລະບົບທີ່ຈຳເປັນ ເພື່ອຮັບປະກັນຄວາມເປັນອິດສະຫຼະ ແລະ ຄວາມບໍ່ມີອະຄະຕິບໍ່ມີການລຳອຽງໃດໆເຮັດໜ້າທີ່ຕາມການປະຕິບັດ ຂອງລະບົບການຮັບປະກັນ ຄວາມຖືກຕ້ອງຕາມກົດໝາຍ ໂດຍ (1) ກວດກາທຸກພາກສ່ວນຂອງລະບົບນີ້ດ້ວຍການໃຊ້ວິທີການກວດສອບທີ່ດີທີ່ສຸດ. (2) ຈຳແນກໃຫ້ເຫັນການບໍ່ປະຕິບັດຕາມ ແລະ ຄວາມລົ້ມເຫຼວຂອງລະບົບ ແລະ (3) ລາຍງານຜົນຕິດຕາມໄປຍັງ JIC.

**ອົງການຜູ້ລາຍງານ (The Report Body)** ອາດຕັ້ງຂຶ້ນໂດຍ JIC ມາເປັນໜ່ວຍງານປະກອບສຳລັບການເຮັດວຽກໃນແຕ່ລະວັນຄື (1) ກວດສອບ ແລະ ຢັ້ງຢືນສິ່ງທີ່ຜູ້ຕິດຕາມຜົນອິດສະຫຼະລາຍງານກ່ອນທີ່ຈະເປີດເຜີຍຕໍ່ສາທາລະນະຊົນ. (2) ສະເໜີແຜນປະຕິບັດການແກ້ໄຂ ໃຫ້ຖືກຕ້ອງ ແລະ ກວດເບິ່ງວ່າມີການລົງມືປະຕິບັດ ຫຼືບໍ່ ແລະ (3) ຕອບຄຳຮ້ອງຮຽນທີ່ກ່ຽວຂ້ອງກັບການດຳເນີນການຂອງລະບົບຮັບປະກັນ ຄວາມຖືກຕ້ອງຕາມກົດໝາຍ ອຳນາດໃນການເຮັດໜ້າທີ່ນີ້ເປັນຂອງ JIC ແຕ່ໃນກໍລະນີສ່ວນໃຫຍ່ແລ້ວ ກິດຈະກຳແຕ່ລະມື້ອາດເຮັດໂດຍອານຸກຳມະການ ຫຼື ກຸ່ມທີ່ປຶກສາທີ່ຕັ້ງຂຶ້ນມາໂດຍ JIC ແລະ ເຮັດວຽກໃຫ້ JIC.

ອົງການຜູ້ລາຍງານຈະປະກອບດ້ວຍບຸກຄົນທີ່ມີຄວາມຊ່ຽວຊານ ໂດຍ ກົງຈາກຕົວແທນກຸ່ມຜົນປະໂຫຍດຕ່າງໆ ອົງກອນນີ້ອາດມີຄວາມຮັບ ຜິດຊອບໃນດ້ານການຕັດສິນໃຈ ຫຼື ມີພຽງບົດບາດໃຫ້ຄຳປຶກສາກໍ່ໄດ້ ໂດຍທີ່ JIC ຍັງຮັກສາອຳນາດໃນການຕັດສິນໃຈເອົາໄວ້ທັງໝົດ ໃນກໍລະນີທີ່ບໍ່ມີການຕັ້ງຄະນະອານຸກຳມະການ ຫຼື ກຸ່ມທີ່ປຶກສາ JIC ຈະຍັງຄົງຮັບຜິດຊອບສ່ວນທີ່ເປັນຂອງອົງການຜູ້ລາຍງານເອົາໄວ້.

**ອົງການປະເມີນຄວາມສອດຄ່ອງກັນ (Conformity Assessment Body)** ເປັນອົງກອນທີ່ມີຄວາມສາມາດໃນການພິຈາລະນາວ່າ ຜະລິດຕະພັນ, ລະບົບ ຂະບວນການ ຫຼື ຄວາມສາມາດຂອງບຸກຄົນ ຄົນໜຶ່ງໄດ້ ຕາມມາດຕະຖານລາຍລະອຽດສະເພາະທີ່ກຳນົດໄວ້ຫຼືບໍ່. ອົງກອນນີ້ສະແດງໃຫ້ເຫັນຄວາມສາມາດຂອງຕົນໃນການກະທຳດັ່ງກ່າວໄດ້ໂດຍຍຶດພັນຕາມມາດຕະຖານທີ່ກ່ຽວຂ້ອງ ໂດຍສະເພາະຢ່າງຍິ່ງເອກະສານມາດຕະຖານ ISO/IEO2 ແລະ ຖ້າຈະໃຫ້ດີແລ້ວກໍ່ແມ່ນການໄດ້ຮັບການຮັບຮອງວິທະຍາໃນລັກສະນະມາດຖານເຫຼົ່ານັ້ນ.

**ປະຕິບັດການແກ້ໄຂ (Corrective action)** ຄືປະຕິບັດການທີ່ປະຕິບັດ ໂດຍຜູ້ປະຕິບັດໃນລະບົບຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ເພື່ອໄປແກ້ໄຂການບໍ່ປະຕິບັດຕາມ ຫຼື ຄວາມລົ້ມເລວຂອງລະບົບທີ່ຜູ້ຕິດ ຕາມຜົນອິດສະຫຼະຈຳແນກໄຈ້ແຍກລະບຸອອກມາ.

## 1. ການກະກຽມຈັດການຂອງພາກສະຖາບັນ

P 1.1 ການລະບຸອົງກອນທີ່ຮັບຜິດຊອບ: ລັດຖະບານປະເທດຄູ່ຮ່ວມໃຫ້ ອຳນາດຢ່າງເປັນທາງການກັບອົງກອນທີ່ເຮັດໜ້າທີ່ຕິດຕາມຜົນຢ່າງເປັນອິດສະຫຼະ ແລະ ປ່ອຍໃຫ້ອົງກອນນັ້ນປະຕິບັດການຢ່າງມີປະສິດທິຜົນ ແລະ ໂປ່ງໃສ.

C 1.1.1: ລັດຖະບານປະເທດຄູ່ຮ່ວມສັນຍາ ມອບຍັດຕິຢ່າງເປັນທາງການແກ່ຜູ້ຕິດຕາມຜົນອິດສະຫຼະໃຫ້ເຂົ້າເຖິງບຸກຄົນ ເອກະສານ ແລະ ສະຖານທີ່ ທີ່ຈຳເປັນໃນການເຮັດໜ້າທີ່ຂອງຕົນ.

C 1.1.2: ລັດຖະບານປະເທດຄູ່ຮ່ວມສັນຍາ ຮັບປະກັນວ່າເງື່ອນໄຂຕ່າງໆທີ່ຈຳເປັນໃນການປະຕິບັດການ ຢ່າງມີປະສິດທິຜົນຂອງຜູ້ຕິດຕາມຜົນ ອິດສະລະໄດ້ຮັບການດູແລ.

C 1.1.3: ລັດຖະບານປະເທດຄູ່ຮ່ວມສັນຍາ ຮັບປະກັນວ່າຈະມີທຶນ[3] ແລະ ຊັບພະຍາກອນຢ່າງພຽງພໍໃຫ້ເພື່ອສາມາດເຮັດໜ້າທີ່ໄດ້ຢ່າງເຕັມທີ່ ໃນການຕິດຕາມຜົນຢ່າງເປັນອິດສະຫຼະ.

[1] ຕາມທີ່ກຳນົດໄວ້ໃນສະພາເອີຣົບ ເລກທີ 2173/2005 ວ່າດ້ວຍການຕັ້ງລະບົບອອກໃບອະນຸຍາດ FLEGT ສຳລັບການນຳເຂົ້າໄມ້ໄປໃນສະຫະພາບເອີຣົບ

[2] ເບິ່ງເອກະສານຄັດຕິດ 1






P 1.2: ຄວາມເປັນອິດສະຫຼະຈາກອົງກອນອື່ນໆຂອງ LAS: ມີການແບ່ງແຍກຢ່າງຊັດເຈນ ລະຫວ່າງອົງກອນ ແລະ ບຸກຄົນ ທີ່ກ່ຽວຂ້ອງໃນການຈັດການ ຫຼື ກຳກັບຄຸ້ມຄອງຊັບພະຍາກອນປ່າໄມ້ ກັບອົງກອນ ແລະ ບຸກຄົນທີ່ກ່ຽວຂ້ອງໃນການຕິດຕາມຜົນຢ່າງເປັນອິດສະຫຼະ.

C 1.2.1: ອົງກອນ ແລະ ບຸກຄົນ ທີ່ມີບົດບາດໂດຍກົງໃນການດຳເນີນ ການຂອງ LAS ຫຼື ກັບຜົນປະໂຫຍດໃນດ້ານການຄ້າ ໃນຂະແໜງການປ່າໄມ້ ທີ່ບໍ່ມີການກ່ຽວຂ້ອງໃນດ້ານອື່ນໆ ໃນການຕິດຕາມຜົນຢ່າງເປັນອິດສະຫຼະ.

C 1.2.2: ຜູ້ຕິດຕາມຜົນອິດສະຫຼະບໍ່ມີການພົວພັນດ້ານການຄ້າ ຫຼື ດ້ານສະຖາບັນຕ່າງໆ ກັບອົງກອນອື່ນ ທີ່ກ່ຽວຂ້ອງໃນການດຳເນີນງານຂອງ LAS ຫຼື ມີກິດຈະກຳທີ່ເປັນເປົ້າໝາຍທີ່ຈະຕ້ອງຕິດຕາມຜົນ.

P 1.3 ການແຕ່ງຕັ້ງຜູ້ຕິດຕາມຜົນອິດສະຫຼະ: ມີກົນໄກທີ່ໂປ່ງໃສສຳລັບການແຕ່ງຕັ້ງຜູ້ຕິດຕາມຜົນອິດສະຫຼະ ແລະ ກົດເກນກ່ຽວກັບການດຳເນີນງານຂອງຜູ້ຕິດຕາມຜົນທີ່ຊັດເຈນ ແລະ ເປີດເຜຍໃຫ້ສາທາລະນະ ຊົນຮັບຮູ້.

C 1.3.1: ຂອບເຂດໜ້າທີ່ ແລະ ຄວາມຮັບຜິດຊອບຂອງຜູ້ຕິດຕາມຜົນອິດສະຫຼະໄດ້ຮັບການອະນຸມັດຈາກ JIC ແລະ ເປີດເຜີຍຕໍ່ສາທາລະນະຊົນກ່ອນມີຂະບວນການຄັດເລືອກຜູ້ຕິດຕາມຜົນອິດສະຫຼະ.

C 1.3.2: ມີແນວທາງໃນການຄັດເລືອກຜູ້ຕິດຕາມຜົນອິດສະຫຼະເຂົ້າ ມາທີ່ຊັດເຈນໂດຍຂະບວນການເລືອກທີ່ເໝາະສົມທີ່ເປີດໃຫ້ຜູ້ສະໝັກ ທີ່ມີຄຸນນະສົມບັດທັງໝົດທັງພາຍໃນປະເທດ ແລະ ຈາກນອກປະເທດ ແລະ ຮັບປະກັນໃຫ້ມີຄວາມໂປ່ງໃສ ແລະ ຄຸ້ມຄ່າເງິນ.

C 1.3.3: ສັນຍາ ຫຼື ຂໍ້ຕົກລົງຂອງຜູ້ຕິດຕາມຜົນອິດສະຫຼະກັບລັດຖະບານປະເທດຄູ່ຮ່ວມຕ້ອງມີ:



[3] ໃນກໍລະນີສ່ວນໃຫຍ່ ການຊ່ວຍເຫຼືອໃນດ້ານການພັດທະນາຈະຄອບຄຸ້ມອົງປະກອບຂອງການຕິດຕາມທີ່ເປັນອິດສະຫຼະ

- ອິດສະຫຼະພາບຈາກການແຊກແຊງຕ່າງໆ ໃນການດຳເນີນກິດຈະກຳຂອງຜູ້ຕິດຕາມຜົນອິດສະຫຼະ.
- ການເຂົ້າເຖິງຂໍ້ມູນລັດຖະບານ ແລະ ບໍລິສັດເອກະຊົນກ່ຽວຂ້ອງກັບການດຳເນີນງານຂອງ LAS ພາຍໃນຂອບເຂດທີ່ກົດໝາຍແຫ່ງຊາດກຳນົດໄວ້.
- ການເຂົ້າເຖິງພື້ນທີ່ປ່າທີ່ມີການຜະລິດໄມ້ ແລະ ຂົນສົ່ງໄມ້ ສະຖານ ທີ່ຈັດເກັບ ການແປຮູບ ແລະ ສົ່ງອອກ ທີ່ກ່ຽວຂ້ອງກັບການດຳເນີນງານ LAS.
- ການຈ່າຍຄ່າບໍລິການຂອງຜູ້ຕິດຕາມຜົນອິດສະຫຼະ ຫຼື ຄ່າໃຊ້ຈ່າຍ ບົນພື້ນຖານຂອງວຽກທີ່ປະຕິບັດເຖິງແມ່ນວ່າຜົນທີ່ຄົ້ນພົບຈາກການຕິດຕາມຈະອອກມາເປັນຢ່າງໃດກໍ່ຕາມ.
- ການຮັກສາຄວາມປອດໄພໃນສ່ວນທີ່ກ່ຽວຂ້ອງກັບການປົກປ້ອງ ແລະ ໃຊ້ຂໍ້ມູນທີ່ເປັນຄວາມລັບໃນດ້ານການຄ້າ.

P 1.4: ການຕັ້ງກົນໄກການຮັບບັນຫາຮ້ອງຮຽນ: ມີກົນໄກຕິດຕັ້ງຂຶ້ນເພື່ອ ຈັດການກັບຄຳຮ້ອງຮຽນ ແລະ ຂໍ້ພິພາກທີ່ເກີດຂຶ້ນຈາກການຕິດຕາມຜົນຢ່າງເປັນອິດສະລະເຊິ່ງພຽງພໍທີ່ຈະຈັດການກັບບັນຫາທີ່ຮ້ອງຂໍອື່ນໆ ກ່ຽວກັບການປະຕິບັດງານຂອງລະບົບການອອກໃບອະນຸຍາດ[4].

C 1.4.1: ກົນໄກການຮັບບັນຫາຮ້ອງຮຽນ ໄດ້ຮັບການອະນຸມັດຈາກ JIC ກົນໄກນີ້ລວມເຖິງຫຼັກການທີ່ຊີ້ນຳແນວທາງໃນການລາຍງານກ່ຽວກັບ ການຮ້ອງຮຽນ ແລະ ປະຕິບັດການທີ່ໄດ້ປະຕິບັດໄປເພື່ອຈັດການກັບບັນຫາຮ້ອງຮຽນເຫຼົ່ານັ້ນ.

C 1.4.2: ກົນໄກການຮັບເລື່ອງຮ້ອງຮຽນນັ້ນລວມເອົາກົນໄກການດຳ ເນີນການຕໍ່ໄປເຊັ່ນ: ການສົ່ງຄຳກ່າວຫາເຖິງຄວາມລົ້ມເຫຼວຂອງ LAS ໄປຍັງຜູ້ຕິດຕາມຜົນອິດສະຫຼະໃຫ້ສືບສວນ ແລະ ມີການຕິດຕາມຜົນຂອງການສືບສວນ.

## 2. ຜູ້ຕິດຕາມຜົນອິດສະຫຼະ

P 2.1 ຂໍ້ກຳນົດໃນດ້ານອົງກອນ ແລະ ດ້ານເຕັກນິກ: ຜູ້ຕິດຕາມຜົນອິດສະຫຼະເປັນອົງກອນທີ່ເປັນອິດສະຫຼະແຍກຈາກພາກສ່ວນປະກອບອື່ນໆ ຂອງລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການປະຕິບັດງານຕາມໂຄງສ້າງການຈັດຕັ້ງປະຕິບັດທີ່ມີການບັນທຶກໄວ້ເປັນ ລາຍລັກອັກສອນ, ນະໂຍບາຍ ແລະ ຂະບວນການທີ່ໄດ້ຕາມຫຼັກການ ສາມາດປະຕິບັດທີ່ດີທີ່ສຸດອັນເປັນທີ່ຍອມຮັບໃນລະດັບສາກົນ.

C 2.1.1 : ຜູ້ຕິດຕາມຜົນອິດສະຫຼະຈະໄດ້ຮັບການກວດສອບຈາກພາຍ ໃນໂດຍອົງກອນທີ່ໄດ້ມາດຕະຖານ ISO 17011 ເທົ່າທຽມກັນ[6] ການກວດສອບນີ້ຈະເບິ່ງວ່າ:

- ຜູ້ຕິດຕາມຜົນອິດສະຫຼະໄດ້ປະຕິບັດຕາມຂໍ້ກຳນົດຂອງ ISO Guides 62, 65, 66 ຫຼື ເທົ່າທຽມກັນ ແລະ

[4] VPA ແຕ່ລະສະບັບຈະລວມຂໍ້ຕົກລົງໃນບັນຫາກົນໄກແກ້ໄຂຂໍ້ຂັດແຍ່ງເອົາໄວ້ ເຊິ່ງບັນຫານີ້ຕ້ອງສະທ້ອນອອກມາໃນເອກະສານອ້າງອີງສຳລັບອົງການຜູ້ລາຍງານ ແລະ JIC

[5] ການຈັດການກັບຄຳຮ້ອງຟ້ອງ ແລະ ຂໍ້ຂັດແຍ່ງອາດແຕກຕ່າງກັນໄປຕາມແຕ່ລະປະເທດຄູ່ຮ່ວມສັນຍາ ຕົວຢ່າງ ຄວາມຮັບຜິດຊອບໃຫ້ຄະນະອະນຸກຳມະການຂອງ JIC ຫຼືອົງການຍຸດຕິຂໍ້ຂັດແຍ່ງທີ່ແຍກອອກໄປຕ່າງຫາກ ໃນກໍລະນີໃດກໍ່ຕາມຈະຕ້ອງພິຈາລະນາກຳນົດຈຸດກາງໃນການຮັບເລື່ອງຮ້ອງຮຽນ ແລະ ສື່ສານກັບສັງຄົມວົງກວ້າງ.

[6] ເບິ່ງເອກະສານຄັດຕິດ 1 ສຳລັບຄຳອະທິບາຍອົງປະກອບບົດຫຼັກຂອງ ISO ແລະ ມາດຕະຖານທີ່ກ່ຽວຂ້ອງ.




• ຜູ້ຕິດຕາມຜົນອິດສະຫຼະມີຄຸນນະສົມບັດ ທີ່ຈະສະເໜີບໍລິການປະເມີນຜົນທີ່ຄຸ້ມຄອງຂະແໜງການປ່າໄມ້ ແລະ ຂະແໜງການຈັດຫາຈັດສົ່ງຜະລິດຕະພັນປ່າໄມ້.

ຕາມປົກກະຕິແລ້ວ ການຈະປະຕິບັດຕາມຂໍ້ກຳນົດເຫຼົ່ານີ້ໄດ້ ຜູ້ຕິດຕາມຜົນອິດສະຫຼະຈະເປັນອົງກອນທີ່ໄດ້ຮັບການຮັບຮອງວ່າ ເປັນອົງກອນປະເມີນຄວາມສອດຄ່ອງກັນ (Conformity assessment body ) ທີ່ສາມາດໃຫ້ບໍລິການໃນບັນຫາເຫຼົ່ານີ້.

C 2.2.1: ຜູ້ຕິດຕາມຜົນອິດສະຫຼະຄວນຈະມີ

- ປະສົບການຢ່າງໜ້ອຍຫ້າປີ ໃນການປະເມີນການຄຸ້ມຄອງປ່າໄມ້ ແລະ ການກວດສອບດ້ານການຄຸ້ມຄອງ.
- ໄດ້ມີການປະເມີນການຄຸ້ມຄອງປ່າໄມ້ ແລະ ການກວດສອບດ້ານການຄຸ້ມຄອງ ໂດຍສະເພາະໃນປະເທດທີ່ມີລັກສະນະຕ່າງໆ ຂອງຂະແໜງການປ່າໄມ້ຄ້າຍຄືກັນກັບລັກສະນະຂອງຂະແໜງການປ່າໄມ້ໃນປະເທດຄູ່ຮ່ວມສັນຍາ.

C 2.1.3: ໃນກໍລະນີສຳນັກງານໃຫຍ່ຂອງຜູ້ຕິດຕາມຜົນອິດສະຫຼະບໍ່ໄດ້ ຢູ່ໃນປະເທດຄູ່ຮ່ວມສັນຍາ ກໍ່ຄວນຈະໃຫ້ບໍລິການໃນລັກສະນະ ທີ່ເປັນກິດຈະກຳຮ່ວມກັບອົງກອນໃນປະເທດທີ່ມີປະສົບການທີ່ກ່ຽວຂ້ອງ.

C 2.1.4: ຄວນຕັ້ງຂໍ້ກຳນົດທາງດ້ານເຕັກນິກ ແລະ ປະສົບການຂັ້ນຕ່ຳ ສຸດສຳລັບຜູ້ຕິດຕາມຜົນອິດສະຫຼະ ໂດຍຄຳນຶງເຖິງສະພາວະຂອງຂະແໜງປ່າໄມ້ ແລະ ສິ່ງທີ່ທ້າທາຍໃນດ້ານການບໍລິຫານຄຸ້ມຄອງໃນປະເທດຄູ່ຮ່ວມ.

P 2.2 ວິທີການຕິດຕາມຜົນ: ວິທີການຂອງຜູ້ຕິດຕາມຜົນອິດສະຫຼະໃຊ້ ຫຼັກຖານເປັນຕົວຕັ້ງ ແລະ ດຳເນີນໄປໃນໄລຍະຄວາມຖີ່ທີ່ເໝາະສົມ[7].

C 2.2.1: ມີວິທີການທີ່ໄດ້ບັນທຶກເອົາໄວ້ແລ້ວ ເຊິ່ງລວມເຖິງການກວດ ສອບເອກະສານບັນທຶກການດຳເນີນງານ ແລະ ປະຕິບັດການຂອງທຸກຝ່າຍໃນ LAS ຢ່າງພຽງພໍ.

C 2.2.2 : ການຕິດຕາມຈະປະຕິບັດເປັນຊ່ວງ ປະຈຳສະໝໍ່າສະເໝີ ແລະ ມີບົດບັນຍັດໃຫ້ການຕິດຕາມໂດຍບໍ່ມີການປະກາດແຈ້ງໃຫ້ຊາບລ່ວງໜ້າ, ຄວາມຖີ່ ແລະ ຄວາມເຄັ່ງຄັດຂອງການຕິດຕາມຄວນຈະໄດ້ ສັດສ່ວນກັບຄວາມສ່ຽງທີ່ຈະເກີດການບໍ່ປະຕິບັດຕາມຂໍ້ຕົກລົງ.

C 2.2.3: ກິດຈະກຳການຕິດຕາມຜົນຈະສະແຫວງຫາ ແລະ ພິຈາລະນາຄວາມຄິດເຫັນຈາກກຸ່ມຜູ້ມີສ່ວນໄດ້ເສຍຕ່າງໆ ລວມເຖິງເຈົ້າຂອງ, ຜູ້ຄຸ້ມຄອງປ່າ, ຜູ້ແປຮູບ, ຜູ້ຊື້ ລັດຖະບານກາງ ແລະ ລັດຖະບານໃນຂະແໜງນັກວິຊາການ, ອົງກອນອະນຸລັກ, ອົງກອນເອກະຊົນທີ່ບໍ່ສະແຫວງຫາກຳໄລ, ຄົນງານ, ຜູ້ໃຊ້ປ່າ, ກຸ່ມຄົນພື້ນເມືອງ, ແລະ ຊຸມຊົນ.

P 2.3 ຂອບເຂດຂອງການຕິດຕາມ: ຜູ້ຕິດຕາມຜົນອິດສະຫຼະປະຕິບັດ ຕາມເງື່ອນໄຂທີ່ລະບຸໄວ້ຢ່າງເຊັດເຈນວ່າຈະຕ້ອງຕິດຕາມຫຍັງແດ່ ແລະ ທີ່ຄຸ້ມຄອງຂໍ້ກຳນົດຕາມທີ່ຕົກລົງກັນໄວ້ທັງໝົດສຳລັບການອອກໃບອະນຸຍາດ FLEGT.

C 2.3.1: ການຕິດຕາມພິຈາລະນາວ່າ LAS ກຳລັງປະຕິບັດໄປຕາມຂໍ້ກຳນົດສຳລັບການອອກໃບອະນຸຍາດ FLEGT ເຊິ່ງລວມເຖິງການກວດອົງປະກອບທັງໝົດຂອງ LAS ເຊິ່ງລວມເຖິງການປະຕິບັດຕາມກົດໝາຍໃນການຄຸ້ມຄອງປ່າ ຄວາມຊື່ສັດຂອງສາຍການຈັດຫາຈັດສົ່ງ, ກິດຈະກຳການກວດສອບຢັ້ງຢືນຄວາມຖືກຕ້ອງ ແລະ ການອອກໃບອະນຸ ຍາດ.

- ລະບຸການບໍ່ປະຕິບັດຕາມຂໍ້ກຳນົດຂອງ LAS ອອກມາ ແລະ ບັນທຶກໄວ້.
- ການປະເມີນປະສິດທິຜົນ ຂອງການປະຕິບັດການແກ້ໄຂທີ່ປະຕິບັດເພື່ອຈັດການກັບການບໍ່ປະຕິບັດຕາມ.

C 2.3.2: ເພື່ອໃຫ້ມີການກວດຊ້ອນກັນ ແລະ ຕິດຕາມການອອກໃບອະນຸຍາດ FLEGT ຜູ້ຕິດຕາມຜົນອິດສະຫຼະອາດຈະເຂົ້າເຖິງເອກະສານ ແລະ ຂໍ້ມູນທີ່ກ່ຽວກັບການນຳເຂົ້າຈາກປະເທດຄູ່ຮ່ວມສັນຍາໄປຍັງສະຫະພາບເອີຣົບ. ເຖິງຢ່າງໃດກໍ່ຕາມ, ໜ່ວຍງານທາງການທີ່ມີຄຸນນະສົມບັດຄວາມສາມາດ ຂອງລັດຖະສະມາຊິກສະຫະພາບເອີຣົບອາດປົກປິດບໍ່ໃຫ້ຂໍ້ມູນທີ່ພວກເຂົາບໍ່ໄດ້ຮັບອະນຸຍາດໃຫ້ສື່ສານຕາມທີ່ລະບຸໄວ້ໃນກົດໝາຍແຫ່ງຊາດນັ້ນໆ[8].

P 2.4 ຂໍ້ກຳນົດໃນການລາຍງານ: ຜູ້ຕິດຕາມຜົນອິດສະຫຼະຈະລາຍງານ ເປັນປະຈຳສະໝໍ່າສະເໝີ ໄປຍັງອົງກອນຜູ້ລາຍງານເຖິງຄວາມຊື່ສັດ ຂອງລະບົບຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ລວມທັງການບໍ່ປະຕິບັດຕາມ ເຊັ່ນດຽວກັນກັບການປະເມີນການປະຕິບັດການແກ້ໄຂທີ່ ປະຕິບັດໄປເພື່ອຈັດການກັບການບໍ່ປະຕິບັດຕາມສິ່ງເຫຼົ່ານັ້ນ.

C 2.4.1: ຜູ້ຕິດຕາມຜົນອິດສະຫຼະໄດ້ບັນທຶກຂະບວນການສຳລັບການ ກຽມລາຍງານເຊິ່ງຈະລະບຸເນື້ອຫາ[9] ແລະ ເວລາ ຕາມການປະຕິບັດຕາມແບບແຜນແລ້ວຈະມີການສົ່ງລາຍງານສອງສະບັບໃນແຕ່ລະໄລຍະການລາຍງານ.

- ລາຍງານສະບັບເຕັມສຳລັບການພິຈາລະນາຂອງອົງກອນຜູ້ລາຍງານ ໂດຍມີຂໍ້ມູນທີ່ກ່ຽວຂ້ອງທັງໝົດໃນໂຄງການຕິດຕາມ ແລະ ສິ່ງທີ່ຄົ້ນພົບ ແລະ
- ລາຍງານສະຫຼຸບທີ່ຈະເປີດເຜີຍຕໍ່ສາທາລະນະຊົນໂດຍສ້າງມາຈາກ ລາຍງານສະບັບເຕັມ ແລະ ຢ່າງໜ້ອຍທີ່ສຸດກໍ່ມີເນື້ອຫາສະຫຼຸບສິ່ງທີ່ຄົ້ນພົບຫຼັກໆ ການບໍ່ປະຕິບັດຕາມດັ່ງທີ່ກວດພົບ ແລະ ຂໍ້ກັງວົນໃຈຂອງຜູ້ມີສ່ວນໄດ້ເສຍ.

C 2.4.2: ຜູ້ຕິດຕາມຜົນອິດສະຫຼະອາດເຮັດລາຍງານເພີ່ມເຕີມຕໍ່ອົງກອນຜູ້ລາຍງານນອກຂອບການລາຍງານຕາມປົກກະຕິ ຕົວຢ່າງ ໃນກໍລະນີທີ່ກວດພົບວ່າມີການຝ່າຝືນຢ່າງຮ້າຍແຮງ.

C 2.4.3: ຜູ້ຕິດຕາມຜົນອິດສະຫຼະນຳຂໍ້ສະເໜີ ຂອງອົງກອນຜູ້ລາຍງານມາພິຈາລະນາບັນຫາການແກ້ໄຂລາຍງານ ກ່ຽວກັບການມີຫຼັກຖານບໍ່ພຽງພໍ. ການປະຕິບັດຢ່າງຈະແຈ້ງກັບຂໍ້ມູນ ການໃຫ້ເຫດຜົນຮັບຮອງບົດສະຫຼຸບ ແລະ ການປັບປຸງການບໍ່ມີອະຄະຕິ ຫຼື ລຳອຽງເຂົ້າຂ້າງຝ່າຍໃດ. ເຖິງຢ່າງໃດກໍ່ຕາມ, ຜູ້ຕິດຕາມຜົນອິດສະຫຼະເປັນຜູ້ກຳນົດເນື້ອຫາສຸດທ້າຍຂອງລາຍງານ.

## 3. ອົງການຜູ້ລາຍງານ (The Reporting Body)

P 3.1 ໂຄງສ້າງ ແລະ ວິທີການດຳເນີນງານ: ໂຄງຈະສ້າງຂອງອົງກອນຜູ້ລາຍງານລວມທັງການພົວພັນກັບ JIC ຈະມີການບັນທຶກໄວ້ເປັນລາຍລັກອັກສອນຢ່າງຊັດເຈນ ແລະ ເປີດເຜີຍຕໍ່ສາທາລະນະຊົນ.

[7] ຂຶ້ນຢູ່ກັບຄວາມຊັບຊ້ອນຂອງລະບົບ LAS ຄາດວ່າການກວດກາລະບົບທັງໝົດປະຈຳຄວນປະຕິບັດໃນຊ່ວງເວລາຢ່າງໜ້ອຍທີ່ສຸດ ຊຸດ 12 ເດືອນ ແລະ ໂດຍທົ່ວໄປຈະຖີ່ຫຼາຍກວ່ານີ້ໃນຂັ້ນຕົ້ນໆ ຂອງການດຳເນີນການຂອງລະບົບ LAS

[8] ມາດຕາ 5(3); ລະບຽບຄະນະກຳມະທິການເອີຣົບ ເລກທີ 2173/2005 ລົງວັນທີ 20 ທັນວາ 2005 ໄດ້ລະບຸວ່າ "ໜ່ວຍງານທາງການທີ່ມີຄວາມສາມາດຈະໃຫ້ບຸກຄະລາກອນ ຫຼືອົງການທີ່ໄດ້ຮັບມອບໝາຍຈາກປະເທດຄູ່ຮ່ວມສັນຍາ ຫຼືອົງການລະດັບພາກພື້ນໃຫ້ຮັບຜິດຊອບຕໍ່ການຕິດຕາມທີ່ເປັນອິດສະຫຼະກັບລະບົບການອອກໃບອະນຸຍາດ FLEGT ສາມາດເຂົ້າເຖິງເອກະສານ ແລະ ຂໍ້ມູນທີ່ກ່ຽວຂ້ອງໄດ້".

[9] ຮູບແບບ ແລະ ເນື້ອໃນຂອງລາຍງານ ແລະ ລະດັບຂອງລາຍລະອຽດທີ່ບັນຈຸໃນລາຍງານເຫຼົ່ານັ້ນຄວນຈະມີການຈັດແຈງໄວ້ໃນເອກະສານອ້າງອີງສຳລັບຜູ້ຕິດຕາມຜົນຂອງໜ່ວຍງານອິດສະຫຼະ.




C 3.1.1: ມີແນວທາງກຳນົດໜ້າທີ່ຂອງອົງກອນຜູ້ລາຍງານ ແລະ ການພົວພັນກັບລັດຖະບານປະເທດຄູ່ຮ່ວມສັນຍາ ຜູ້ຕິດຕາມຜົນອິດສະຫຼະ ແລະ JIC ໃນກໍລະນີທີ່ສາມາດປະຕິບັດໜ້າທີ່ ແລະ ການພົວພັນເຫຼົ່ານີ້ ຈະຄອບຄຸມເຖິງການລາຍງານ ແລະ ການຕອບກັບເປັນປະຈຳ ລະຫວ່າງ JIC ກັບອົງກອນຜູ້ລາຍງານ ແລະ ການຈັດການກັບສະພາວະທີ່ເປັນຂໍ້ ຍົກເວັ້ນທີ່ບໍ່ເປັນປົກກະຕິທຳມະດາ.

C 3.1.2: ອົງກອນຜູ້ລາຍງານກັບສະມາຊິກຂອງຕົນຈະດຳເນີນການ ຢ່າງບໍ່ມີອະຄະຕິ ຫຼື ລຳອຽງເຂົ້າຂ້າງຝ່າຍໃດ ແລະ ຄວນປະຕິເສດແຮງກົດດັນອື່ນໆ ທາງການເມືອງ, ທາງການເງິນ ແລະ ດ້ານອື່ນໆທີ່ອາດເຮັດໃຫ້ສູນເສຍຄວາມເປັນກາງ.

C 3.1.3: ອົງກອນຜູ້ລາຍງານຈະຄົ້ນຫາ, ອະທິບາຍ ແລະ ບັນທຶກໄວ້ ເປັນລາຍລັກອັກສອນເຖິງການພົວພັນອື່ນໆ ທີ່ສະມາຊິກຂອງຕົນອາດຈະມີກັບອົງກອນ ແລະ ບຸກຄົນທີ່ກ່ຽວຂ້ອງໃນຂະແໜງປ່າໄມ້ ເພື່ອພິຈາລະນາຄວາມເປັນໄປໄດ້ທີ່ຈະມີຜົນປະໂຫຍດທັບຊ້ອນ. ຄວາມຂັດແຍ້ງທີ່ເປັນໄປໄດ້ອື່ນໆທີ່ຄົ້ນພົບ ແລະ ປະຕິບັດການທີ່ເຮັດໄປເພື່ອຫຼຸດຜ່ອນຄວາມຂັດແຍ່ງນັ້ນ ຈະເປີດເຜີຍຕໍ່ສາທາລະນະຊົນ.

C 3.1.4: ອົງກອນຜູ້ລາຍງານບໍ່ລວມເອົາບຸກຄົນຜູ້ທີ່ກ່ຽວຂ້ອງໂດຍກົງ ໃນການດຳເນີນງານ LAS ເອົາໄວ້.

P 3.2 ບົດບາດ ແລະ ຄວາມຮັບຜິດຊອບ: ມີເອກະສານອ້າງອີງທີ່ບັນ ທຶກເປັນລາຍລັກອັກສອນຊັດເຈນ ແລະ ເປີດເຜີຍຕໍ່ສາທາລະນະຊົນບົ່ງບອກເຖິງບົດບາດ ແລະ ຄວາມຮັບຜິດຊອບຂອງ ອົງກອນຜູ້ລາຍງານ.

C 3.2.1: ອົງກອນຜູ້ລາຍງານໄດ້ຮັບການລາຍງານຂອງຜູ້ຕິດຕາມຜົນອິດສະຫຼະ ແລະ ທົບທວນໃນທັນທີ ແລະ ໃຫ້ຄວາມເຫັນຕາມທີ່ເໝາະສົມ.

- ທົບທວນ ແລະ ອະນຸມັດລາຍງານສະບັບເຕັມ ແລະ ໃນກໍລະນີທີ່ຈຳເປັນຈະສະເໜີໃຫ້ປະຕິບັດຕາມຂໍ້ເປັນຈິງໃຫ້ຊັດເຈນ ແລະ ປັບປຸງຢ່າງບໍ່ມີອະຄະຕິລຳອຽງເຂົ້າຂ້າງຝ່າຍໃດ ແລະ
- ທົບທວນ ແລະ ອະນຸມັດລາຍງານສະຫຼຸບສະເໜີຕໍ່ສາທາລະນະຊົນ ແລະ ໃນກໍລະນີທີ່ຈຳເປັນສະເໜີໃຫ້ປະຕິບັດຕາມຂໍ້ເປັນຈິງໃຫ້ຊັດເຈນ ຫຼື ເຮັດໃຫ້ບໍ່ມີຄວາມອະຄະຕິລຳອຽງເຂົ້າຂ້າງຝ່າຍໃດຫຼາຍຂຶ້ນ ກ່ອນໜ້າທີ່ຈະມີການເປີດເຜີຍສູ່ສາທາລະນະຊົນ ເຊັ່ນດຽວກັບຕິດຕາມການຕີພິມລາຍງານເຫຼົ່ານັ້ນ[10].

C 3.2.2: ໃນກໍລະນີທີ່ຈຳເປັນ ອົງກອນຜູ້ລາຍງານຈະສື່ສານຜ່ານທາງ ໂຄງສ້າງທີ່ຕົກລົງກັນໄວ້ໄປຍັງຜູ້ປະຕິບັດການທີ່ກ່ຽວຂ້ອງໃນ LAS ເຖິງ ຂໍ້ສະເໜີຕ່າງໆ ທີ່ມາຈາກລາຍງານຂອງຜູ້ຕິດຕາມຜົນອິດສະຫຼະ.

C 3.2.3: ອົງກອນຜູ້ລາຍງານມີກົນໄກທີ່ເຂົ້າເຖິງໄດ້ ແລະ ເຮັດວຽກໄດ້ ໃນການຮັບເອົາຄຳຮ້ອງຮຽນ ແລະ ຄວາມຄິດເຫັນຈາກຝ່າຍທີ່ສົນໃຈອື່ນໆ ແລະ ສົ່ງຜ່ານຕໍ່ໃຫ້ໄປຍັງອົງກອນທີ່ເໝາະສົມຈັດການກັບບັນຫາຮ້ອງຮຽນ ແລະ ຂັດແຍ່ງ ເຊິ່ງລວມເຖິງກົນໄກສຳລັບ

- ຮັບ ແລະ ພິຈາລະນາຄວາມຄິດເຫັນຈາກກຸ່ມຜູ້ມີສ່ວນໄດ້ເສຍໃນກໍລະນີທີ່ເໝາະສົມ ແລະ
- ເຮັດສະຫຼຸບຫຍໍ້ຂໍ້ມູນໃນບັນຫາຄຳຮ້ອງຮ້ອງຮຽນ ແລະ ປະຕິບັດການທີ່ປະຕິບັດໄປເພື່ອຈັດການກັບມັນ.



ພາກເພີ່ມເຕີມທ້າຍເຫຼັ້ມ 1: ສ່ວນປະກອບຫຼັກຂອງ ISO Guides 62, 65, ISO 17021 ແລະ 17011

ພາກເພີ່ມເຕີມທ້າຍເຫຼັ້ມ 1: ສ່ວນປະກອບຫຼັກຂອງ ISO Guides 62, 65, ISO 17021 ແລະ 17011

ອົງການລະຫວ່າງປະເທດ ວ່າດ້ວຍການກຳນົດມາດຖານ (International Organisation for Standardisation: ISO ) ມີປະສົບການມາເກືອບ 70 ປີ ໃນໂລກຂອງມາດຕະຖານ ແລະ ການກວດສອບຢັ້ງຢືນຄວາມຖືກຕ້ອງ. ອົງກອນນີ້ເປັນເຄືອຄ່າຍຂອງສະຖາບັນ ມາດຕະຖານແຫ່ງຊາດຂອງປະເທດຕ່າງໆ ຫຼາຍກວ່າ 140 ປະເທດ ແລະ ໄດ້ສ້າງມາດຖານທີ່ເປັນເອກະສານທາງເຕັກນິກທີ່ຊັດເຈນ ເຊິ່ງກຳ ນົດກົດເກນ ແລະ ລາຍລະອຽດຂອງສິ່ງຕ່າງໆ ເປັນຕົ້ນ ISO ຍັງໄດ້ພັດທະນາບັນດາຄຳແນະນຳ ທີ່ຊ່ວຍໃນການກວດສອບຢັ້ງຢືນຄວາມເປັນຈິງ (Verification) ການກວດກາຢ່າງລະອຽດ (Inspection) ແລະ ການຮັບຮອງຄວາມສອດຄ່ອງກັນ (Conformity Assessment Bodies: CAB) ຄື Guides 62, 65 ແລະ (Certifacation) ມີສອງຫົວຂໍ້ຫຼັກທີ່ໃຫ້ຄຳແນະນຳສຳລັບອົງກອນປະເມີນຄວາມ 66 ແລະ ອົງກອນຮັບຮອງຖານະຄື ISO 17011.

Guides 62, 65, 66 ແລະ ISO 17011 - ເອກະສານເຫຼົ່ານີ້ຕັ້ງຂໍ້ກຳ ນົດວ່າ CABs ຈະດຳເນີນງານແບບໃດ Guide 62 ບອກກ່ຽວກັບລະ ບົບດ້ານຄຸນນະພາບ Guide 65 ບອກກ່ຽວກັບລະບົບດ້ານຜະລິດຕະພັນ/ການດຳເນີນການ ແລະ Guide 66 ບອກກ່ຽວກັບລະບົບການ.



ການຄຸ້ມຄອງສິ່ງແວດລ້ອມ ISO 17001: 2006 ເຂົ້າມາແທນທີ່ Guide 62 ແລະ 66 ເຊິ່ງອາດນຳມາໃຊ້ໄດ້ໃນຊ່ວງປ່ຽນຜ່ານ ຂໍ້ແນະນຳ/ມາດຕະຖານ ເຫຼົ່ານີ້ມີສ່ວນທີ່ຊ້ຳຊ້ອນກັນຢູ່ຫຼາຍ ແຕ່ຂໍ້ກຳນົດຫຼັກໆກໍ່ຄື:

1. ອົງການ - ຂໍ້ກຳນົດທົ່ວໄປລວມມເຖິງ ການບໍ່ເລືອກປະຕິບັດຕໍ່ຜູ້ສະໝັກຂອງການຮັບຮອງການບໍ່ຂັດຂວາງ ຫຼື ໜ່ວງໜ່ຽວການເຂົ້າເຖິງການໄດ້ຮັບຮອງ ບໍລິການທີ່ຈະມີໃຫ້ກັບຜູ້ສະໝັກທຸກຄົນ ບໍ່ມີເງື່ອນໄຂທາງດ້ານການເງິນ ຫຼື ເງື່ອນໄຂອື່ນທີ່ເກີນເລີຍບໍ່ເໝາະສົມ.

ຂໍ້ກຳນົດໃນລາຍລະອຽດລວມເຖິງການບໍ່ໂອນອຽງເຂົ້າຂ້າງຝ່າຍໃດ ການແຍກຄວາມຮັບຜິດຊອບໃນສ່ວນການຕັດສິນໃຈໃຫ້ການຮັບຮອງ ກັບການປະເມີນຜົນການຮັບຮອງອອກຈາກກັນ ອິດສະຫຼະພາບຈາກແຮງກົດດັນໃນດ້ານການຄ້າ ຫຼືທາງການເງິນທີ່ອາດມີອິດທິພົນຕໍ່ການຕັດສິນໃຈ ການຮັບປະກັນວ່າກິດຈະກຳຂອງອົງກອນທີ່ກ່ຽວຂ້ອງບໍ່ໄດ້ກະທົບການເກັບຮັກສາຄວາມລັບ ການບໍ່ມີອະຄະຕິ ແລະ ການບໍ່ລຳອຽງເຂົ້າຂ້າງຝ່າຍໃດ. ການບໍ່ໃຫ້ຄຳແນະນຳ ຫຼື ໃຫ້ການບໍລິການປຶກສາກັບຜູ້ສະໝັກ ໃນເລື່ອງວິທີໃນການຈັດການກັບເລື່ອງທີ່ເປັນອຸປະສັກໃນ ການໄດ້ຄຳຮັບຮອງຕາມທີ່ຂໍ.

2. ລະບົບດ້ານຄຸນນະພາບ - ຂໍ້ກຳນົດໃຫ້ບັນທຶກ ແລະ ດຳເນີນການ ລະບົບດ້ານຄຸນນະພາບທີ່ມີປະສິດທິຜົນເໝາະສົມກັບຊະນິດ ຂອບເຂດ ແລະ ຂະໜາດຂອງວຽກງານທີ່ປະຕິບັດ ລະບົບຄຸ້ມຄອງດ້ານຄຸນນະພາບຈະລວມເຖິງລະບຽບການສຳລັບການຮັບຄືນການເລືອກສັນ ແລະ ການຝຶກບຸກຄະລາກອນຂອງອົງກອນໃຫ້ການຮັບຮອງ ແລະ ການຕິດຕາມການເຮັດວຽກຂອງພວກເຂົາເຈົ້າ ຂະບວນການໃນການຈັດການກັບຄວາມບໍ່ສອດຄ່ອງກັນ ແລະ ສຳ ລັບການຮັບປະກັນປະສິດທິຜົນຂອງປະຕິບັດການແກ້ໄຂ ຫຼື ປ້ອງກັນອື່ນໆ ທີ່ໄດ້ປະຕິບັດໄປ ວິທີ່ການສຳລັບການດຳເນີນການຂະ ບວນການໃຫ້ຮັບຮອງ/ການລົງທະບຽນ ລວມທັງເງື່ອນໄຂຂອງບັນຫາການຮັກສາ ແລະ ການຖອນເອກະສານການຮັບຮອງ ຂະບວນການສອດແນມກວດກາ ແລະ ປະເມີນຄືນຂະບວນການສຳລັບການຈັດການກັບບັນຫາການຕອບສະໜອງຄຳຮ້ອງຮຽນ ແລະ ຂໍ້ພິພາກ.

3. ເງື່ອນໄຂສຳລັບການຮັບຮອງ - ລວມທັງຂໍ້ກຳນົດໃຫ້ລະບຸເງື່ອນໄຂ ໃນການໃຫ້ຮັບຮອງການຮັກສາສະພາບ ແລະ ການຂະຫຍາຍການຮັບຮອງອອກໄປ ແລະ ເງື່ອນໄຂທີ່ມີການຖອນ ຫຼື ໂຈະໃບຮັບຮອງບັນທຶກ ແລະ ເປີດເຜີຍໃຫ້ຊາບເມື່ອມີການຮ້ອງຂໍຂະບວນການປະເມີນການຮັບຮອງການສອດຄ່ອງ ແລະ ການປະເມີນຄືນ ແລະ ການຫາຄວາມບໍ່ສອດຄ່ອງກັນ ແລະ ຄວາມຈຳເປັນຕ້ອງປະຕິບັດການແກ້ໄຂ.

4. ຄວາມສາມາດຂອງບຸກຄະລາກອນ - ລວມເຖິງຂໍ້ກຳນົດໃຫ້ຕັ້ງບັນທັດຖານທີ່ກ່ຽວຂ້ອງຂັ້ນຕ່ຳ ສຳລັບຄວາມສາມາດຂອງບຸກຄົນຂອງ ອົງກອນໃຫ້ຮັບຮອງຮັກສາຂໍ້ມູນໃນບັນຫາຄຸນນະສົມບັດທີ່ກ່ຽວຂ້ອງການຝຶກອົບຮົມ ແລະ ປະສົບການຂອງບຸກຄະລາກອນອົງກອນໃຫ້ການຮັບຮອງສະຖານະ ຕັ້ງບັນທັດຖານທີ່ກ່ຽວຂ້ອງຂັ້ນຕ່ຳສຳລັບຄວາມສາມາດຂອງຜູ້ກວດສອບ ແລະ ຜູ້ຊ່ຽວຊານທາງດ້ານເຕັກນິກ ມີຂະບວນການສຳລັບການເລືອກຜູ້ກວດສອບ ແລະ ຜູ້ຊ່ຽວຊານທາງດ້ານເຕັກນິກ ບົນພື້ນຖານຄວາມສາມາດການຝຶກອົບຮົມ ຄຸນນະສົມບັດ ແລະ ປະສົບການຂອງພວກເຂົາຮັບປະກັນວ່າທັກສະຂອງທີມກວດສອບນັ້ນເປັນທັກສະທີ່ກົງກັບຄວາມຕ້ອງການ ແລະ ເໝາະສົມ.

Guide 17011 - ການຮັບຮອງສະຖານະ (accreditation) ເປັນພື້ນ ຖານທີ່ຍອມຮັບກັນໃນທາງສາກົນໃນການຢັ້ງຢືນວ່າ CABs ນັ້ນເຊື່ອຖືໄດ້, ເປັນອິດສະຫຼະ ແລະ ດຳເນີນການໄດ້ຢ່າງເໝາະສົມ ການຮັບ ຮອງປ້ອງກັນສະຖານະປ້ອງກັນອົງກອນໃດຕັດສິນໃຈຈະມາເປັນ CAB ຢ່າງງ່າຍດາຍໂດຍບໍ່ຄິດວ່າຕົນເອງມີປະສົບການ ຫຼືມີຄວາມສາມາດແນວໃດ ການຮັບຮອງສະຖານະເພື່ອຮັບປະກັນວ່າ CABs ທັງໝົດດຳເນີນການຢູ່ເໜືອລະດັບທີ່ແນ່ນອນລະດັບໜຶ່ງ ແລະ ມີຄວາມສອດຄ່ອງກັນລະຫວ່າງແນວທາງ ແລະ ສຳຄັນທີ່ສຸດ ຜົນຂອງ CABs ຕ່າງໆ. ອົງກອນທີ່ເປັນຜູ້ລົງນາມໃນຂໍ້ຕົກລົງການຍອມຮັບພະຫຸພາຄີ ຂອງເວທີການຮັບຮອງສະຖານະສາກົນ (International Accreditation Forum's Multilateral Recognition Agreement: IAF MRA) ສຳລັບການຮັບຮອງສະຖານະຂອງອົງກອນປະເມີນຄວາມສອດຄ່ອງກັນທີ່ຈົດທະບຽນວ່າ ມີລະບົບການຄຸ້ມຄອງດ້ານຄຸນນະພາບ, ລະບົບການຄຸ້ມຄອງດ້ານສິ່ງແວດລ້ອມ ຫຼື ອົງກອນປະເມີນຄວາມສອດຄ່ອງກັນຂອງຜະລິດຕະພັນ ຈະໄດ້ຮັບການຍອມຮັບວ່າໄດ້ຕາມຂໍ້ກຳນົດຂອງ ISO 17011 ຂໍ້ກຳນົດຫຼັກມີດັ່ງນີ້:

1. ອົງການ - ຂໍ້ກຳນົດໃນລາຍລະອຽດກ່ຽວກັບໜ້າທີ່ ຄວາມຮັບຜິດ ຊອບ ແລະ ອຳນາດຂອງບຸກຄົນຜູ້ສາມາດມີຜົນຕໍ່ຄຸນນະພາບຂອງ ການຮັບຮອງສະຖານະ, ນະໂຍບາຍ ແລະ ວິທີການບໍ່ເລືອກປະຕິບັດ ການກະກຽມຈັດການຮັກສາຄວາມລັບຂອງຂໍ້ມູນກິດຈະກຳ ຂອງອົງອົງກອນຮັບຮອງສະຖານະຈະບໍ່ຖືກສະເໜີວ່າມີການເຊື່ອມໂຍງກັບການໃຫ້ຄຳປຶກສາ.

2. ການຈັດການ - ໃຊ້ລະບົບທີ່ຈັດການທີ່ເໝາະສົມກັບປະເພດຂອງ ຂອບເຂດ ແລະ ຂະໜາດຂອງວຽກງານຮັບຮອງສະຖານະທີ່ປະຕິ ບັດລະບຽບການສຳລັບການຄຸ້ມຄອງເອກະສານ ແລະ ບັນທຶກລະບຽບການສຳລັບການຄົ້ນຫາ ແລະ ການຈັດການໃຫ້ສອດຄ່ອງ ກັນໃນການດຳເນີນງານຂອງຕົນ ແລະ ການຫາການປັບປຸງ ແລະ ປະຕິບັດການປ້ອງກັນການກວດສອບຄວາມເປັນຈິງວ່າມີການເຮັດໃຫ້ສອດຄ່ອງຕາມຂໍ້ກຳນົດຂອງ ISO 17011 ຫຼື ບໍ່ ແລະ ມີການນຳລະບົບການຈັດການນັ້ນມາໃຊ້ ແລະ ຮັກສາໄວ້ ຂະບວນການ ສຳລັບການຈັດການກັບການຮ້ອງຮຽນ.

3. ຊັບພະຍາກອນມະນຸດ - ການດູແລຮັກສາບຸກຄະລາກອນທີ່ມີ ຄວາມສາມາດພຽງພໍດ້ວຍການສຶກສາ ການຝຶກອົບຮົມຄວາມຮູ້ທາງເຕັກນິກ, ທັກສະ ແລະ ປະສົບການທີ່ຈຳເປັນສຳລັບປະເພດ ຂອບເຂດ ແລະ ຂະໜາດຂອງການຮັບຮອງສະຖານະທີ່ປະຕິບັດ.

4. ຂະບວນການຮັບຮອງສະຖານະ - ຂະບວນການໃນລາຍລະອຽດ ສຳລັບການປະເມີນ ແລະ ຮັບຮອງສະຖານະ ລວມທັງການກະກຽມ ຈັດການສຳລັບການໃຫ້ ຮັກສາ ຂະຫາຫຍາຍ, ຫຼຸດ, ພັກ ແລະ ຖອນການຮັບຮອງສະຖານະຂໍ້ກຳນົດສຳລັບການຮັບຮອງສະຖານະ ລວມທັງຂ້ກຳນົດທາງເຕັກນິກທີ່ມີລັກສະນະສະເພາະສຳລັບການ ຮັບຮອງສະຖານະໃນແຕ່ລະບັນຫາ ຂໍ້ມູນກ່ຽວກັບຄ່າທຳນຽມຄຳບັນຍາຍທີ່ກ່ຽວກັບສິດທິ ແລະ ຂໍ້ມູນທີ່ພົວພັນຂອງ CABs ຂະບວນການສຳລັບການຍື່ນ ແລະ ຈັດການກັບຄຳຮອງ ແລະ ອຸທອນ.

ມີການຈັດວາງໃນທາງສາກົນທີ່ເຮັດໃຫ້ມີການຍອມຮັບຮ່ວມກັນລະຫວ່າງອົງກອນໃຫ້ການຮັບຮອງສະຖານະລະດັບຊາດເຊັ່ນ ເວທີການຮັບຮອງສະຖານະລະຫວ່າງປະເທດ ຜູ້ລົງນາມໃນ IAF MRA ຈະຖືກປະເມີນຜົນຈາກອົງກອນປະເພດດຽວກັນຫຼາຍໆຊາດ ເປັນປະຈຳສະໝ່ຳສະເໝີ ຈຸດມຸ້ງໝາຍຂອງການປະເມີນຜົນເຖິງສະຖານທີ່ເປັນປະຈຳ ຄືການຢັ້ງຢືນຄວາມເປັນຈິງວ່າຜູ້ລົງນາມມີການປະຕິບັດທີ່ສອດຄ້ອງກັນກັບ ISO/IEC 17011 ແລະ ເອກະສານຊີ້ນຳທີ່ປະຕິບັດໄດ້ຕໍ່ໄປການປະເມີນຜົນໂດຍອົງກອນປະເພດດຽວກັນນີ້ປະກັນໃຫ້ການປະຕິບັດໃນການຮັບຮອງສະຖານະໃຫ້ສອດຄ່ອງເປັນອັນໜຶ່ງອັນດຽວກັນ.

ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂຶ້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂຶ້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ່ມນີ້ (ມີນາ 2007)






# ເອກະສານສະຫຼຸບຫຍໍ້ກ່ຽວກັບ FLEGT

## ການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້

## ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ

### 1. ຄວາມເປັນມາ

ແຜນປະຕິບັດງານການບັງຄັບໃຊ້ກົດໝາຍປ່າໄມ້, ການຄຸ້ມຄອງ ແລະ ການຄ້າໄມ້ (FLEGT) ຂອງສະຫະພາບເອີຣົບ ຈັດໃຫ້ມີຂໍ້ຕົກລົງການເປັນຄູ່ຮ່ວມສັນຍາແບບສະໝັກໃຈ (VPAs) ລະຫວ່າງປະເທດຜູ້ຜະລິດໄມ້ກັບສະຫະພາບເອີຣົບພາຍໃຕ້ຂໍ້ຕົກລົງ VPA ນີ້. ປະເທດຄູ່ຮ່ວມສັນຍາຈະດຳເນີນການອອກໃບອະນຸຍາດທີ່ຮັບປະກັນຄວາມຖືກຕ້ອງຕາມກົດໝາຍຂອງໄມ້ ທີ່ຈະສົ່ງອອກໄປສະຫະພາບເອີຣົບ ຈະຍອມໃຫ້ຜະລິດຕະພັນໄມ້ທີ່ສົ່ງອອກມາຈາກປະເທດຄູ່ຮ່ວມສັນຍາເຂົ້າໄປໃນຕະຫຼາດສະຫະພາບເອີຣົບ ໄດ້ກໍ່ຕໍ່ເມື່ອມີໃບອະນຸຍາດ FLEGT ເທົ່ານັ້ນ ດ້ວຍວິທີເຊັ່ນນີ້ກໍ່ຈະເປັນການຮັບປະກັນໃຫ້ກັບຕະຫຼາດສະຫະພາບເອີຣົບໄດ້ວ່າສິນຄ້າທີ່ພວກເຂົາຊື້ມາຈາກປະເທດຄູ່ຮ່ວມສັນຍາ ໄດ້ຮັບການຜະລິດຂຶ້ນມາຢ່າງຖືກຕ້ອງຕາມກົດໝາຍດັ່ງນັ້ນກໍ່ຈະລົດຄວາມສ່ຽງໃນຮູບແບບການຄ້າ ແລະ ໃນດ້ານຊື່ສຽງລົງໄປ.

ການອອກໃບອະນຸຍາດ FLEGT ຕ້ອງຕັ້ງຢູ່ບົນພື້ນຖານຂອງລະບົບຮັບປະກັນຄວາມຖືກຕ້ອງຕາມກົດໝາຍ (LAS)[1] ເຊິ່ງມີວິທີການທີ່ໜ້າເຊື່ອຖືໄດ້ໃນການແຍກຜະລິດຕະພັນຈາກປ່າຜະລິດຂຶ້ນມາ ຢ່າງຖືກຕ້ອງຕາມກົດໝາຍ ແລະ ຜິດກົດໝາຍອອກຈາກກັນ. ລະບົບນີ້ມີໂຄງປະກອບ 5 ພາກສ່ວນຄື: (1) ນິຍາມຄວາມຖືກຕ້ອງຂອງໄມ້[2], (2) ການກວດສອບຄວາມເປັນຈິງວ່າມີການປະຕິບັດຕາມຄຳນິຍາມຫຼືບໍ່[3], (3) ການກວດສອບຢືນຢັນຄວາມເປັນຈິງຂອງການຄຸ້ມຄອງຕ່ອງໂສ້ການສະໜອງຈາກການຕັດໄມ້ໄປຈົນເຖິງການສົ່ງອອກເພື່ອຮັບປະກັນວ່າໄມ້ທີ່ສົ່ງອອກໄປນັ້ນບໍ່ໄດ້ລວມໄມ້ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ໄມ້ທີ່ມີແຫຼ່ງທີ່ມາທີ່ຜິດກົດໝາຍເອົາໄວ້ດ້ວຍ[4] ແລະ (5) ການຕິດຕາມຂອງໜ່ວຍງານທີ່ເປັນອິດສະຫຼະ ເພື່ອຮັບປະກັນວ່າ LAS ສາມາດປະຕິບັດໄດ້ຕາມທີ່ໄດ້ຕັ້ງໃຈໄວ້[5].

[1] ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 3
[2] ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 2
[3] ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 4
[4] ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 5
[5] ເບິ່ງເອກະສານສະຫຼຸບຫຍໍ້ ເລກທີ 7




ຫົວຂໍ້ຂອງເອກະສານສະຫຼຸບຫຍໍ້ທັງ 8 ເອກະສານມີດັ່ງນີ້:

1. FLEGT ແມ່ນຫຍັງ?
2. ໄມ້ທີ່ຖືກຕ້ອງຕາມກົດໝາຍແມ່ນໄມ້ແນວໃດ?
3. ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍຂອງໄມ້
4. ການຄວບຄຸມຕ່ອງໂສ້ການສະໜອງຂອງໄມ້: ການຕິດຕາມໄມ້ ແລະ ຕ່ອງສ້ອງການຄວບຄຸມຂອງໄມ້
5. ລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ: ຂໍ້ກຳນົດເພື່ອການກວດຢືນຢັນຄວາມເປັນຈິງ
6. ຂໍ້ຕົກລົງການເຂົ້າເປັນຄູ່ຮ່ວມສັນຍາແບບສະໝັກໃຈ
7. ແນວທາງສຳລັບການຕິດຕາມຜົນຂອງໜ່ວຍງານກວດກາອິດສະຫຼະ
8. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ FLEGT ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ

ໃນກໍລະນີສ່ວນຫຼາຍແລ້ວ ການກວດການຢືນຢັນຄວາມເປັນຈິງຂອງການປະຕິບັດຕາມກົດໝາຍ ແລະ ການຄຸ້ມຄອງຕ່ອງໂສ້ການສະໜອງຈະດຳເນີນການໂດຍໜ່ວຍງານຂອງລັດຖະບານປະເທດຄູ່ຮ່ວມສັນຍາ ຫຼື ອົງການກວດສອບການຢືນຢັນຄວາມເປັນຈິງຈາກພາກເອກະຊົນ ທີ່ມີຄຸນນະສົມບັດເໝາະສົມ (ເຊັ່ນ: ຜູ້ໃຫ້ບໍລິການການກວດສອບຢ່າງລະອຽດ) ທີ່ດຳເນີນການໃນນາມຂອງລັດຖະບານປະເທດຄູ່ຮ່ວມສັນຍານັ້ນ. ເຖິງຢ່າງໃດກໍ່ຕາມ, ຍັງມີຄວາມເປັນໄປໄດ້ວ່າໃນລະບົບ LAS ອາດໃຫ້ອົງການກວດສອບຢັ້ງຢືນຄວາມເປັນຈິງທີ່ໄດ້ຮັບການຈ້າງໂດຍຜູ້ເຂົ້າຮ່ວມໃນຕະຫຼາດເປັນຜູ້ກວດສອບຢືນຢັນ ຄວາມເປັນຈິງໃນບັນຫາໃດບັນຫາໜຶ່ງ ຫຼື ທັງສອງບັນຫາ ເຊັ່ນ: ອາດໃຫ້ອົງການທີ່ດຳເນີນການຢູ່ໃນຂັ້ນຕອນ ຜະລິດໄມ້ໃນຂອບເຂດອຳນາດຂອງປະເທດຄູ່ຮ່ວມສັນຍາ. ຖ້າຫາກໃຫ້ກວດສອບ ໃນບັນຫາທີ່ຄຸ້ມຄອງຕ່ອງໂສ້ການສະໜອງ ໃນເອກະສານນີ້ຈະຖືວ່າເປັນຜູ້ຄຸ້ມຄອງການຮັບປະກັນຄວາມຖືກຕ້ອງຕາມກົດໝາຍທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ. ພວກເຂົາອາດດຳເນີນການທັງໝົດ ຕ່ອງໂສ້ການສະໜອງຕັ້ງແຕ່ການຕັດໄມ້ ຜ່ານການຂົນສົ່ງ ແລະ ການຜະລິດໄປຈົນເຖິງການສົ່ງອອກ.

ເຫດຜົນທີ່ຕ້ອງມີການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດບັນບ່ອນອີງຄື:

- ການຍອມຮັບຄວາມເປັນຈິງວ່າ ຜູ້ເຂົ້າຮ່ວມໃນຕະຫຼາດຈຳນວນຫຼາຍໄດ້ສ້າງລະບົບຄຸ້ມຄອງຂຶ້ນມາໃຊ້ແລ້ວ ເຊິ່ງມຸ້ງຫວັງເພື່ອສະແດງໃຫ້ເຫັນເຖິງ ຄວາມຖືກຕ້ອງຕາມກົດໝາຍຂອງໄມ້ ແລະ/ຫຼື ການຄຸ້ມຄອງປ່າໄມ້ແບບຍືນຍົງ. ໃນບາງກໍລະນີ, ລະບົບການຄຸ້ມຄອງເຫຼົ່ານີ້ໄດ້ຮັບການຮັບປະກັນຈາກອົງການປະເມີນຄວາມສອດຄ່ອງຂອງຝ່າຍທີສາມ ໂດຍໃຊ້ມາດຖານທີ່ກວມເອົາການປະຕິບັດຕາມກົດໝາຍ ແລະ ການຕິດຕາມສິນຄ້າ.
- ເພື່ອເປັນການຫຼີກລ່ຽງການສິ້ນເປືອງທາງດ້ານການບໍລິຫານທີ່ບໍ່ຈຳເປັນ ທີ່ອາດເກີດຂຶ້ນຈາກການດຳເນີນງານລະບົບການອອກໃບອະນຸຍາດ ທັງສຳລັບຜູ້ເຂົ້າຮ່ວມໃນຕະຫຼາດທີ່ຈັດການການສົ່ງອອກໃນປະລິມານຫຼາຍ ແລະ ສຳລັບໜ່ວຍງານທາງການທີ່ມີອາດນາດໃນການອອກໃບອະນຸຍາດຂອງປະເທດຄູ່ຮ່ວມສັນຍາ



ເອກະສານສະບັບນີ້ຈະໃຫ້ແນວທາງສຳລັບຜູ້ກຳລັງພັດທະນາລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍສຳລັບການອອກໃບອະນຸຍາດ FLEGT ຂອງສະຫະພາບເອີຣົບ ໂດຍມີການອະທິບາຍວ່າລັດຖະບານ ແລະ ອົງປະກອບທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ ຂອງລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍຂອງໄມ້ວ່າຈະປະຕິບັດໄດ້ຄືແນວໃດ.

## 1. ຄວາມຮັບຜິດຊອບສຳລັບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ການອອກໃບອະນຸຍາດ

ຄວາມຮັບຜິດຊອບສູງສຸດສຳລັບການອອກໃບອະນຸຍາດ ແມ່ນຢູ່ກັບລັດຖະບານປະເທດຄູ່ຮ່ວມສັນຍາຂອງຂໍ້ຕົກລົງ VPA ປະເທດຄູ່ຮ່ວມສັນຍາແຕ່ລະປະເທດຈະມອບໝາຍພາລະກິດໃນການອອກໃບອະນຸຍາດ FLEGT ໃຫ້ກັບໜ່ວຍງານທາງການທີ່ມີອຳນາດໃນການອອກອະນຸຍາດໃນທຸກກໍລະນີ. ໃບອະນຸຍາດຈະອອກມາບົນພື້ນຖານການສະແດງລະບົບການຄຸ້ມຄອງທີ່ຍອມຮັບໄດ້ ເຊິ່ງຮັບປະກັນວ່າໄມ້ທີ່ໃບອະນຸຍາດຄອບຄຸມເຖິງນັ້ນໄດ້ຮັບການຜະລິດຂຶ້ນມາ ໃນລັກສະນະທີ່ເປັນໄປຕາມນິຍາມຄວາມຖືກຕ້ອງຕາມກົດໝາຍ ແລະ ໄມ້ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ຜະລິດຂຶ້ນມາຢ່າງຜິດກົດໝາຍຈະຖືກກັນອອກໄປຈາກຕ່ອງໂສ້ການສະໜອງ. ລະບົບການຄຸ້ມຄອງດັ່ງກ່າວນັ້ນອາດດຳເນີນການໃນນາມຂອງໜ່ວຍງານລັດ ຫຼື ໂດຍບໍລິສັດຜູ້ເຂົ້າຮ່ວມໃນຕະຫຼາດເອງ. ການອອກໃບອະນຸຍາດທີ່ເອົາຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ ແລະ ເອົາສິນຄ້າທີ່ສົ່ງອອກໄປເປັນບ່ອນອີງອາດດຳເນີນການໄປພ້ອມໆກັນໃນປະເທດຄູ່ຮ່ວມສັນຍາໃດໜຶ່ງ.

ໃນຂະນະທີ່ LAS ລວມເຖິງອົງປະກອບທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ, ລັດຖະບານປະເທດຄູ່ຮ່ວມສັນຍາ ຈະເປັນຜູ້ຮັບຜິດຊອບຕໍ່ການໃຫ້ການອະນຸມັດອົງປະກອບເຫຼົ່ານັ້ນ ແລະ ຮັບປະກັນວ່າພວກມັນມີປະສິດທິພາບບໍ່ແມ່ນສະຫະພາບເອີຣົບ.

ໂຄງສ້າງທີ່ແທ້ຈິງ ແລະ ວິທີການດຳເນີນງານຂອງ LAS ຂອງແຕ່ລະປະເທດຄູ່ຮ່ວມສັນຍາຈະປະກອບເປັນສ່ວນຫຼັກຂອງ VPA ຂອງປະເທດຄູ່ຮ່ວມສັນຍານັ້ນ ແລະ ຈຳເປັນຕ້ອງຕົກລົງເຫັນດີຮ່ວມກັນໃນລະຫວ່າງທີ່ມີການເຈລະຈາກັບສະຫະພາບເອີຣົບ. ຄາດໝາຍວ່າລາຍລະອຽດ ລວມທັງບົດບາດຂອງຜູ້ເຂົ້າຮ່ວມໃນຕະຫຼາດຈະແຕກຕ່າງກັນໄປແດ່ ລະຫວ່າງປະເທດຄູ່ຮ່ວມສັນຍາຕ່າງໆ ຂຶ້ນຢູ່ກັບອົງປະກອບຕ່າງໆເຊັ່ນ: ລາຍລະອຽດຂອງລະບຽບຂໍ້ບັງຄັບໃນບັນຫາປ່າໄມ້, ລະບົບການຄຸ້ມຄອງທີ່ມີໃນປະຈຸບັນ ແລະ ທີ່ສະເໜີໃຫ້ມີການໃຊ້ລະບົບການອອກໃບອະນຸຍາດສົ່ງອອກ/FLEGT ແບບອີເລັກໂຕຣນິກ ແລະ ລັກສະນະສະເພາະຂອງການຄ້າຂອງປະເທດນັ້ນໆ.

ເງື່ອນໄຂປະການໜຶ່ງສຳລັບການອະນຸມັດລະບົບການອອກໃບອະນຸຍາດ ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ ຄືລະບົບທີ່ສາມາດຄວບຄຸມໄດ້ໃນລະດັບດຽວກັນກັບທີ່ໜ່ວຍງານອອກໃບອະນຸຍາດໃຊ້ຄຸ້ມຄອງໃນລະບຽບການອອກໃບອະນຸຍາດທີ່ເອົາການສົ່ງອອກສິນຄ້າເປັນບ່ອນອີງ.

## 2. ການຮັບປະກັນຄວາມຖືກຕ້ອງຕາມກົດໝາຍທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ

ການຄຸ້ມຄອງທີ່ດຳເນີນການໂດຍຜູ້ເຂົ້າຮ່ວມໃນຕະຫຼາດ ຄວນຮັບປະກັນຄວາມສອດຄ່ອງກັບນິຍາມຄວາມຖືກຕ້ອງຕາມກົດໝາຍຂອງປະເທດຄູ່ຮ່ວມສັນຍາ ຫຼື ການຄຸ້ມຄອງຕ່ອງໂສ້ການສະໜອງເພື່ອທີ່ຈະກັນໄມ້ທີ່ບໍ່ຮູ້ແຫຼ່ງທີ່ມາ ຫຼື ໄມ້ທີ່ຜະລິດຂຶ້ນມາຢ່າງຜິດກົດໝາຍອອກໄປ ຈາກລະບົບການຄຸ້ມຄອງເຊັ່ນນີ້ເປັນທີ່ຮູ້ກັນຄື "ການຄຸ້ມຄອງພາຍໃນ" ຕົວຢ່າງ:

- ລະບົບສຳລັບການຮັບປະກັນຄວາມສອດຄ່ອງກັບລະບຽບຂໍ້ບັງຄັບໃນການຈັດການປ່າໄມ້ ແລະ ການຕັດໄມ້.
- ລະບົບໃນການຕິດຕາມໄມ້ທ່ອນຈາກຈຸດຕັດ ໄປຈົນເຖິງສະຖານທີ່ແປຮູບ ຫຼື ສົ່ງອອກ.
- ຕ່ອງໂສ້ຂອງລະບົບການຄຸ້ມຄອງທີ່ດຳເນີນການຢູ່ໃນສະຖານທີ່ແປຮູບເຊື່ອມໂຍງປັດໃຈນຳເຂົ້າກັບຜົນທີ່ອອກມາ.

ການກວດສອບຢືນຢັນຄວາມເປັນຈິງວ່າລະບົບເຫຼົ່ານີ້ປະຕິບັດໄດ້ ອາດເຮັດໄດ້ຜ່ານທາງການຮັບປະກັນວ່າເຂົ້າມາດຖານພາຍນອກອັນເປັນທີ່ຍອມຮັບກັນ ເຊິ່ງລວມເຖິງຫຼັກການ ແລະ ບັນທັດຖານທີ່ມີຄວາມສຳພັນກັນ ໂດຍອົງການທີ່ມີຄຸນນະສົມບັດທີ່ເປັນທີ່ຍອມຮັບ ໂດຍໃຊ້ບັນທັດຖານທີ່ຖືກຕ້ອງເພາະສົມຂອງຕົນເອງ ຫຼື ຜ່ານການກວດສອບຢືນຢັນຄວາມເປັນຈິງໂດຍກົງໂດຍໜ່ວຍງານທາງການທີ່ມີອຳນາດອອກໃບອະນຸຍາດ. ລະບົບເຫຼົ່ານີ້ເປັນທີ່ຮູ້ຈັກກັນຄື ການຄຸ້ມຄອງ "ພາຍນອກ" ຕົວຢ່າງ:

- ໃນກໍລະນີໃຊ້ລະບົບການຮັບປະກັນກັບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ. ລະບົບນີ້ຈະຕ້ອງໄດ້ຮັບການອະນຸມັດຈາກໜ່ວຍງານທີ່ມີອຳນາດອອກໃບຮັບຮອງຂອງປະເທດຄູ່ຮ່ວມສັນຍາ ເຊິ່ງກ່ຽວຂ້ອງກັບການຮັບປະກັນວ່າມາດຖານລະບົບສຳລັບການຮັບຮອງຖານະອົງກອນທີ່ເຮັດໜ້າທີ່ຮັບຮອງ ແລະ ລະບົບການປະເມີນທີ່ໃຊ້ໄດ້ທັງໝົດ ເຮັດໄດ້ຕາມບັນທັດຖານທີ່ກຳນົດໄວ້.
- ໃນກໍລະນີທີ່ນຳໃຊ້ລະບົບການຮັບປະກັນຄວາມຖືກຕ້ອງເໝາະສົມ ທີ່ບໍ່ໄດ້ຖືກຄວບຄຸມໂດຍລະບົບການຮັບຮອງ, ບັນທັດຖານທີ່ໃຊ້ໂດຍອົງການກວດສອບຢືນຢັນຄວາມເປັນຈິງ. ຄຸນນະສົມບັດ ແລະ ຂະບວນການປະເມີນຈະຕ້ອງຜ່ານການອະນຸມັດໃນລັກສະນະທີ່ຄ້າຍຄືກັນ.
- ທາງເລືອກສຸດທ້າຍຄືກໍລະນີທີ່ໜ່ວຍງານ ທີ່ມີອຳນາດອອກໃບອະນຸຍາດ ຫຼື ອົງການທີ່ດຳເນີນງານໃນນາມຂອງໜ່ວຍງານນີ້ ປະຕິບັດການກວດສອບຢືນຢັນໂດຍກົງວ່າການຄຸ້ມຄອງທີ່ດຳເນີນການໂດຍຜູ້ເຂົ້າຮ່ວມໃນຕະຫຼາດເປັນຈິງຫຼືບໍ່.

ໃນແຕ່ລະກໍລະນີ, ຈະຕ້ອງມີການຕັ້ງບັນທັດຖານ ແລະ ຂະບວນການທີ່ໃຊ້ໂດຍໜ່ວຍງານທີ່ມີອຳນາດອອກໃບຮັບຮອງສຳລັບການປະເມີນ ແລະ ການອະນຸມັດລະບົບການຮັບຮອງ. ລະບົບການຮັບປະກັນຄວາມຖືກເໝາະສົມ ແລະ ການຄຸ້ມຄອງຜູ້ເຂົ້າຮ່ວມໃນຕະຫຼາດເປັນແຕ່ລະບໍລິສັດ ຂຶ້ນກັບບັນທັດຖານ ແລະ ວິທີການເຫຼົ່ານີ້ຈະປະກອບເປັນສ່ວນເນື້ອໃນຂອງສັນຍາ VPA.

ໂດຍທົ່ວໄປແລ້ວ, ລະບົບຄຸ້ມຄອງຜູ້ເຂົ້າຮ່ວມໃນຕະຫຼາດທີ່ມີສິດທິເຂົ້າຮ່ວມໄດ້ນັ້ນຄວນຈະລວມມາດຕະການສະແດງໃຫ້ເຫັນຄວາມສອດຄ່ອງກັບອົງການທີ່ສຳພັນກັນຂອງ LAS ລະບົບການຄຸ້ມຄອງພາຍໃນທີ່ຖືກຍອມຮັບໄດ້ ເຊິ່ງຄວນຈະລວມເອົາອົງປະກອບດັ່ງລຸ່ມນີ້ເຂົ້ານຳ:

- ຄຳອະທິບາຍຢ່າງລະອຽດສຳລັບລະບົບ ທີ່ຄອບຄຸມກິດຈະກຳທັງໝົດທີ່ສຳພັນກັນຂອງຜູ້ເຂົ້າຮ່ວມໃນຕະຫຼາດ ແລະ ໃນກໍລະນີທີ່ເຮັດໄດ້ຄວນມີຄຳອະທິບາຍລາຍລະອຽດຂອງຜູ້ຈັດສົ່ງດ້ວຍ.
- ບັນທຶກທີ່ເຂົ້າເຖິງໄດ້, ກວດສອບຢືນຢັນຄວາມເປັນຈິງໄດ້, ທີ່ສະແດງໃຫ້ເຫັນການດຳເນີນງານທີ່ມີປະສິດທິພາບຂອງລະບົບ.
- ຄຳນິຍາມຂອງຄຸນສະສົມບັດ, ຄວາມຮັບຜິດຊອບ ແລະ ອຳນາດຂອງບຸກຄະລາກອນທີ່ດຳເນີນການລະບົບນັ້ນ.
- ຮຽກຮ້ອງລາຍລະອຽດຂອງການກວດສອບຕາມປົກກະຕິຂອງລະບົບ ແລະ ບັນທຶກການກວດສອບນັ້ນ.
- ວິທີການຂອງການປະຕິບັດການແກ້ໄຂໃຫ້ຖືກຕ້ອງ ເພື່ອປ້ອງກັນກັນບໍ່ໃຫ້ເກີດການບໍ່ເຊື່ອຟັງທີ່ກວດພົບໃນລະຫວ່າງການຄຸ້ມຄອງການດຳເນີນງານ ຫຼື ການກວດສອບຂຶ້ນມາອີກ.
- ການທົບທວນຈັດການເປັນປະຈຳສະໝ່ຳສະເໝີ ແລະ ການລິເລີ່ມປະຕິບັດການປັບປຸງໃຫ້ມັນດີຂຶ້ນ.






## 3. ການອອກໃບອະນຸຍາດ

### 3.1 ການອອກໃບອະນຸຍາດທີ່ເອົາສິນຄ້າທີ່ຖືກສົ່ງໄປເປັນບ່ອນອີງ

ໃບອະນຸຍາດ FLEGT ທີ່ເອົາສິນຄ້າທີ່ຖືກສົ່ງໄປເປັນບ່ອນອີງທີ່ເໝາະສົມທີ່ຈະນຳມາໃຊ້ໃນກໍລະນີທີ່ຜູ້ສົ່ງອອກມີຄວາມຖີ່ໃນການສົ່ງອອກໜ້ອຍ ຫຼື ໃນກໍລະນີທີ່ປະເທດຄູ່ຮ່ວມສັນຍາມີຄວາມຕ້ອງການທີ່ຈະປະເມີນພາສີສົ່ງອອກ ຢູ່ຈຸດສົ່ງອອກເພື່ອຈະໃຫ້ໄດ້ໃບອະນຸຍາດເອົາສິນຄ້າທີ່ສົ່ງໄປເປັນບ່ອນອີງ. ຜູ້ສົ່ງອອກຈະຕ້ອງສະແດງຫຼັກຖານຕໍ່ໜ່ວຍງານ ທີ່ມີສິດອຳນາດອອກໃບອະນຸຍາດຂອງປະເທດຄູ່ຮ່ວມສັນຍາວ່າ ຜະລິດຕະພັນລາຍການນັ້ນໄດ້ຮັບການຜະລິດຂຶ້ນມາຕາມອົງປະກອບທັງໝົດຂອງ LAS ຂອງປະເທດນັ້ນ. ຫຼັກຖານນີ້ຈະຕ້ອງຕັ້ງຢູ່ບັນການຄວບຄຸມທີ່ໄດ້ຮັບການອະນຸມັດເຊິ່ງຄອບຄຸມແຕ່ລະຂັ້ນຕອນໃນຂະບວນການຜະລິດ.

ຜູ້ຂໍໃບອະນຸຍາດສາມາດສາທິດໃຫ້ເຫັນຄວາມຖູກຕ້ອງຕາມກົດໝາຍຂອງສິນຄ້າລາຍການໜຶ່ງໆໄດ້ດ້ວຍການ:

- ສະເໜີຂໍ້ມູນທີ່ຜະລິດໂດຍລະບົບຄຸ້ມຄອງພາຍໃນຂອງຜູ້ສະເໜີ ແລະ ກວດສອບຢືນຢັນຄວາມເປັນຈິງແລ້ວ ຫຼື ໂດຍລະບົບຄຸ້ມຄອງຂອງຜູ້ອື່ນເຊິ່ງຢູ່ໃນຕ່ອງໂສ້ການສະໜອງນຳກັນໃນກໍລະນີທີ່ຈຳເປັນ.
- ສະເໜີຂໍ້ມູນທີ່ສ້າງຂຶ້ນມາໂດຍລະບົບກວດສອບຢືນຢັນຄວາມເປັນຈິງທີ່ດຳເນີນການໂດຍໜ່ວຍງານລັດ ຫຼື ອົງການພາກເອກະຊົນທີ່ໄດ້ຮັບການອະນຸຍາດແລ້ວ ແລະ ດຳເນີນການໃນນາມຂອງລັດຖະບານ.

ການຄຸ້ມຄອງທີ່ຜ່ານການອະນຸມັດແລ້ວຈຳເປັນຕ້ອງມີໃນທຸກຂັ້ນຕອນຂອງຕ່ອງໂສ້ການສະໜອງ ໃນກໍລະນີສິນຄ້າທີ່ສົ່ງໄປເປັນຜະລິດຕະພັນທີ່ແປຮູບແລ້ວ ການກວດສອບຢືນຢັນຄວາມເປັນຈິງຂອງປະສິດທິຜົນຂອງການຄຸ້ມຄອງເຫຼົ່ານີ້ຈະຕ້ອງປະຕິບັດໃນປ່າ, ສະຖານທີ່ເກັບມ້ຽນກາງທາງ, ສະຖານທີ່ແປຮູບ ແລະ ທີ່ທ່າເຮືອທີ່ສົ່ງອອກ, ການກວດສອບຢືນຢັນຄວາມເປັນຈິງຂອງການຂົນສົ່ງໄມ້ທ່ອນ ອາດຈຳ ກັດຢູ່ທີ່ປ່າ, ຂັ້ນຕອນທີ່ສະຖານທີ່ເກັບມ້ຽນກາງທາງ ແລະ ຂັ້ນຕອນທີ່ທ່າເຮືອ.

ຕົວຢ່າງ ຜູ້ດຳເນີນການໂຮງເລື່ອຍ ທີ່ຕ້ອງການສົ່ງອອກໄມ້ທີ່ເລື່ອຍແລ້ວໜຶ່ງຊຸດ ໄປຍັງສະຫະພາບເອີຣົບ ອາດຕ້ອງຊື້ໄມ້ທ່ອນຈາກພື້ນທີ່ປ່າໄມ້ທີ່ມີໃບຮັບຮອງການຈັດການປ່າໄມ້ພາຍໃຕ້ລະບົບ ທີ່ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸ ຍາດໄດ້ອະນຸມັດແລ້ວເພື່ອທີ່ຈະໄດ້ໃບອະນຸຍາດສຳລັບການສົ່ງສິນຄ້າຄັ້ງນັ້ນ ຜູ້ສົ່ງອອກຍັງຈຳເປັນຕ້ອງສະເໜີຫຼັກຖານຕໍ່ໜ່ວຍງານ ທີ່ອຳນາດໃນການອອກໃບອະນຸຍາດວ່າບໍ່ມີວັດຖຸດິບໃດໆ ທີ່ໃຊ້ໃນການຜະລິດມາຈາກແຫຼ່ງອື່ນນອກຈາກພື້ນທີ່ປ່າທີ່ ຜ່ານການຮັບຮອງແລ້ວ. ຫຼັກຖານນີ້ສາມາດຜະລິດຂຶ້ນ ໂດຍລະບົບຕິດຕາມໄມ້ທ່ອນ ແຫ່ງຊາດທີ່ລັດຖະບານເປັນຜູ້ດຳເນີນການ ຫຼື ໂດຍຕ່ອງໂສ້ຂອງລະບົບການຄຸ້ມຄອງຂອງຜູ້ສົ່ງອອກຈາກໜ່ວຍງານທີ່ ມີອຳນາດໃນການອອກໃບອະນຸຍາດໄດ້ອະນຸມັດແລ້ວ.

ທາງເລືອກບາງຢ່າງສຳລັບການອອກໃບອະນຸຍາດທີ່ເອົາສິນຄ້າທີ່ສົ່ງໄປເປັນບ່ອນອີງສະແດງໄວ້ໃນພາບສະແດງທີ 1.

### 3.2 ການອອກໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ

ໜ່ວຍງານທີ່ມີອຳນາດອອກໃບອະນຸຍາດ ຂອງປະເທດຄູ່ຮ່ວມສັນຍາຈະເປັນຜູ້ອອກໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນບ່ອນອີງ ໂດຍການຕັ້ງຢູ່ບົນຫຼັກຖານ ທີ່ຜູ້ສົ່ງອອກນຳມາສະແດງວ່າມີການຄຸ້ມຄອງພຽງພໍ ເພື່ອຮັບປະກັນວ່າການສົ່ງອອກທັງໝົດຂອງປະເທດຄູ່ຮ່ວມສັນຍາ ທີ່ມຸ້ງໄປຍັງສະຫະພາບເອີຣົບມາຈາກແຫຼ່ງທີ່ຖືກກົດໝາຍ.

| ຂັ້ນຕອນຕ່ອງໂສ້ການສະໜອງ | (1) ການພິສູດວ່າເປັນຈິງຕາມລັດຖະບານໄດ້ລະບຸ | (2) ການກວດຄວາມຖືກຕ້ອງຕາມກົດໝາຍທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານດ້ວຍການຄຸ້ມຄອງຕ່ອງໂສ້ການສະໜອງຂອງລັດຖະບານ | (3) ການຄຸ້ມຄອງທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານທັງໝົດ |
| --- | --- | --- | --- |
|  ການຈັດການປ່າໄມ້ທີ່ຖືກກົດໝາຍກວດສອບຢືນຢັນແລ້ວວ່າເປັນຈິງ | ຄວາມຖືກຕ້ອງຕາມກົດໝາຍກວດສອບໂດຍຜູ້ກວດສອບຂອງລັດຖະບານ | ຄວາມຖືກຕ້ອງຕາມກົດໝາຍກວດສອບຜ່ານລະບົບການຮັບຮອງທີ່ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ | ຄວາມຖືກຕ້ອງຕາມກົດໝາຍກວດສອບຜ່ານລະບົບການຮັບຮອງທີ່ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ |
|  ຕ່ອງໂສ້ການສະໜອງທີ່ກວດສອບຢືນຢັນແລ້ວວ່າເປັນຈິງ | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຊາດ | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຊາດ | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຜູ້ດຳເນີນການກວດສອບ ແລະ ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ |
|  ລາຍການສົ່ງອອກກວດສອບຢືນຢັນແລ້ວວ່າເປັນຈິງ | ການສົ່ງອອກສິນຄ້າກວດສອບໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ | ການສົ່ງອອກສິນຄ້າກວດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ | ການສົ່ງອອກສິນຄ້າກວດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ |

**ພາບທີ 1:** ຕົວຢ່າງທາງເລືອກສຳລັບການອອກໃບອະນຸຍາດທີ່ເອົາສິນຄ້າສົ່ງອອກໄປເປັນຖານ (ຫ້ອງມີສີແມ່ນການອອກໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມຕະຫຼາດເປັນຖານ)




ຜູ້ສົ່ງອອກສາມາດສະແດງໃຫ້ເຫັນເຖິງການຄຸ້ມຄອງດັ່ງກ່າວທີ່ຜູ້ສົ່ງອອກນຳມາໃຊ້ຜ່ານທາງ:

- ລະບົບຄຸ້ມຄອງພາຍໃນຂອງຜູ້ສົ່ງອອກ ທີ່ໄດ້ການຮັບຮອງພາຍໃຕ້ລະບຽບການອັນເປັນທີ່ຍອມຮັບກັນ ເຊິ່ງໄດ້ຮັບຄວາມອະນຸມັດເຫັນດີໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ.
- ລະບົບຄຸ້ມຄອງພາຍໃນຂອງຜູ້ສົ່ງອອກໄດ້ຮັບການປະເມີນ ແລະ ອະນຸມັດເຫັນດີໂດຍກົງຈາກໜ່ວຍງານ ທີ່ມີອຳນາດໃນການອອກໃບອະນຸຍາດ ຫຼື ອົງການອື່ນໆທີ່ປະຕິບັດງານໃນນາມຂອງໜ່ວຍງານນີ້.

ບໍ່ວ່າຈະໃນກໍລະນີໃດ ທີ່ຜູ້ສົ່ງອອກອາໃສການຄຸ້ມຄອງຕ່ອງໂສ້ການສະໜອງໃນຊ່ວງຕົ້ນ ຈະຕ້ອງມີການກວດສອບການປະຕິບັດຕາມກົດໝາຍ ແລະ ການຕິດຕາມວັດຖຸທີ່ມີລັດຖະບານເປັນຜູ້ດຳເນີນການ ຫຼື ລະບົບຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ທີ່ໄດ້ຮັບການອະນຸມັດເຫັນດີແລ້ວ.

ການອອກໃບອະນຸຍາດຜູ້ເຂົ້າຮ່ວມໃນຕະຫຼາດ ຈະຍິນຍອມໃຫ້ມີການອອກໃບອະນຸຍາດ FLEGT ທີ່ຄອບຄຸມການສົ່ງອອກສິນຄ້າທັງໝົດຂອງຜູ້ສົ່ງອອກທັງໝົດ ໂດຍບໍ່ຕ້ອງມີການກວດການສົ່ງສິນຄ້າແຕ່ລະຊຸດ ຈົນເມື່ອໃດທີ່ຜູ້ສົ່ງອອກ ແລະ ຜູ້ປະກອບການຂົນສົ່ງຂອງຕົນຮັກສາລະບົບ ຮັບປະກັນຄວາມຖືກຕ້ອງທາງດ້ານກົດໝາຍທີ່ໄດ້ຮັບການອະນຸມັດໄວ້ຢູ່ແລ້ວ.
ການໃຫ້ອຳນາດດັ່ງກ່າວເຮັດໃຫ້ຕ້ອງມີການປະເມີນຜົນເປັນປະຈຳ ແລະ ສະໝໍ່າສະເໝີເພື່ອຮັບປະກັນວ່າລະບົບທີ່ໄດ້ຮັບການອະນຸມັດເຫຼົ່ານັ້ນຍັງມີຢູ່ ແລະ ຈາກບັນທຶກຜະລິດຕະພັນທີ່ຜ່ານລະບົບໄປສະແດງໃຫ້ເຫັນວ່າມີການໃຊ້ການຄຸ້ມຄອງຢ່າງມີປະສິດທິຜົນ. ຜູ້ເຂົ້າຮ່ວມໃນຕະຫຼາດຈະຕ້ອງແນະນຳໜ່ວຍງານທີ່ມີອຳນາດ (ຫຼືຈະໃຫ້ຊັດເຈນແມ່ນອົງການທີ່ໃຫ້ການຮັບຮອງ ຫຼື ອົງການຕອບສອບຢືນຢັນຄວາມເປັນຈິງ). ຖ້າພວກເຂົາໄດ້ປະຕິບັດປ່ຽນແປງຢ່າງມີຫຼັກຖານສຳຄັນຕໍ່ການຄຸ້ມຄອງໃນລະຫວ່າງເວລາທີ່ມີການປະເມີນ. ຕາມປົກກະຕິຈຳເປັນຈະຕ້ອງມີການປະເມີນຊໍ້າ, ຜູ້ສົ່ງອອກທີ່ຂໍໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານຈະຕ້ອງໃຫ້ຂໍ້ມູນທີ່ຈຳເປັນທີ່ຈະມີຢູ່ໃນໃບອະນຸຍາດ FLEGT ສຳລັບສິນຄ້າທີ່ສົ່ງໄປແຕ່ລະຄັ້ງ ແລະ ຍັງຈະຕ້ອງໃຫ້ບັນທຶກລາຍການສິນຄ້າທີ່ສົ່ງໄປແຕ່ລະຄັ້ງກັບໜ່ວຍງານ ທີ່ມີອຳນາດໃນການອອກໃບອະນຸຍາດ. ມີວິທີການທີ່ເປັນທາງເລືອກຫຼາຍວິທີ ທີ່ຜູ້ເຂົ້າຮ່ວມໃນຕະຫຼາດສາມາດໃຫ້ຫຼັກຖານວ່າມີການຄຸ້ມຄອງພຽງພໍ. ມີຕົວຢ່າງສອງສາມຕົວຢ່າງສະແດງໄວ້ໃນພາບທີ່ສອງ ແລະ ອະທິບາຍໄວ້ດັ່ງລຸ່ມນີ້:

1. **ການກວດສອບຢືນຢັນຄວາມເປັນຈິງແບບຄົບວົງຈອນຂອງລັດຖະບານ** - ເຊິ່ງຈະປະກອບດ້ວຍການກວດສອບຢືນຢັນ ຄວາມຖືກຕ້ອງຕາມກົດໝາຍທີ່ດຳເນີນການໂດຍລັດຖະບານ ແລະ ລະບົບຕິດຕາມໄມ້ຂອງຊາດທີ່ສາມາດຕິດຕາມໄມ້ທ່ອນທັງໝົດທີ່ຕັດໃນປະເທດ ຫຼື ພູມມີພາກນັ້ນຍ້ອນກັບໄປເຖິງປ່າທີ່ເປັນຕົ້ນກຳເນີດໄດ້. ຜູ້ສົ່ງອອກທີ່ມີຄວາມຖືກຕ້ອງຈະໄດ້ຮັບໃບອະນຸຍາດ ທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ຖ້າຫາກວ່າເຂົາສາມາດສະແດງໃຫ້ເຫັນວ່າໃຊ້ສະເພາະໄມ້ທ່ອນທີ່ສາມາດຕິດຕາມໄດ້ດ້ວຍການໃຊ້ລະບົບຂອງຊາດ.

2. **ການກວດສອບຢືນຢັນຄວາມຖືກຕ້ອງຕາມກົດໝາຍທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ດ້ວຍການຄຸ້ມຄອງສາຍການຂົນສົ່ງຂອງລັດຖະບານ** - ຕົວຢ່າງ: ໂຮງເລື່ອຍທີ່ສົ່ງອອກໄມ້ອາດຊື້ໄມ້ທ່ອນຈາກພື້ນທີ່ປ່າຫຼາຍແຫ່ງ, ແຕ່ລະແຫ່ງມີໃບຮັບຮອງການຄຸ້ມຄອງປ່າໄມ້ພາຍໃຕ້ລະບົບ ທີ່ໄດ້ຮັບການອະນຸມັດເຫັນດີແລ້ວ. ໃນຄະນະທີ່ການເຄື່ອນຍ້າຍໄມ້ທ່ອນໄດ້ຮັບການຄຸ້ມຄອງດ້ວຍລະບົບການຕິດຕາມໄມ້ຂອງຊາດ, ໂຮງເລື່ອຍຈະມີຄວາມສາມາດທີ່ຈະໄດ້ຮັບໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ, ຖ້າບໍລິສັດສາມາດສະແດງໃຫ້ເຫັນວ່ານຳໃຊ້ແຕ່ໄມ້ທີ່ມາຈາກພື້ນທີ່ທີ່ໄດ້ຮັບການຮັບຮອງ ແລະ ສາມາດຕິດຕາມໄດ້ຜ່ານລະບົບຕິດຕາມຂອງຊາດ.

| **ຂັ້ນຕອນຕ່ອງໂສ້ການສະໜອງ** | (1) ການພິສູດວ່າເປັນຈິງຕາມລັດຖະບານໄດ້ລະບຸ | | (3) ການຄຸ້ມຄອງທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານທັງໝົດ |
|---|---|---|---|
|  **ການຄຸ້ມຄອງປ່າໄມ້ທີ່ຖືກກົດໝາຍ ກວດສອບຢືນຢັນແລ້ວວ່າເປັນຈິງ** | ຄວາມຖືກຕ້ອງຕາມກົດໝາຍກວດສອບໂດຍຜູ້ກວດສອບຂອງລັດຖະບານ | ຄວາມຖືກຕ້ອງຕາມກົດໝາຍກວດສອບຜ່ານລະບົບການຮັບຮອງທີ່ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ | ຄວາມຖືກຕ້ອງຕາມກົດໝາຍກວດສອບຜ່ານລະບົບການຮັບຮອງທີ່ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ |
|  **ຕ່ອງໂສ້ການສະໜອງທີ່ກວດສອບຢືນຢັນແລ້ວວ່າເປັນຈິງ** | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຊາດ | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຊາດ | ຕ່ອງໂສ້ການສະໜອງຄອບຄຸມໂດຍລະບົບການຕິດຕາມໄມ້ຂອງຜູ້ດຳເນີນການກວດສອບ ແລະ ອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ |
|  **ຜູ້ເຂົ້າຮ່ວມໃນຕະຫຼາດທີ່ມີໃບໃບອະນຸຍາດ** | ລະບົບການຄຸ້ມຄອງຂອງຜູ້ເຂົ້າຮ່ວມໃນຕະຫຼາດກວດສອບ ແລະ ໄດ້ຮັບການອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດການສົ່ງອອກໄປຍັງສະຫະພາບເອີຣົບທັງໝົດໄດ້ໃບອະນຸຍາດຕາບໃດທີ່ການອະນຸຍາດມີຜົນ | ລະບົບການຄຸ້ມຄອງຂອງຜູ້ເຂົ້າຮ່ວມໃນຕະຫຼາດກວດສອບ ແລະ ໄດ້ຮັບການອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດການສົ່ງອອກໄປຍັງສະຫະພາບເອີຣົບທັງໝົດໄດ້ໃບອະນຸຍາດຕາບໃດທີ່ການອະນຸຍາດມີຜົນ | ລະບົບການຄຸ້ມຄອງຂອງຜູ້ເຂົ້າຮ່ວມໃນຕະຫຼາດກວດສອບ ແລະ ໄດ້ຮັບການອະນຸມັດໂດຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດການສົ່ງອອກໄປຍັງສະຫະພາບເອີຣົບທັງໝົດໄດ້ໃບອະນຸຍາດຕາບໃດທີ່ການອະນຸຍາດມີຜົນ |

**ພາບທີ 1:** ຕົວຢ່າງທາງເລືອກສຳລັບການອອກໃບອະນຸຍາດທີ່ເອົາສິນຄ້າສົ່ງອອກໄປເປັນຖານ (ຫ້ອງມີສີແມ່ນການອອກໃບອະນຸຍາດມີຜູ້ເຂົ້າຮ່ວມຕະຫຼາດເປັນຖານ)






**3. ລະບົບການຄຸ້ມຄອງທັງໝົດມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ** - ຕົວຢ່າງບໍລິສັດໄມ້ອັດທີ່ລະບົບການຈັດການ ທີ່ໄດ້ຮັບການຮັບຮອງຜ່ານການອະນຸມັດເຫັນດີແລ້ວຄອບຄຸມການດຳເນີນການປ່າໄມ້, ການຂົນສົ່ງໄມ້ທ່ອນ, ການຜະລິດໄມ້ອັດ ແລະ ການນຳສົ່ງຜະລິດຕະພັນໄປຍັງທ່າເຮືອສົ່ງອອກ ຈະມີຄຸນນະສົມບັດໄດ້ຮັບໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ຈົນເມື່ອໃດທີ່ໄມ້ທ່ອນຂອງບໍລິສັດບໍ່ໄດ້ນຳມາຈາກນອກລະບົບນີ້ ຫຼື ຈາກຜູ້ຈັດຫາຈັດສົ່ງລາຍອື່ນທີ່ລະບົບບໍ່ໄດ້ຮັບການອະນຸມັດເຫັນດີໃນກໍລະນີນີ້. ການຮັກສາສະພາບການມີຜົນໃຊ້ຂອງໃບຮັບຮອງແຕລະໃບຈະພຽງພໍທີ່ຈະເຮັດໃຫ້ບໍລິສັດຮັກສານຖານະຜູ້ເຂົ້າຮ່ວມໃນຕະຫຼາດໄວ້.

## 4. ການອອກໃບອະນຸຍາດ

ໃບອະນຸຍາດ FLEGT ຈະຕ້ອງອອກໃນນາມຂອງໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຂອງປະເທດຄູ່ຮ່ວມສັນຍາແບບສະໝັກໃຈ ໃຫ້ກັບການສົ່ງສິນຄ້າໄມ້ທີ່ຂໍມາທັງໝົດກ່ອນທີ່ຈະສົ່ງອອກໄປຍັງສະຫະພາບເອີຣົບ.

ລະບຽບ FLEGT ຂອງສະຫະພາບເອີຣົບ ກຳນົດວ່າຕ້ອງມີໃບອະນຸຍາດໜຶ່ງໃບທີ່ຄອບຄຸມການສົ່ງສິນຄ້າແຕ່ລະຄັ້ງຈາກປະເທດຄູ່ຮ່ວມສັນຍາໃຫ້ກັບໜ່ວຍງານທີ່ມີຄວາມສາມາດໃນການຈັດການບັນຫານີ້ ຂອງສະມາຊິກສະພາບເອີຣົບໃນເວລາດຽວກັນກັບການໃຫ້ເອກະສານພາສາອາກອນ ສຳລັບສິນຄ້າຊຸດນັ້ນ. ໜ່ວຍງານຄຸ້ມຄອງຊາຍແດນຂອງສະຫະພາບເອີຣົບຈະກວດສອບຢືນຢັນວ່າສິນຄ້າທີ່ສົ່ງມານັ້ນມີອະນຸຍາດທີ່ຍັງມີຜົນບັງຄັບໃຊ້ແທ້ຈິງ ກ່ອນທີ່ຈະອອກອະນຸຍາດໃຫ້ສິນຄ້າເຄື່ອນຍ້າຍໄປມາໄດ້ຢ່າງເປັນອິດສະຫຼະໃນສະຫະພາບເອີຣົບ.




ສຳລັບໃບອະນຸຍາດທີ່ເອົາສິນຄ້າທີ່ສົ່ງໄປເປັນຖານ, ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຂອງປະເທດຄູ່ຮ່ວມສັນຍາຈະອອກໃບອະນຸຍາດ ໃຫ້ຜູ້ສົ່ງອອກບົນພື້ນຖານການມີຫຼັກຖານສະແດງຄວາມຖືກຕ້ອງກົດໝາຍ ຂອງການສົ່ງສິນຄ້າແຕ່ລະຄັ້ງ ເຊິ່ງສະແດງອອກດ້ວຍການມີການຄວບຄຸມ ທີ່ໄດ້ຮັບການອະນຸມັດເຫັນດີຕະຫຼອດສາຍການຈັດຫາຈັດສົ່ງໄມ້.

ການໃຊ້ຂໍ້ມູນທີ່ດີກ່ຽວກັບຂໍ້ກຳນົດກົດລະບຽບ ໃນການອອກໃບອະນຸຍາດແກ່ຜູ້ສົ່ງອອກເປັນສິ່ງສຳຄັນຫຼາຍ. ວັດຖຸປະສົງກໍ່ຄືເພື່ອຫຼີກລ່ຽງກໍລະນີທີ່ຜູ້ສົ່ງອອກໄດ້ຍື່ນຂໍໃບອະນຸຍາດ FLEGT ສຳລັບການສົ່ງສິນຄ້າທີ່ພ້ອມຈະນຳຂຶ້ນເຮືອແລ້ວມາພົບວ່າວັດຖຸດິບຂອງພວກເຂົາບໍ່ໄດ້ຜ່ານການຄຸ້ມຄອງ ທີ່ໄດ້ຮັບການອະນຸມັດເຫັນດີເລີຍ ແລະ ການອະນຸມັດຍ້ອນຫຼັງໃນກໍລະນີເຫຼົ່ານັ້ນກໍ່ບໍ່ມາຄວາມສາມາດທີ່ເປັນໄປໄດ້.

ສຳລັບໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ມີຫຼາຍແນວທາງທີ່ເປັນໄປໄດ້ເຊິ່ງຈະຕ້ອງລົງລາຍລະອຽດ ແລະ ເຫັນດີເຫັນພ້ອມກັນກ່ອນໃນລະຫວ່າງການເຈລະຈາ VPA ແນວທາງທີ່ເປັນໄປໄດ້ອາດມີຄືດັ່ງລຸ່ມນີ້:

- ໜ່ວຍງານທີ່ມີອຳນາດ ໃນການອອກໃບອະນຸຍາດອອກໃບອະນຸຍາດ FLEGT ມາດຕະຖານມາໄວ້ກ່ອນໃຫ້ກັບຜູ້ເຂົ້າຮ່ວມໃນຕະຫຼາດ ທີ່ຜ່ານການອະນຸມັດແລ້ວ ແລະ ມອບອຳນາດໃຫ້ພວກເຂົາໃນການເຕີມລາຍລະອຽດທີ່ຈຳເປັນໃຫ້ຄົບຖ້ວນ ແລະ ຈັດສັນໃບອະນຸຍາດໃຫ້ການສົ່ງອອກສິນຄ້າແຕ່ລະຄັ້ງເມື່ອຕ້ອງການແບບຟອມນີ້ອາດໃສ່ເລກທີເອົາໄວ້ກ່ອນ. ຜູ້ເຂົ້າຮ່ວມໃນຕະຫຼາດຈະມອບບັນທຶກຂອງການຂົນສົ່ງແຕ່ລະຄັ້ງໃຫ້ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດລະບົບປະເພດນີ້ ຕ້ອງການການຄຸ້ມຄອງທີ່ເຂັ້ມງວດ ເພື່ອຮັບປະກັນວ່າບໍ່ມີໃຜລະເມີດສິດທິໃນການອອກໃບອະນຸຍາດ.
- ໜ່ວຍງານທີ່ມີອຳນາດ ໃນການອອກໃບອະນຸຍາດສາມາດອອກໃບອະນຸຍາດ FLEGT ໄດ້ໃນເວລາທີ່ມີການສົ່ງອອກແຕ່ລະຄັ້ງບົນພື້ນຖານທີ່ຜູ້ເຂົ້າຮ່ວມໃນຕະຫຼາດສະເໜີຫຼັກຖານການກວດສອບຢືນຢັນຄວາມເປັນຈິງ ຂອງລະບົບຄຸ້ມຄອງທີ່ໄດ້ຮັບການອະນຸມັດເຫັນດີແລ້ວ (ຕົວຢ່າງ: ໃບຮັບຮອງລະບົບທີ່ໄດ້ຮັບຄວາມເຫັນດີຈາກໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ).

ຫາກໜ່ວຍງານພາສີຂອງປະເທດຄູ່ຮ່ວມສັນຍາມີອຳນາດ ແລະ ໜ້າທີ່ໃນການກວດສອບໃບອະນຸຍາດ FLEGT ອາດເປັນປະໂຫຍດຖ້າມີຂໍ້ມູນໃໝ່ລ້າສຸດກ່ຽວກັບຜູ້ສົ່ງອອກທີ່ໄດ້ຮັບໃບອະນຸຍາດເພື່ອສະໜອງໃຫ້ຢ່າງສະໝໍ່າສະເໝີ.

ຂໍ້ມູນທີ່ອະທິບາຍສິນຄ້າທີ່ສົ່ງອອກໄປແຕ່ລະຄັ້ງທີ່ລວມຢູ່ໃນໃບອະນຸຍາດ FLEGT ຈະຄືກັນ ບໍ່ວ່າໃບອະນຸຍາດນັ້ນຈະໃຊ້ສິນຄ້າທີ່ສົ່ງໄປເຫຼືຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານ ແລະ ວິທີການໃນການຈັດການກັບການສົ່ງສິນຄ້າ ແລະ ໃບອະນຸຍາດພາຍໃນສະຫະພາບເອີຣົບ ຈະເປັນເຊັ່ນດຽວກັນສຳລັບໃບອະນຸຍາດທັງສອງແບບ.

## 5. ປະຕິບັດການໃນກໍລະນີລະບົບຫຼົ້ມເຫຼວ

ແຕ່ລະຂໍ້ຂອງສັຍຍາ VPA ຈຳເປັນຕ້ອງລວມຂັ້ນຕອນທີ່ຈະປະຕິບັດໃນກໍລະນີທີ່ມີບັນຫາ ໃນລະບົບກັບລະບົບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ. ການຕິດຕາມຂອງໜ່ວຍງານອິດສະຫຼະມີຢູ່ພາຍໃຕ້ສັນຍາ VPA ແຕ່ລະຂໍ້ຈະກວດເປັນໄລຍະໆ ວ່າລະບົບ LAS ກຳລັງປະຕິບັດຢ່າງທີ່ຕັ້ງໃຈໃຫ້ເຮັດວຽກໄວ້ ຫຼືບໍ່ ແລະ ລາຍງານຈຸດອ່ອນ ຫຼື ຄວາມຫຼົ້ມເຫຼວຂອງລະບົບທີ່ກວດພົບໄປຍັງຄະນະກຳມະການຮ່ວມ (JIC). JIC ກໍ່ຈະມີໜ້າທີ່ຮັບຜິດຊອບໃນການສະເໜີ ແລະ ແນະນຳ



ຂັ້ນຕອນແກ້ໄຂຄວາມຫຼົ້ມເຫຼວຕາມທີ່ໄດ້ຮັບລາຍງານມາຈາກການຕິດຕາມຂອງໜ່ວຍງານກວດກາອິດສະຫຼະ.

ໃນກໍລະນີຂອງລະບົບຮັບປະກັນຄວາມຖືກຕາມກົດໝາຍ ເຊິ່ງການກວດສອບຢືນຢັນຄວາມຖືກຕ້ອງໃນປ່າ ແລະ ການຕິດຕາມໄມ້ທ່ອນປະຕິບັດໂດຍ ຫຼື ໃນນາມຂອງລັດຖະບານທີ່ເປັນຫຸ້ນສ່ວນ, ການແກ້ໄຂບັນຫາຈະເປັນຄວາມຮັບຜິດຊອບຂອງໜ່ວຍງານລັດຖະບານ ທີ່ເຮັດວຽກໂດຍກົງຕໍ່ບັນຫານັ້ນ ແລະ ຄວາມຫຼົ້ມເຫຼວທີ່ຈະແກ້ບັນຫາຈະເຮັດໃຫ້ເກີດຄວາມສ່ຽງຕໍ່ການມີຜົນບັງຄັບໃຊ້ໄດ້ຂອງລະບົບການອອກໃບອະນຸຍາດທັງໝົດ.

ໃນກໍລະນີທີ່ລະບົບ LAS ລວມອົງປະກອບທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານເຂົ້າໄວ້ດ້ວຍໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດ ຜ່ານທາງຂະບວນການອະນຸມັດຂອງໜ່ວຍງານ ຈະມີຄວ່ມຮັບຜິດຊອບເບື້ອງຕົ້ນໃນການກວດວ່າການຄຸ້ມຄອງທີ່ອົງປະກອບເຫຼົ່ານັ້ນທີ່ມີໃຫ້ ຍັງໄດ້ຮັບການດູແລຮັກສາໄວ້ເປັນຢ່າງດີຫຼືບໍ່. ຖ້າການກວດສອບເປີດເຜີຍໃຫ້ເຫັນບັນຫາໃນອົງປະກອບໜຶ່ງ, ໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຈະຕ້ອງຕັດສິນໃຈບົນພື້ນຖານຄວາມຮ້າຍແຮງຂອງຄວາມຫຼົ້ມເຫຼວວ່າຈະຕ້ອງປະຕິບັດການແກ້ໄຂຄືແນວໃດ ຫຼື ຖອນການເຫັນດີ ແລະ ຍອມຮັບອົງປະກອບນັ້ນໂດຍທັນທີ.

ຖ້າໜ່ວຍງານທີ່ມີອຳນາດໃນການອອກໃບອະນຸຍາດຖອນການເຫັນດີ ແລະ ຍອມຮັບອົງປະກອບໃດໃນຕ່ອງໂສ້ການສະໜອງ, ການມີຜົນບັງຄັບໃຊ້ຂອງໃບອະນຸຍາດທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານທັງໝົດກໍ່ຈະຕົກຢູ່ໃນຄວາມສ່ຽງ. ດັ່ງນັ້ນ, ໜ່ວຍງານທີ່ມີອຳນາດອອກໃບອະນຸຍາດຈຳເປັນຕ້ອງຕີພິມຂໍ້ມູນ ທີ່ກ່ຽວຂ້ອງກັບການຢຸດຕິຊົ່ວຄາວ ຫຼື ຖອດຖອນການອະນຸມັດເຫັນດີກັບອົງປະກອບການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ. ນອກຈາກນັ້ນ, ຍັງຕ້ອງຢຸດຊົ່ວຄາວການອອກໃບອະນຸຍາດຜູ້ເຂົ້າຮ່ວມໃນຕະຫຼາດທີ່ອາໃສອົງປະກອບຂອງລະບົບ LAS ທີ່ການເຫັນດີ ແລະ ຍອມຮັບຖືກຖອນອອກໄປ.

ຕົວຢ່າງ: ການຖອກນການຮັບຮອງຖານະອົງກອນອອກໃນໃບຮັບຮອງ ທີ່ດຳເນີນການຕາມຂະບວນການທີ່ໄດ້ຮັບການອະນຸມັດໄວ້ຄວນຈະມີຜົນໄປພ້ອມໆກັນ ທັງເປັນການຖອນການຍ້ອມຮັບຂອງໜ່ວຍງານ ທີ່ມີອຳນາດໃນການອອກໃບອະນຸຍາດຕໍ່ອົງການນັ້ນ. ອັນນີ້ຈະກະທົບຕໍ່ໃບຮັບຮອງທີ່ອົງການນັ້ນອອກໄປທັງໝົດເຊັ່ນດຽວກັນກັບການອອກໃບອະນຸຍາດ FLEGT ທີ່ຂຶ້ນຢູ່ກັບໃບຮັບຮອງທີ່ອົງການນັ້ນອອກໃຫ້. ຄວາມຫຼົ້ມເຫຼວໃນການດຳເນີນງານທັງໝົດ ຂອງລະບົບການຮັບຮອງເນື່ອງຈາກຈຸດບົກພ່ອງໃນຂະບວນການຮັບຮອງສະຖານະ ຈະເປັນອັນຕະລາຍຕໍ່ການຢືນຢັນການຮັບປະກັນຄວາມຖືກຕ້ອງຕາມກົດໝາຍ ແລະ ດັ່ງນັ້ນກໍ່ສາມາດຕໍ່ໃບຮັບຮອງທັງໝົດທີ່ໄດ້ອອກໄປຜ່ານລະບົບນັ້ນດ້ວຍ.

ຫາກການຕິດຕາມທີ່ເປັນອິດສະຫຼະກວດພົບບັນຫາໃນອົງປະກອບທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານຂອງລະບົບ LAS ກໍ່ອາດເປັນການບົ່ງຊີ້ຄວາມຫຼົ້ມເຫຼວຂອງຂະບວນການອະນຸມັດເຫັນດີຂອງໜ່ວຍງານ ທີ່ມີອຳນາດໃນການອອກໃບອະນຸຍາດດ້ວຍເຊັ່ນກັນ. ຄວາມຫຼົ້ມເຫຼວດັ່ງກ່າວຈະຕ້ອງໄດ້ຮັບການແກ້ໄຂຢ່າງທັນການ ເພື່ອຮັກສາຄວາມໜ້າເຊື່ອຖືຂອງລະບົບທີ່ມີຜູ້ປະຕິບັດການເປັນຖານທັງໝົດ ໃນປະເທດຄູ່ຮ່ວມສັນຍາໃນຄະນະກຳມະການດຳເນີນງານຮ່ວມ ຈະຮັບຜິດຊອບຕໍ່ການສະເໜີແນວທາງການປະຕິບັດຖ້າອົງປະກອບທີ່ມີຜູ້ເຂົ້າຮ່ວມໃນຕະຫຼາດເປັນຖານຫຼົ້ມເຫຼວທີ່ຈະເຮັດໃຫ້ໄດ້ຕາມຂໍ້ກຳນົດທີ່ໄດ້ຕົກລົງກັນໄວ້ໃນສັນຍາ VPA.



ເອກະສານສະຫຼຸບຫຍໍ້ FLEGT ເຫຼົ່ານີ້ໄດ້ຖືກຈັດພິມຂື້ນໂດຍກຸ່ມຜູ້ຊ່ຽວຊານທີ່ຄະນະກຳມະທິການເອີຣົບຕັ້ງຂຶ້ນ ແລະ ມີຄວາມຕັ້ງໃຈຈະໃຫ້ນຳໄປໃຊ້ໃນການປະຊຸມປຶກສາຫາລືແຜນປະຕິບັດງານ EU FLEGT ຂໍ້ຄວາມໃນເອກະສານສະຫຼຸບສະບັບນີ້ເປັນທາງການຂອງຄະນະກຳມະການ ຫາກມີຄວາມຕັ້ງໃຈທີ່ຈະໃຫ້ຂໍ້ມູນທີ່ເປັນປະໂຫຍດແກ່ປະເທດທີ່ມີສັກກະຍະພາບທີ່ຈະເປັນປະເທດຄູ່ຮ່ວມສັນຍາ FLEGT ແລະ ປະເທດອື່ນໆທີ່ສົນໃຈລິເລີ່ມນີ້ (ມີນາ 2007).

FLEGT